ສຳມະນາສະເໜີຜົນການຄົ້ນຄວ້າຂອງນັກວິຊາການຍີ່ປຸ່ນ







ຮຽບຮຽງໂດຍ

ຄະນະປ່າໄມ້ ມະຫາວິທະຍາໄລແຫ່ງຊາດ

Laos Field Station ຄະນະພູມິພາກສຶກສາອາຊີ - ອາຟຣິກາ **(ASAFAS) /**

ສະຖາບັນຄົ້ນຄວ້າອາຊີອາຄະເນ **(CSEAS)** ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ

ຈັດພິມໂດຍ

ສູນຮ່ວມມືລາວ - ຍີ່ປຸ່ນ ດ້ານຊັບພະຍາກອນມະນຸດ ມະຫາວິທະຍາໄລແຫ່ງຊາດ

ຕຸລາ, 2006

ນະຄອນຫຼວງວຽງຈັນ

ສາລະບານ

ຄຳນຳ ii

ຄຳເຫັນ..... iii

ເຖິງທ່ານຜູ້ອ່ານທັ້ງຫຼາຍ iv

ສຳມະນາຄັ້ງທີ 1 (ຈັດໃນວັນທີ 7 ທັນວາ ປີ 2004)

ບົດບາດຂອງມະຫາວິທະຍາໄລແຫ່ງຊາດ ໃນການສຶກສາຊົນນະບົດ

ຈາກການສຳຫຼວດຜະລິດຕະພັນຂອງແຕ່ລະບ້ານ

Etsuo MUSHIAKE 1

ສຳມະນາຄັ້ງທີ 2 (ຈັດໃນວັນທີ 18 ກຸມພາ ປີ 2005)

ວັດທະນະທຳບອກເລົ່າແລະວຽກຫັດຖະກຳ ທີ່ໄດ້ສືບທອດກັນໃນຊົນເຜົ່າມົ້ງ

Kiyoko YASUI 10

ສຳມະນາຄັ້ງທີ 3 (ຈັດໃນວັນທີ 18 ພຶດສະພາ ປີ 2005)

ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງໄດ້ເກີດຂຶ້ນມາຈາກໃສ ?

<ເສດຖະກິດຂອງລາວໃນສະຕະວັດທີ 16 - 17>

Yoshiyuki MASUHARA 21

ສຳມະນາຄັ້ງທີ 4 (ຈັດໃນວັນທີ 14 ທັນວາ ປີ 2005)

ຄວາມຮູ້ທ້ອງຖິ່ນຄືການຊ່ວຍເຫຼືອເຊິ່ງກັນແລະກັນໃນຊົນນະບົດ

Kayoko YOSHIDA 35

ສຳມະນາຄັ້ງທີ 5 (ຈັດໃນວັນທີ 15 ມີນາ ປີ 2006)

ສຶກສາການປ່ຽນແປງຂອງການນຳໃຊ້ທີ່ດິນແລະການດຳລົງຊີວິດຂອງປະຊາຊົນ

ຢູ່ເຂດພາກເໜືອຂອງລາວ: ກໍລະນີສຶກສາຢູ່ເມືອງສິງ ແຂວງຫຼວງນ້ຳທາ

Yayoi FUJITA 47

ສຳມະນາຄັ້ງທີ 6 (ຈັດໃນວັນທີ 14 ມິຖຸນາ ປີ 2006)

ວິຊາວ່າດ້ວຍການເຄື່ອນໄຫວຂອງພືກສາຊາດໃນເຂດປ່າເຫຼົ່າຂອງການເຮັດໄຮ່

ຢູ່ທາງພາກເໜືອຂອງລາວ: ກໍລະນີສຶກສາຄົ້ນຄວ້າຢູ່ໃນເມືອງຫລາ, ແຂວງອຸດົມໄຊ

Isao HIROTA 60

ຄຳນຳ

ສູນຮ່ວມມືລາວຍີ່ປຸ່ນດ້ານຊັບພະຍາກອນມະນຸດ (ສູນລາວ-ຍີ່ປຸ່ນ) ໄດ້ຮັບການສ້າງຂຶ້ນເພື່ອປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ສຳລັບການສ້າງເສດຖະກິດຕາມກົນໄກການຕະຫຼາດ ແລະ ເພື່ອເປັນການສົ່ງເສີມສາຍພົວພັນອັນໄມຕີຈິດມິດຕະພາບລະຫວ່າງ ປະຊາຊົນລາວ ແລະ ປະຊາຊົນຍີ່ປຸ່ນ. ເພື່ອໃຫ້ບັນລຸສອງຈຸດປະສົງດັ່ງກ່າວ, ສູນລາວ-ຍີ່ປຸ່ນໄດ້ສະໜອງຂໍ້ມູນຂ່າວສານກ່ຽວກັບປະເທດຍີ່ປຸ່ນໂດຍການຮັບໂຮມບັນດາເອກະສານ, ການຈັດການແນະນຳວັດທະນະທຳ ແລະ ງານບຸນສຳຄັນຕ່າງໆຂອງຍີ່ປຸ່ນໃຫ້ແກ່ປະຊາຊົນລາວ. ສູນລາວ-ຍີ່ປຸ່ນ ຍັງໄດ້ສະໜອງຂໍ້ມູນກ່ຽວກັບປະເທດລາວໃຫ້ປະຊາຊົນຍີ່ປຸ່ນໂດຍການສ້າງເວບໄຊຂອງສູນ ແລະ ຈັດການແລກປ່ຽນກິດຈະກຳລະຫວ່າງນັກສຶກສາລາວ ແລະ ນັກສຶກສາຍີ່ປຸ່ນ ແລະ ກິດຈະກຳອື່ນໆ.

ສູນລາວ-ຍີ່ປຸ່ນ ຍັງໄດ້ສົ່ງເສີມສາຍພົວພັນອັນດີງາມລະຫວ່າງ ປະຊາຊົນລາວ ແລະ ປະຊາຊົນຍີ່ປຸ່ນ ໂດຍການຈັດປາຖະກະຖາເຜີຍແຜ່ຜົນງານຄົ້ນຄ້ວາກ່ຽວກັບ ສປປລາວ ຂອງນັກຄົ້ນຄ້ວາຍີ່ປຸ່ນ ພາຍໃຕ້ການຮ່ວມມືຈາກ Laos Field Station ຂອງມະຫາວິທະຍາໄລກຽວໂຕ, ປະເທດຍີ່ປຸ່ນ.

ໃນໄລຍະ ເດືອນທັນວາ ປີ 2004 ເຖິງ ເດືອນ ມີຖຸນາ ປີ 2006 ທີ່ຜ່ານມານີ້ ນັກຄົ້ນຄ້ວາຍີ່ປຸ່ນ 6 ທ່ານ ໄດ້ນຳສະເໜີຜົນງານການຄົ້ນຄ້ວາ ໃນຫົວຂໍ້ຕ່າງໆ ເຊັ່ນ: ບົດຄົ້ນຄ້ວາກ່ຽວກັບກະສິກຳ, ຄວາມເຊື່ອຖື ແລະ ທຳນຽມຂອງຊາວບ້ານ, ສະພາບແວດລ້ອມທຳມະຊາດ ແລະ ອື່ນໆ. ເຂົ້າຮ່ວມຮັບຟັງການນຳສະເໜີແຕ່ລະຄັ້ງ ມີບັນດາຄູອາຈານ, ພະນັກງານ ແລະ ນັກສຶກສາຂອງ ມະຫາວິທະຍາໄລແຫ່ງຊາດ. ເປັນໜ້າປະທັບໃຈຫຼາຍທີ່ນັກຄົ້ນຄ້ວາຍີ່ປຸ່ນໄດ້ມີສ່ວນຮ່ວມໃນການຄົ້ນຄ້ວາກ່ຽວກັບປະເທດລາວໃນຫຼາຍໆຫົວຂໍ້. ຄວາມຈິງແລ້ວນັກຄົ້ນຄ້ວາທັງໝົດໄດ້ນຳສະເໜີບົດຂອງຕົນເປັນພາສາລາວ ເຊິ່ງໄດ້ສະແດງເຖິງຄວາມຮູ້ອັນເລິກເຊິ່ງຂອງເຂົາເຈົ້າກ່ຽວກັບປະເທດລາວ ແລະ ທັງພິສູດໃຫ້ເຫັນວ່າບົດຄົ້ນຄ້ວາດັ່ງກ່າວມີຄຸນນະພາບສູງ.

ສູນລາວ-ຍີ່ປຸ່ນ ມີຄວາມພາກພູມໃຈທີ່ໄດ້ຈັດພິມບົດນຳດັ່ງກ່າວທີ່ໄດ້ນຳສະເໜີທີ່ສູນ ໂດຍນັກຄົ້ນຄ້ວາຍີ່ປຸ່ນ 6 ທ່ານ ພາຍໃຕ້ຫົວຂໍ້: "ສຳມະນາສະເໜີຜົນການຄົ້ນຄ້ວາຂອງນັກວິຊາການຍີ່ປຸ່ນ". ສູນລາວ-ຍີ່ປຸ່ນ ຫວັງຢ່າງຍິ່ງວ່າການຈັດພິມຜົນງານການຄົ້ນຄ້ວາຄັ້ງນີ້ຈະເຮັດໃຫ້ປະຊາຊົນລາວເຂົ້າຫາຂໍ້ມູນໄດ້ຢ່າງກວ້າງຂວາງຂຶ້ນ.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງນັກຄົ້ນຄ້ວາຍີ່ປຸ່ນທັງ 6 ທ່ານ ຕໍ່ຜົນງານການບັນຍາຍທີ່ດີຂອງພວກເຂົາເຈົ້າ ແລະ ຂໍຊົມເຊີຍພະນັກງານຂອງມະຫາວິທະຍາໄລແຫ່ງຊາດທີ່ໃຫ້ຄວາມຮ່ວມມື ແລະ ສົ່ງເສີມການບັນຍາຍ ແລະ ການຈັດພິມປຶ້ມຫົວນີ້ດ້ວຍ.

ຊິນອິຈິ ຊູຊຸກິ
ຜູ້ອຳນວຍການສູນລາວ-ຍີ່ປຸ່ນ (ຝ່າຍຍີ່ປຸ່ນ)

ຕຸລາ 2006

ຄຳເຫັນຂອງຄະນະປ່າໄມ້

ປຶ້ມລວບລວມບົດບັນຍາຍ " ສຳມະນາສະເໜີຜົນການຄົ້ນຄວ້າ ຂອງນັກວິຊາການຍີ່ປຸ່ນ" ປຶ້ມຫົວນີ້ ແມ່ນເປັນການຢັ້ງຢືນເຖິງຜົນງານ ການປະຕິບັດ ການຮ່ວມມື ດ້ານວິຊາການ ລະຫວ່າງ ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ຄະນະພູມິພາກສຶກສາອາຊີ – ອາຟຣິກາ, ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ ແລະສູນລາວຍີ່ປຸ່ນດ້ານຊັບພະຍາກອນມະນຸດ, ມະຫາວິທະຍາໄລແຫ່ງຊາດລາວ ແລະຍັງເປັນປຶ້ມສັງລວມ ຜົນການຄົ້ນຄວ້າວິທະຍາສາດ ທີ່ມີຄວາມໝາຍ ຄວາມສຳຄັນອັນໜຶ່ງ ທີ່ເປັນການຕອບສະໜອງໃຫ້ແກ່ການຮຽນ - ການສອນ ໃນການພັດທະນາຊັບພະຍາກອນມະນຸດທີ່ມີຄວາມຮູ້ຄວາມສາມາດ ເພື່ອອອກຮັບໃຊ້ສັງຄົມ ແລະ ເປັນບົດຮຽນ ໃຫ້ນັກຄົ້ນຄວ້າ ທີ່ໜຸ່ມນ້ອຍ ທີ່ມີຈຸດປະສົງທີ່ຢາກດຳເນີນການຄົ້ນຄວ້າວິໄຈ ກໍລະນີສຶກສາກ່ຽວກັບບັນຫາທີ່ໄດ້ນຳສະເໜີຢູ່ໃນປຶ້ມຫົວນີ້. ຜົນງານດັ່ງກ່າວນີ້ ເກີດຂຶ້ນມາໄດ້ ແມ່ນຍ້ອນຄວາມພະຍາຍາມ ແລະ ການຊອກຮູ້ຂອງນັກຄົ້ນຄວ້າຍີ່ປຸ່ນ ຄື Itsuo MUSHIAKE, Kiyoko YASUI, Yoshiyuki MASUHARA, Kayoko YOSHIDA, Yayoi FUJITA ແລະ Isao HIROTA.

ຂ້າພະເຈົ້າໃນນາມຕາງໜ້າໃຫ້ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ ຂໍຖືໂອກາດນີ້ ສະແດງຄວາມຂອບໃຈຢ່າງສູງມາຍັງນັກວິຊາການຍີ່ປຸ່ນ ທີ່ໄດ້ນຳເອົາຜົນງານການຄົ້ນຄວ້າ ຂອງ ພວກທ່ານອອກມາສະເໜີຕໍ່ສັງຄົມ ແລະກໍ່ຂໍສະແດງຄວາມຂອບໃຈມາຍັງທຸກທ່ານ, ທຸກພາກສ່ວນ ທີ່ໄດ້ໃຫ້ການຮ່ວມມື, ອຳນວຍຄວາມສະດວກ ແລະປະກອບສ່ວນ ເຂົ້າໃນການລວບລວມປຶ້ມສະບັບນີ້ຈົນສຳເລັດຜົນ.

ຫວັງວ່າການຮ່ວມມື ດ້ານວິຊາການ ລະຫວ່າງ ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ຄະນະພູມິພາກສຶກສາອາຊີ – ອາຟຣິກາ, ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ ແລະສູນລາວຍີ່ປຸ່ນດ້ານຊັບພະຍາກອນມະນຸດ, ມະຫາວິທະຍາໄລແຫ່ງຊາດລາວ ຈະໄດ້ຮັບການເພີ່ມພູນຄູນສ້າງຕໍ່ໆໄປ.

ດ້ວຍຄວາມນັບຖືຢ່າງສູງ

ຮຸ່ງເພັດ ຈັນທະວົງ
ຮອງຄະນະບໍດີ ຄະນະປ່າໄມ້
E-mail: houngphet @nuol.edu.la

ເຖິງທ່ານຜູ້ອ່ານທັ້ງຫຼາຍ

ພວກຂ້າພະເຈົ້າມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ແລະຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ມີໂອກາດຮຽບຮຽງປຶ້ມລວມບົດບັນລະຍາຍ "**ສຳມະນາສະເໜີຜົນການຄົ້ນຄວ້າຂອງນັກວິຊາການຍີ່ປຸ່ນ**" ໃນຄັ້ງນີ້. ຂໍຖືໂອກາດນີ້ ພວກຂ້າພະເຈົ້າຈະອະທິບາຍເຖິງຈຸດປະສົງ ແລະຄວາມເປັນມາຂອງການຈັດສຳມະນາດັ່ງກ່າວເສຍກ່ອນ.

ປະຈຸບັນ ນັກຄົ້ນຄວ້າຊາວຍີ່ປຸ່ນຈຳນວນຫຼາຍຄົນ ພວມດຳເນີນໂຄງການສຳຫຼວດ ແລະຄົ້ນຄວ້າທາງດ້ານວິຊາການຕ່າງໆໃນປະເທດລາວ. ແຕ່ໂດຍທົ່ວໄປແລ້ວ ປະຊາຊົນລາວບໍ່ຄ່ອຍຮູ້ຈັກວ່ານັກຄົ້ນຄວ້າເຫຼົ່ານັ້ນ ສົນໃຈເລື້ອງຫຍັງແດ່ໃນລາວ ແລະຄົ້ນຄວ້າແນວໃດແທ້. ໃນການສຳຫຼວດພາກສະໜາມ ຄະນະສຳຫຼວດບາງກຸ່ມໄດ້ຫັນລົງສູ່ພື້ນທີ່ຕາມໝູ່ບ້ານທັ້ງນ້ອຍແລະໃຫຍ່, ເກັບຂໍ້ມູນດ້ວຍຄວາມຟ້າວຟັ່ງ ໃຫ້ໄດ້ຫຼາຍເທົ່າທີ່ເປັນໄປໄດ້ ໃນເວລາທີ່ຈຳກັດທີ່ສຸດ ແລ້ວກໍ່ກັບຄືນໄປ. ດ້ວຍເຫດນັ້ນຈຶ່ງບໍ່ໄດ້ມີ ໂອກາດອະທິບາຍໃຫ້ປະຊາຊົນຮູ້ວ່າ ຕົນເອງມາເພື່ອເຮັດຫຍັງ, ແຕ່ນັກຄົ້ນຄວ້າກໍ່ມີຄວາມຮູ້ສຶກວ່າ ເຂົາເຈົ້າສາມາດເຮັດວຽກໃນຖານະທີ່ເປັນນັກວິຊາການໄດ້ ກໍ່ເນື່ອງຈາກໄດ້ຮັບການຮ່ວມມື ແລະຊ່ວຍເຫຼືອຈາກປະຊາຊົນລາວຢ່າງຫຼວງຫຼາຍ. ເພື່ອຕອບແທນບຸນຄຸນປະຊາຊົນລາວ ບັນດານັກຄົ້ນຄວ້າເຫຼົ່ານັ້ນ ຍິນດີທີ່ຈະນຳສະເໜີ ແລະມອບຜົນງານການຄົ້ນຄວ້າຄືນໃຫ້ແກ່ປະຊາຊົນລາວ. ມີຫຼາຍຄັ້ງ ທີ່ນັກວິຊາການຈາກປະເທດຍີ່ປຸ່ນ ສົນໃຈກັບບາງປະເດັນເປັນພິເສດ, ຊຶ່ງໂດຍທົ່ວໄປປະຊາຊົນລາວອາດຍັງບໍ່ເຫັນ ຄວາມສຳຄັນຂອງປະເດັນເຫຼົ່ານັ້ນເທື່ອ. ແຕ່ເມື່ອຜ່ານການຄົ້ນຄວ້າແລ້ວ ອາດເຮັດໃຫ້ປະຊາຊົນລາວໄດ້ຮັບຄວາມຮູ້ຄວາມປະຫຼາດໃຈກໍ່ເປັນໄປໄດ້. ຖ້າຫາກການສຶກສາກ່ຽວກັບລາວໂດຍປະຊາຊົນຍີ່ປຸ່ນນັ້ນ ສາມາດປະກອບສ່ວນເຮັດໃຫ້ປະຊາຊົນລາວ ຄົ້ນພົບສິ່ງໃໝ່ໆຂອງຕົນເອງໄດ້ຕື່ມແລ້ວ, ຖືວ່າວິທີການນີ້ເປັນການແລກປ່ຽນ ທາງວິຊາການທີ່ດີທີ່ສຸດກໍ່ວ່າໄດ້.

ດັ່ງນັ້ນ ທາງຄະນະປ່າໄມ້, ສູນຮ່ວມມືລາວ-ຍີ່ປຸ່ນດ້ານຊັບພະຍາກອນມະນຸດ ມະຫາວິທະຍາໄລແຫ່ງຊາດ ພ້ອມດ້ວຍ ຫ້ອງການ Laos Field Station ຄະນະພູມິພາກສຶກສາອາຊີ-ອາຟຣິກາ ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ ຊຶ່ງມີຫ້ອງການຢູ່ຄະນະປ່າໄມ້ ມະຫາວິທະຍາໄລແຫ່ງຊາດ ຈຶ່ງໄດ້ຕົກລົງກັນໃນການຈັດສຳມະນາດັ່ງກ່າວ ເພື່ອແລກປ່ຽນຄວາມຮູ້ທາງດ້ານວິຊາການ ແລະສ້າງສາຍສຳພັນມິດຕະພາບ ລະຫວ່າງນັກວິຊາການທັງສອງຝ່າຍ ກໍ່ຄືທັງສອງປະເທດອີກດ້ວຍ. ຕັ້ງແຕ່ການຈັດສຳມະນາຄັ້ງທີ 1 ໃນວັນທີ 7 ທັນວາ ປີ 2004 ມາຈົນເຖິງປະຈຸບັນນີ້ ພວກຂ້າພະເຈົ້າໄດ້ຈັດສຳມະນາດັ່ງກ່າວຂຶ້ນ 6 ຄັ້ງແລ້ວ[1]. ທຸກຄັ້ງ ມີຄູອາຈານແລະນັກສຶກສາຈາກຄະນະຕ່າງໆ ມະຫາວິທະ

---

[1] ໃນການຈັດສຳມະນາຄັ້ງທີ 3 ຊຶ່ງໄດ້ຈັດຂຶ້ນໃນວັນທີ 18 ພຶດສະພາ ປີ 2005 ນັ້ນ **ໂຄງການເສີມສ້າງຄວາມອາດສາມາດດ້ານການສຶກສາຄົ້ນຄວ້າການຄຸ້ມຄອງຊັບພະຍາກອນທຳມະຊາດຂອງຊຸມຊົນ (NUoL, IDRC)** ກໍ່ເຂົ້າມາຮ່ວມເປັນເຈົ້າພາບລວມອີກດ້ວຍ.

ຍາໄລແຫ່ງຊາດ ພ້ອມດ້ວຍປະຊາຊົນຜູ້ທີ່ມີຄວາມສົນໃຈ ໄດ້ເຂົ້າມາຮ່ວມ ປະມານ 60 - 100 ຄົນ. ພາຍຫຼັງການບັນລະຍາຍສິ້ນສຸດລົງແລ້ວ ນັກວິຊາການຍີ່ປຸ່ນ ແລະບັນດາຜູ້ເຂົ້າຮ່ວມໄດ້ຖອດຖອນບົດຮຽນນຳກັນແລະກັນ ໃນບັນຍາກາດເປັນກັນເອງ. ນອກຈາກຄູອາຈານແລ້ວ ນັກສຶກສາຫຼາຍຄົນກໍ່ປະກອບຄວາມຄິດເຫັນ ແລະຖາມເລື້ອງຕ່າງໆ ຊຶ່ງເປັນຕາໜ້າປະທັບໃຈຫຼາຍ. ການສົນທະນາມັກຈະສືບຕໍ່ເລື້ອຍໆ ຈົນເກີນແຜນການຫຼາຍພໍສົມຄວນ. ນັ້ນກໍ່ສະແດງໃຫ້ເຫັນເຖິງຄວາມສົນໃຈອັນສູງຂອງຜູ້ເຂົ້າຮ່ວມຮັບຟັງ ທີ່ມີຕໍ່ການບັນລະຍາຍຂອງນັກວິຊາການເຫຼົ່ານັ້ນ.

ປຶ້ມເຫຼັ້ມນີ້ ເປັນການລວບລວມບົດບັນລະຍາຍຂອງນັກວິຊາການຍີ່ປຸ່ນ 6 ທ່ານ ຊຶ່ງໄດ້ສະເໜີຜົນການຄົ້ນຄວ້າໃນສຳມະນາດັ່ງກ່າວ. ເຖິງວ່າປຶ້ມເຫຼັ້ມນີ້ ຍັງບໍ່ທັນສາມາດຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ຂອງບັນດາທ່ານຜູ້ອ່ານໄດ້ທັງໝົດກໍ່ຕາມ, ແຕ່ກໍ່ຄົງເປັນບົດຮຽນສ່ວນໃດສ່ວນໜຶ່ງໃຫ້ແກ່ບັນດາທ່ານຜູ້ທີ່ມີຄວາມສົນໃຈໃນການຄົ້ນຄວ້າວິໄຈ. ທາງຫ້ອງການ Laos Field Station ຊຶ່ງມີໜ້າທີ່ຮັບຜິດຊອບໃນການຮຽບຮຽງປຶ້ມເຫຼັ້ມນີ້ ກໍ່ໄດ້ໃຊ້ຄວາມພະຍາຍາມຢ່າງສູງ ກວດກາທຸກໆຄຳສັບໃນບົດ ເພື່ອໃຫ້ຖືກຕ້ອງຕາມຫຼັກໄວຍະກອນ ແລະສຳນວນລາວ. ແຕ່ການກວດແກ້ຂອງພວກຂ້າພະເຈົ້າອາດຍັງບໍ່ຄົບຖ້ວນສົມບູນ. ສະນັ້ນ ຫາກວ່າທ່ານຜູ້ອ່ານພົບເຫັນຄວາມບົກພ່ອງປະການໃດ ພວກຂ້າພະເຈົ້າພ້ອມແລ້ວ ທີ່ຈະຮັບເອົາຄຳຕິຊົມຈາກບັນດາທ່ານຜູ້ອ່ານທັງຫຼາຍ ເພື່ອນຳໄປປັບປຸງແກ້ໄຂໃຫ້ສົມບູນຂຶ້ນ.

ທ້າຍສຸດນີ້ ພວກຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈ ນຳສູນຮ່ວມມືລາວ-ຍີ່ປຸ່ນດ້ານຊັບພະຍາກອນມະນຸດ ທີ່ໄດ້ຮັບຜິດຊອບດ້ານສະຖານທີ່ ອຸປະກອນ ແລະຄ່າໃຊ້ຈ່າຍຕ່າງໆ ໃນການຈັດສຳມະນາ ພ້ອມດ້ວຍຄ່າຈັດພິມປຶ້ມເຫຼັ້ມນີ້. ຂໍສະແດງຄວາມຂອບອົກຂອບໃຈນຳຄະນະປ່າໄມ້ ທີ່ໄດ້ອຳນວຍຄວາມສະດວກໃນການກະກຽມຈັດສຳມະນາທຸກຄັ້ງ. ນອກຈາກນີ້ ຍັງຂໍສະແດງຄວາມຂອບອົກຂອບໃຈ ນຳນັກວິຊາການຍີ່ປຸ່ນ 6 ທ່ານ ແລະບັນດາຜູ້ເຂົ້າຮ່ວມທຸກທ່ານ ທີ່ໄດ້ສະຫຼະເວລາອັນມີຄ່າ ເຂົ້າມາຮ່ວມສຳມະນາດັ່ງກ່າວ.

ວຽງຈັນ, ວັນທີ 8 ກັນຍາ ປີ 2006

ເກດສະດິງ ສີລິທອນ
Yoshiyuki MASUHARA
ຫ້ອງການ Laos Field Station
ຄະນະພູມິພາກສຶກສາອາຊີ-ອາຟຣິກາ
ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ

ບົດບາດຂອງມະຫາວິທະຍາໄລແຫ່ງຊາດໃນການສຶກສາຊົນນະບົດ
ຈາກການສຳຫຼວດຜະລິດຕະພັນຂອງແຕ່ລະບ້ານ

Etsuo MUSHIAKE
ນັກຄົ້ນຄວ້າ, ມະຫາວິທະຍາໄລກຸງໂຕ

ເທື່ອນີ້ຂໍສະເໜີການເຄື່ອນໄຫວເກັບກຳຂໍ້ມູນ ຜະລິດຕະພັນທີ່ເປັນເອກະລັກຂອງແຕ່ລະບ້ານ, ການສຳຫຼວດໃນເທື່ອນີ້ ແມ່ນໄດ້ປະຕິບັດພາຍໃຕ້ໂຄງການ ສະໜັບສະໜູນນະໂຍບາຍເສດຖະກິດ ມະຫາພາກເພື່ອການພັດທະນາເສດຖະກິດສັງຄົມໃນ ສປປ ລາວ. ຢູ່ໃນໂຄງການມີຫຼາຍຂະແໜງ ການ ແລະທີມງານພວກຂ້າພະເຈົ້າແມ່ນຂຶ້ນກັບທີມງານກະສິກຳແລະພັດທະນາຊົນນະບົດ.

ປະຈຸບັນນີ້ ລັດຖະບານລາວ ຢາກປະຕິບັດໂຄງການໜຶ່ງບ້ານໜຶ່ງຜະລິດຕະພັນ (ໜຶ່ງເມືອງ ໜຶ່ງຜະລິດຕະພັນ) ເຊິ່ງຢູ່ປະເທດໄທໄດ້ປະຕິບັດແລ້ວ. ໂຄງການໜຶ່ງບ້ານໜຶ່ງຜະລິດຕະພັນ ມີຕົ້ນ ກຳເນີດມາຈາກແຂວງ ໂອອິຕະ (Oita) ປະເທດຍີ່ປຸ່ນ, ປະຈຸບັນລັດຖະບານລາວ ຢາກເຮັດໂຄງການ ໜຶ່ງບ້ານໜຶ່ງຜະລິດຕະພັນ ແຕ່ວ່າ ສຳຫຼັບປະເທດລາວ ຍັງບໍ່ທັນມີຂໍ້ມູນຜະລິດຕະພັນພື້ນບ້ານຕົວ ຢ່າງຢູ່ໃນປະເທດລາວເຮົາມີຜະລິດຕະພັນແນວໃດ ແລະມີຢູ່ໃສ, ຜ່ານມາບໍ່ມີຂໍ້ມູນລະອຽດແບບນີ້ ເພາະສະນັ້ນ ພວກຂ້າພະເຈົ້າຈຶ່ງລົງໄປເກັບຂໍ້ມູນຢູ່ໃນແຕ່ລະທ້ອງຖິ່ນ.

ຜະລິດຕະພັນແຕ່ລະບ້ານແມ່ນຜະລິດຂຶ້ນຕາມຜູ້ສັ່ງ ຢາກໄດ້ຊີ້ງ, ຢາກໄດ້ເຂົ້າ, ຢາກໄດ້ໝາກ ງ່າຜູ້ຜະລິດກໍ່ແມ່ນຜະລິດຕາມຜູ້ສັ່ງເທົ່ານັ້ນ. ເລື່ອງກະສິກຳ - ປ່າໄມ້, ເລື່ອງປຸງແຕ່ງ, ເລື່ອງທ່ອງທ່ຽວ, ເລື່ອງວັດທະນະທຳ ປະຫວັດສາດລາວ ລ້ວນແຕ່ເປັນຜະລິດຕະພັນພິເສດ ກ່ຽວກັບປະເທດລາວ, ກ່ຽວ ກັບການເຜີຍແຜ່ຜະລິດຕະພັນຕ່າງໆ ຂອງລາວ ແມ່ນມີຮູບພາບຈຳນວນໜຶ່ງເທົ່ານັ້ນ, ແຕ່ວ່າປຶ້ມແນະ ນຳກ່ຽວກັບຜະລິດຕະພັນຕ່າງໆຢູ່ໃນປະເທດລາວແມ່ນຍັງບໍ່ທັນມີ. ຢູ່ປະເທດຍີ່ປຸ່ນ ໄດ້ເຮັດປຶ້ມຜະລິດ ຕະພັນແຕ່ລະຊະນິດມີຍີ່ຫໍ້ຕາມສະຖານທີ່ຜະລິດໝົດແລ້ວ.



ທ່ານ Etsuo MUSHIAKE

ຕົວຢ່າງຢູ່ຊຳເໜືອ ມີຜະລິດຕະພັນທີ່ມີຊື່ສຽງຫຼາຍໆ ຢ່າງເຊັ່ນ: ສົ້ນໝີ່ ສົ້ນມຸກແສ່ວ ແຕ່ຍ້ອນຄົນຊຳເໜືອ ໄດ້ໄປຢູ່ບ່ອນອື່ນໆ ເຂົາເຈົ້າໄດ້ຕ່ຳສົ້ນນັ້ນ ຢູ່ບ່ອນໃດ ກໍ່ມີ ຢູ່ວຽງຈັນກໍ່ມີ ແລະບ່ອນອື່ນໆ. ດັ່ງນັ້ນ ເຮັດການ ສຳຫຼວດ ຫຼືການຈັດປະເພດຜະລິດຕະພັນແມ່ນພົບ

ທີມງານພວກຂ້າພະເຈົ້າໄດ້ເລີ່ມລົງສຳຫຼວດເດືອນ 2 ປີ 2004 ມາຮອດດຽວນີ້ກໍ່ໄດ້ 9 ເດືອນ 10 ເດືອນແລ້ວ, ເລີ່ມຕົ້ນແມ່ນເມືອງຈຳພອນ ແຂວງສະຫວັນນະເຂດ, ເມືອງນ້ຳບາກ ແຂວງຫຼວງພະບາງ ແລະສຸດທ້າຍແມ່ນ ເມືອງສາມັກຄີໄຊ ແລະເມືອງຊານໄຊ ແຂວງອັດຕະປື. ສຳຫຼັບເມືອງຈຳພອນ ແລະເມືອງນ້ຳບາກ ແມ່ນຮ່ວມກັບນັກສຶກສາຢູ່ຄະນະກະເສດນາບົງ.

ການລົງເກັບກຳຂໍ້ມູນເພື່ອມາຄົ້ນຄວ້າແມ່ນມີຈຸດພິເສດແນວຫນຶ່ງ ບໍ່ແມ່ນໃຜກໍ່ເຮັດໄດ້ໝົດ.

1. ຜູ້ເກັບກຳຂໍ້ມູນຕ້ອງຮູ້ຈັກ ແລະເຂົ້າໃຈຮີດຄອງປະເພນີແຕ່ລະຊົນເຜົ່າ, ເພາະລາວສູງ, ລາວເທິງ ລາວລຸ່ມຈະມີຈຸດພິເສດຕ່າງກັນ.
2. ການເກັບກຳຂໍ້ມູນກ່ຽວກັບຜະລິດຕະພັນ ຕ້ອງຮູ້ຄວາມຕ້ອງການຂອງຕະຫຼາດພາຍໃນ ສຳຫຼັບຄົນລາວ, ຄົນຕ່າງປະເທດ ແລະຕະຫຼາດຕ່າງປະເທດ, ສຳຫຼັບຄົນລາວທີ່ຢູ່ຕ່າງປະເທດ ແລະຄົນຕ່າງປະເທດເອງ.
3. ຫຼັງສຳພາດແລ້ວ ເມື່ອເຂົ້າໄປແຕ່ລະບ້ານ ຕ້ອງຮູ້ສັງເກດເຄື່ອງຫັດຖະກຳຕ່າງໆ, ພື້ນທີ່. ເພາະສະນັ້ນ ຜູ້ຈະເຮັດວຽກນີ້ ຈະຕ້ອງມີເວລາ ແລະມີສຸຂະພາບແຂງແຮງ. ນອກຈາກນັ້ນແລ້ວ ຍັງຕ້ອງດຸໝັ່ນຈິດໃຫ້ໄດ້ຫຼາຍ ເພາະນອກຈາກຈຸດປະສົງຕົ້ນຕໍແລ້ວ ຍັງມີອັນອື່ນໆ ອີກຫຼາຍຢ່າງ, ສະນັ້ນ ຕ້ອງອາໄສການບັນທຶກເປັນສຳຄັນ. ວຽກງານນີ້ທຳອິດ ຂ້າພະເຈົ້າເຮັດຮ່ວມກັບພະນັກງານຢູ່ແຜນການແຫ່ງລັດ ແຕ່ເວລາປະຕິບັດວຽກໄປໄດ້ໄລຍະຫນຶ່ງແລ້ວ ຄາວຽກຫ້ອງການຫຼາຍໂພດເລີຍເຮັດບໍ່ໄດ້.

ຜ່ານມານີ້ ພວກຂ້າພະເຈົ້າໄດ້ລົງໄປ 330 ໝູ່ບ້ານແລ້ວໃນ 4 ແຂວງຄື: ແຂວງວຽງຈັນ, ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ ແລະແຂວງອັດຕະປື. ແຕ່ເດືອນ 5 ຫາເດືອນ 7 ພວກຂ້າພະເຈົ້າຮ່ວມກັບນັກສຶກສາ ຂອງຄະນະກະເສດນາບົງ ເພື່ອຂຽນປິດປີສຸດທ້າຍ ໄດ້ຂຶ້ນໄປເມືອງນ້ຳບາກ, ໄດ້ໄປ 90 ບ້ານ ແລະເມືອງຈຳພອນ ໄປ 170 ບ້ານ ຂ້າພະເຈົ້າຄິດວ່າ ນັກສຶກສາຄືຈະບໍ່ເຄີຍໄດ້ໄປມາກ່ອນ.




ສຳພາດກັບຊາວບ້ານ



ຢູ່ເຂດພູດອຍຕ້ອງຍ່າງຕະຫຼອດ

ວິທີທຳອິດແມ່ນ ສຳພາດພະນັກງານເມືອງ, (ພະນັກງານກະສິກຳ - ປ່າໄມ້, ພະນັກງານທ່ອງທ່ຽວ, ບາງຄັ້ງ ພະນັກງານອຸດສາຫະກຳ - ຫັດຖະກຳ) ເພື່ອໃຫ້ຮູ້ຜະລິດຕະພັນ ແລະສະພາບການທົ່ວໄປຂອງທຸກໆ ບ້ານໃນເມືອງນັ້ນ. ຫຼັງຈາກນັ້ນ ກໍ່ໄປແຕ່ລະບ້ານ ສຳພາດກ່ຽວກັບສະພາບຂອງບ້ານ ແລະສຸດທ້າຍກໍ່ຖ່າຍຮູບຜະລິດຕະພັນໄວ້ມີຜະລິດຕະພັນຫຍັງແດ່, ແຕ່ກໍ່ພົບຂໍ້ຫຍຸ້ງຍາກໃນການຖ່າຍຮູບຜະລິດຕະພັນຕ່າງໆ ໃຫ້ຄົບ ເພາະວ່າໄທບ້ານຈະຜະລິດແລ້ວຂາຍເລີຍ ມີຜະລິດຕະພັນເຫຼືອ ໄວ້ແມ່ນມີຈຳນວນໜ້ອຍ. ເວລາພວກຂ້າພະເຈົ້າລົງໄປເກັບກຳຂໍ້ມູນນັ້ນ ພັດແມ່ນຍາມຝົນ. ປະຊາຊົນໄປເຮັດໄຮ່, ເຮັດນາໝົດ ເກືອບວ່າຈະບໍ່ເຫັນກິດຈະກຳຂອງຊາວບ້ານເລີຍ.

ຫຼາຍຄົນຄົງຈະຮູ້ກ່ຽວກັບເມືອງນ້ຳບາກ ແມ່ນຕັ້ງຢູ່ພາກເໜືອຂອງປະເທດລາວ ທາງເໜືອຂອງແຂວງຫຼວງພະບາງ. ປະຈຸບັນມີ 101 ບ້ານ ຕາມສະຖິຕິ ແຕ່ຄວາມຈິງແລ້ວ ມີປະມານ 140 ບ້ານ ເພາະຫຼາຍບ້ານມີການປ່ຽນແປງຢູ່ເລື້ອຍ ບ້ານມີເຮືອນໜ້ອຍຫຼັງກໍ່ຈະໂຮມເຂົ້າກັນ ຫຼືມີການຍ້າຍບ່ອນບ້ານ, ບ້ານທີ່ມີເສັ້ນທາງໄປຮອດມີປະມານ 50 ບ້ານ ນອກຈາກນັ້ນ ແມ່ນຍ່າງ ຫຼືຂີ່ເຮືອໄປ. ໃນເມືອງນ້ຳບາກ ມີຫຼາຍຊົນເຜົ່າເຊັ່ນ: ມີລາວສູງ 15% ລາວເທິງຂະມຸ 65% ລາວລຸ່ມ, ຜູ້ໄທ, ໄທລື້, ໄທດຳ, ໄທແດງ 20%. ສະພາບບ້ານລາວສູງຕັ້ງຢູ່ຈອມພູ ແຕ່ດຽວນີ້ສ່ວນຫຼາຍຍ້າຍລົງມາແຖບທົ່ງພຽງ ຕາມນະໂຍບາຍຂອງລັດຖະບານ. ອາຊີບເຮັດໄຮ່ ບ້ານລາວເທິງຕັ້ງຢູ່ເທິງພູ ແຕ່ດຽວນີ້ກໍ່ຍ້າຍລົງມາຢູ່ທົ່ງພຽງ. ອາຊີບເຮັດໄຮ່ ຫາເຄື່ອງປ່າຂອງດົງ. ສ່ວນບ້ານລາວລຸ່ມແມ່ນຕັ້ງຢູ່ແຄມນ້ຳ, ສະນັ້ນ ເວລາໄປເກັບກຳຂໍ້ມູນແມ່ນໄດ້ຂີ່ເຮືອ ຫຼືຍ່າງຂຶ້ນພູຫຼາຍຊົ່ວໂມງ. ເວລາພວກຂ້າພະເຈົ້າໄປເອົາຂໍ້ມູນ ພັດແມ່ນຍາມຝົນ ຍ່າງຂຶ້ນພູແມ່ນມື່ນພະລາດຫຼາຍໆຄັ້ງ ແລະຫຼົງທາງເທື່ອຫນຶ່ງ 4 - 5 ຊົ່ວໂມງກັບໄປກັບມາ, ມີນັກສຶກສາ ທ້າວພະໄທ ທ້າວ ບຸນລຳ ໄປເກັບກຳຂໍ້ມູນ ຍ້ອນຍ່າງຫຼາຍໂພດ ເປັນໄຂ້ໄດ້ມານອນໃສ່ນ້ຳເກືອຢູ່ຫຼວງພະບາງເປັນອາທິດຈຶ່ງເຊົາ.



ນັກສຳຫຼວດໃສ່ນ້ຳເກືອຍ້ອນຍ່າງຫຼາຍໂພດ.



ຕະຫຼາດນັດບ້ານນ້ຳຖ້ອມ

ລະບົບການແລກປ່ຽນຊື້ຂາຍ ຢູ່ບ້ານລາວເທິງມີຕະຫຼາດນັດແຕ່ກ່ອນ, ແຕ່ດຽວນີ້ກໍ່ມີ ແຕ່ລະບ້ານແມ່ນນັດໝາຍກັນເອງ ຕະຫຼາດນັດມີ 10 ມື້ ເທື່ອຫນຶ່ງ ຄື: ບ້ານ ກ ເອົາໝາກໆງາມາ, ບ້ານ ຂ ເອົາເກືອມາ, ບ້ານ ຄ ເອົາເຂົ້າມາ, ບ້ານ ງ ເອົາຢາສູບມາ, ແລ້ວຮອດມື້ນັດໝາຍ ກໍ່ເອົາມາແລກປ່ຽນກັນ ເພາະແຕ່ລະບ້ານມີຜົນຜະລິດໄດ້ໜ້ອຍຫຼາຍຕ່າງກັນ. ມີບາງອັນເຫຼືອ ແຕ່ບາງອັນບໍ່ພໍ. ຢູ່ເມືອງນ້ຳບາກ ຕະຫຼາດນັດໃຫຍ່ກວ່າໝູ່ແມ່ນ ຕະຫຼາດນັດບ້ານນ້ຳຖ້ອມ. ດຽວນີ້ທາງເມືອງໄດ້ຈັດເປັນຜຽນໃຫ້ເຮັດຕະຫຼາດນັດໝູນວຽນ ຄືເທື່ອນີ້ ແມ່ນກຸ່ມໝູ່ບ້ານນີ້ ເທື່ອໃໝ່ ກໍ່ແມ່ນກຸ່ມໝູ່ບ້ານອື່ນ ຕໍ່ໆໄປ. ເຮັດແນວນີ້ເຮັດໃຫ້ແມ່ຄ້າ ຜູ້ມາຊື້ສະດວກຊື້ຫຼາຍຂຶ້ນ ແລະຜູ້ຂາຍກໍ່ຈະໄດ້ຂາຍຜະລິດຕະພັນຫຼາຍກວ່າເກົ່າ, ສ່ວນຫຼາຍຜູ້ມາຊື້ແມ່ນແມ່ຄ້າມາແຕ່ບ່ອນອື່ນ ມາແຕ່ວຽງຈັນກໍ່ມີ ແລະບ່ອນອື່ນໆ. ສ່ວນຫຼາຍແມ່ນຜະລິດຕະພັນແບບເດີມ ຜະລິດຕະພັນໃໝ່ແລະພິເສດບໍ່ຄ່ອຍມີ.

ຈຸດພິເສດບ້ານຂະມຸແມ່ນຈັກສານເກ່ງເຊັ່ນ: ຕິບເຂົ້າ, ພາເຂົ້າ, ກະຕ່າ ແລະອື່ນໆ. ຈຸດພິເສດຜະລິດຕະພັນຢູ່ເມືອງນ້ຳບາກ ແຕ່ລະບ້ານອັນໃດກໍ່ມີໝົດ ແຕ່ບໍ່ຫຼາຍພໍເປັນສິນຄ້າ, ບໍ່ຄືຢູ່ສະຫວັນນະເຂດ, ຫຼືຢູ່ອັດຕະປື ບ້ານນີ້ມີແຕ່ສານຕິບເຂົ້າ, ບ້ານນີ້ມີແຕ່ຕົ້ມເຫຼົ້າ, ນ້ຳເຜິ້ງ ຈະບໍ່ເປັນຄືແນວນັ້ນ. ດຽວນີ້ ຍັງຄິດຮອດເຫຼົ້າແຊບ ຢູ່ເມືອງນ້ຳບາກຢູ່ ຕາມຖາມນັກຮຽນວ່າ ເຫຼົ້ານີ້ແຊບຫຼາຍ ຖ້າສົມທຽບເຫຼົ້າທີ່ເຄີຍກິນຜ່ານມາ.



ສານຕິບເຂົ້າ



ຖົງປຸງຂອງເຜົ່າຂະມຸ

ຫຼັງຈາກພວກຂ້າພະເຈົ້າໄດ້ລົງເກັບກຳຂໍ້ມູນໝົດແລ້ວ ແລະໄດ້ຈັດເປັນປະເພດຜະລິດຕະພັນຂອງບ້ານ, ຂອງຊົນເຜົ່າ, ຂອງເມືອງ ເຊັ່ນ: ບ້ານຕົ້ມເຫຼົ້າແຊບ ບ້ານຫ້ວຍຍາງ, ບ້ານສານຕິບເຂົ້າງາມ, ບ້ານລ້ຽງເຜິ້ງ ບ້ານດວນໃຕ້ ແລະອື່ນໆ. ບາງຜະລິດຕະພັນທີ່ຄວນຟື້ນຟູຄື: ໄຫລີ້ຕ່ຳແພຝ້າຍ, ໄຫດຳ ໄຫແດງຕ່ຳແພໄໝ, ຂະມຸຈັກສານເກ່ງ, ເຮັດຖົງປຸງ ຈຸດພິເສດຂອງຖົງປຸງແມ່ນໜຽວໜັ້ນ ແລະທົນ

ທານ. ຄົນຍີ່ປຸ່ນແມ່ນສົນໃຈຖົ່ງປຸງດ ຢາກໄດ້ເອົາໄປເຮັດ ສາຍແອວຊຸດກິໂມະໂນະ ແລະເຮັດຖົ່ງໄວ້ໃສ່ຂອງໜັກໆ. ລາວສູງເຮັດຖົ່ງປ່ານ, ປັກແສ່ວເກ່ງ, ຕີເຫຼັກເກ່ງ ແລະມີຄຸນນະພາບດີ. ຢູ່ເມືອງນ້ຳບາກ ຍັງມີກາເຟພັນອາລາບີກາ ທີ່ຈະເປັນຜະລິດຕະພັນ ຄວນຈະຟື້ນຟູໄດ້ ດຽວນີ້ຕະຫຼາດໂລກກຳລັງນິຍົມ. ແຕ່ລາວເຮົາໄດ້ເຊົາປູກມາໄດ້ 4 - 5 ປີແລ້ວ.

ສຳຫຼັບຜະລິດຕະພັນຂັ້ນເມືອງ ແມ່ນໝາກກ້ຽງ, ໄຄແຜ່ນ, ໝາກກ້ຽງນ້ຳບາກ ປູກຕາມແຄມນ້ຳແບບທຳມະຊາດ ໄດ້ສົ່ງໄປຂາຍຫຼາຍບ່ອນ ຈົນຮອດ ວຽງຈັນ. ແຕ່ການຂາຍໝາກກ້ຽງແມ່ນຕາມນ້ຳໜັກ ຂາຍເປັນກິໂລ ໃນຂັ້ນຕໍ່ໄປຄວນແຍກປະເພດຄື: ປະເພດດີ ຄວນຂາຍໃນລາຄາໜຶ່ງ ແລະ ປະເພດອື່ນໆ. ກຸ້ງນ້ຳບາກແມ່ນແຊບຫຼາຍ ການຫາກຸ້ງແມ່ນ ສ້າງລາຍຮັບໄດ້ດີ, ສະນັ້ນ ໃຜໆກໍ່ຢາກເຮັດ ບ້ານໄດ້ຈັດສັນໃຫ້ແຕ່ລະປີມີ 10 ຄອບຄົວຫາກຸ້ງ ແລະ ປ່ຽນຜຽນກັນ. ໝາກແຕ໋ງ, ໝາກເລັ່ນ ຂອງລາວສູງກໍ່ດັ່ງ, ໂຕດ້ວງໄມ້, ໂຕແມງກໍ່ເປັນສິນຄ້າ.



ກຸ້ງນ້ຳບາກ



ລຳຕັ໋ງຫວາຍ

ເລື່ອງວັດທະນະທຳ, ການຂັບລຳ ກໍ່ມີຫຼາຍ ມີຂັບຂອງເຜົ່າລື້. ພວກຂ້າພະເຈົ້າໄດ້ໄປຫາເຜົ່າ ຂະມຸ ຢູ່ບ້ານຕາແວ ຕາມທີ່ໄດ້ເຫັນການເຮັດວຽກຕ່າງໆ ສ່ວນຫຼາຍເຫັນແຕ່ແມ່ຍິງ.

ເມືອງຈຳພອນແຂວງສະຫວັນນະເຂດ ໄກຈາກເທດສະບານ 50 ກິໂລແມັດ ໃກ້ເມືອງຄັນທະບູລີ ພື້ນທີ່ແມ່ນເປັນທົ່ງພຽງ, ມີນ້ຳຖ້ວມທຸກປີ, ມີຊົນລະປະທານຂະໜາດໃຫຍ່, ມີ 170 ບ້ານ. ຄົນສ່ວນຫຼາຍແມ່ນລາວລຸ່ມ 85%, ລາວເທິງ 15% ລາວສູງແມ່ນເກືອບບໍ່ມີ. ແຕ່ວ່າລາວລຸ່ມອາດຈະບໍ່ຮອດ 85% ເພາະວ່າ ແຕ່ກ່ອນເປັນລາວເທິງແລ້ວ ປ່ຽນເປັນລາວລຸ່ມກໍ່ມີ. ໃນເມືອງຈຳພອນ ປະເພດຂອງບ້ານເປັນບ້ານໂຄກ ບ່ອນຊົນເຜົ່າລາວເທິງອາໄສຢູ່ແຕ່ເກົ່າ ເຮັດໄຮ່ ແຕ່ດຽວນີ້ ເຮັດນາ ແລະເກັບເຄື່ອງປ່າຂອງດົງມາຂາຍ, ບ້ານທົ່ງ ອ້ອມບ້ານມີແຕ່ທົ່ງນາ, ບ້ານເຊ ຕັ້ງຢູ່ແຄມນ້ຳ, ປະຊາຊົນເຮັດນາ ຫາປາ ປູກຜັກ. ການເຮັດນາບາງປີໄດ້ເຂົ້າຫຼາຍ ແລະບາງປີກໍ່ບໍ່ໄດ້.


ລະບົບການຊື້ຂາຍຂອງແຂວງສະຫວັນນະເຂດ ມີຕະຫຼາດຖາວອນ ຢູ່ສະຫວັນນະເຂດ ເຊໂນ, ຫຼັກ 35, 26, ແກ້ງກອກ ມີຕະຫຼາດເຊົ້າ, ຕະຫຼາດແລງ. ນອກຈາກນັ້ນ ມີຕະຫຼາດນັດໝູນວຽນອີກ, ມີຕະຫຼາດດົງ ຕາມເສັ້ນທາງເລກທີ 13 ເວລາກະຊວງ, ເມືອງລົງເອົາຂໍ້ມູນກ່ຽວກັບເສດຖະກິດ ຖາມໄຫບ້ານແຕ່ລາຍໄດ້ ແລະລາຍຈ່າຍ ຍັງບໍ່ທັນຄິດເຖິງການແລກປ່ຽນຜະລິດຕະພັນ, ຈົ່ງຕີລາຄາວ່າຄອບຄົວທຸກຍາກມີເທົ່ານີ້ຄອບຄົວ ອີງຕາມລາຍໄດ້ເທົ່ານັ້ນ, ແຕ່ຕົວຈິງແລ້ວໃນຄອບຄົວທີ່ທຸກຍາກອັນໃດກໍ່ມີໝົດ ແລະເອົາເງິນມາແຕ່ໃສຊື້ ແລະເວົ້າວ່າເຂົາລາຍໆນຂີ້ຕົວະ. ຕາມຈິດຕະສາດແລ້ວຄົນເຮົາຄິດວ່າຕະຫຼາດດົງຄືຈະມີເຄື່ອງມາຈາກປ່າດົງ ແລະແມ່ນເຄື່ອງສົດແທ້ໆ. ທຳອິດສິນຄ້າກໍ່ແມ່ນສົດແທ້ ແຕ່ຕໍ່ມາ ສິນຄ້າເອົາມາຈາກຫຼາຍບ່ອນ, ເອົາມາແຕ່ຫຼັກ 35 ເອົາມາແຕ່ໄທ, ຫວຽດນາມ ເຮັດໃຫ້ເຄື່ອງທຳມະຊາດຫຼຸດລົງ. ໄດ້ 4 - 5 ປີມານີ້ແລ້ວ ສະພາບໄດ້ປ່ຽນໄປ ອາດເປັນຍ້ອນສະພາບທຳມະຊາດປ່ຽນໄປ, ຄົນກໍ່ຫຼາຍຂຶ້ນ. ຕະຫຼາດສົດແນວນີ້ ຢູ່ຍີ່ປຸ່ນກໍ່ມີຊື່ຍີ່ປຸ່ນວ່າ “ມີຈິໂນະເອະກິ”.

ຈຸດພິເສດຂອງຜະລິດຕະພັນເມືອງຈຳພອນ ແຕ່ລະບ້ານມີຜະລິດຕະພັນເປັນຂອງຕົນເອງ ນອກຈາກເຮັດນາປີ ແລ້ວຍັງເຮັດນາແຊງ ເຮັດຝາຍຮັກສານ້ຳໄວ້ໄດ້ຕະຫຼອດປີ ມີກົກຝີ, ກົກເຕັຍ ຫຼາຍຍ້ອນມີນ້ຳຕະຫຼອດປີ ບ້ານໃດກໍ່ຕ່ຳສາດຝີ, ສາດເຕັຍ ມີເຕັຍດົງ ແລະເຕັຍແຄມນ້ຳ, ເວລາຕ່ຳສາດໄດ້ຫຼາຍແລ້ວ ກໍ່ເອົາໃສ່ລົດອີ່ແຕນໄປເລາະຂາຍ. ຄົນຍີ່ປຸ່ນໄດ້ຊື້ສາດ 700 ຜືນ ໄປປະເທດຍີ່ປຸ່ນມອບໃຫ້ໂຮງໝໍ.

ເກືອຂີ້ທາຂອງເມືອງຈຳພອນແຊບ ເພາະເກືອຂີ້ທາມີຈຸດພິເສດ ເວລາເອົາມາເຮັດປາແດກປາບໍ່ເປື່ອຍ ເອົາມາຄັ້ນສົ້ມປາໂດກໍ່ແຊບ ຊົ້ນປາບໍ່ແຫຼວ. ຂ້າພະເຈົ້າໄດ້ສະເໜີເກືອຂີ້ທາຢູ່ກອງປະຊຸມສຳມະນາ ຄົນຍີ່ປຸ່ນສົນໃຈຫຼາຍ. ແຕ່ກໍ່ບໍ່ທັນມີໃຜຮູ້ວ່າໃນເກືອຂີ້ທານັ້ນມີທາດຫຍັງແດ່. ຂ້າພະເຈົ້າໄດ້ສົ່ງເກືອຂີ້ທາໄປປະເທດຍີ່ປຸ່ນ ໃຫ້ໝູ່ຄົ້ນຄວ້າໃຫ້, ແຕ່ມາຮອດປະຈຸບັນຍັງບໍ່ທັນໄດ້ ວິເຄາະເທື່ອ ເພາະວ່າຄ່າວິເຄາະແມ່ນ 400 ດອນລາ ຕໍ່ຕົວຢ່າງ ແພງຫຼາຍ. ແລະໜ້າເປັນຫ່ວງບັນຫາຫນຶ່ງອີກຄື ດຽວນີ້ປະຊາຊົນເຮັດນາແຊງເຂົາເຈົ້າໃສ່ປຸ໋ຍເຄມີ, ສົດຢາຂ້າແມງໄມ້ ສະນັ້ນ ມັນອາດຈະມີສານເຄມີຕົກຄ້າງຢູ່ນຳເກືອກໍ່ເປັນໄດ້. ນອກຈາກນັ້ນ ຍັງມີປາທຳມະຊາດ ປະຊາຊົນຫາໄດ້ຫຼາຍເຮັດປາແດກ ແລະສົ່ງຂາຍຮອດຕະຫຼາດສະຫວັນນະເຂດ. ຜັກສະລັດ, ໝາກເຜັດ, ຍອດຫວາຍ ກໍ່ປູກຫຼາຍ ຈົນຕັ້ງຊື່ບ້ານວ່າບ້ານຜັກສະລັດ, ບ້ານໝາກເພັດ. ເລື່ອງຍອດຫວາຍ ມີແມ່ເຖົ້າຫນຶ່ງເວົ້າວ່າ ມີພີ່ນ້ອງຄົນລາວຢູ່ອາເມລິກາ ມາຢາມບ້ານ ຢາກກິນຍອດຫວາຍ ເວລາກັບເມືອຢາກໄດ້ຍອດຫວາຍເມືອນຳ ແລ້ວແມ່ເຖົ້າລາວຄິດອອກເລີຍເອົາກົກຫວາຍປ່າມາປູກ ດຽວນີ້ ລາວປູກກົກຫວາຍ ໄດ້ 30 ໄລ່. ບ້ານທີ່ມີນ້ຳແຊບ, ດຽວນີ້ໄດ້ເຮັດເປັນນ້ຳດື່ມ ກາດອກຈຳປາ ໃສ່ກວດ ແລະໃສ່ຕຸກຂາຍ. ມີບໍ່ຫີນກາວ ມີເທົ່າໃດແມ່ນສົ່ງໄປຫວຽດນາມໝົດ ແລະຫອຍໂຄ່ງ ຫວຽດນາມເອົາໄປເກືອເປັດ.

ຜ້າແພຕ່າງໆຢູ່ເມືອງຈຳພອນ ຕ່ຳສ່ວນຫຼາຍແມ່ນແພຝ້າຍ ສ່ວນຜ້າໄໝແມ່ນເກືອບບໍ່ມີ ຍ້ອນວ່າປະຊາຊົນເຮັດນາແຊງໃສ່ເຄມີ ເຮັດໃຫ້ໂຕມ້ອນຕາຍ, ເພາະສະນັ້ນ ການຕ່ຳຜ້າໄໝ ຈຶ່ງຫາຍາກ.






ຜ້າຝ້າຍແລະຜ້າໄໝ (ເທິງ)
ເກືອຂີ້ທາ,ເມືອງຈຳພອນ (ຊ້າຍ)

ເວົ້າເລື່ອງຝ້າຍລາວ ຍີ່ປຸ່ນສົນໃຈ ເພາະວ່າຝ້າຍພື້ນເມືອງ ເວລາເຮັດເປັນເຄື່ອງນຸ່ງແລ້ວ ນຸ່ງຍາມໜາວ ຈະອຸ່ນ ແລະນຸ່ງຍາມຮ້ອນຊຳ້ພັດເຢັນ ເພາະໃນເສັ້ນຝ້າຍພື້ນເມືອງມີຮູຫຼາຍ. ຕາມຜູ້ເຖົ້າຜູ້ແກ່ເວົ້າວ່າ ຝ້າຍພື້ນເມືອງນີ້ ຍ້ອມສີກ່ຳງ່າຍ ແລະເວລາເອົາມາເຂັນກ່ຳງ່າຍ, ແຕ່ດຽວນີ້ມີຝ້າຍພັນປັບປຸງ ປະຊາຊົນ ນິຍົມປູກ ເພາະວ່າໄດ້ນ້ຳໜັກຫຼາຍ ຝ້າຍນີ້ເໝາະກັບໂຮງງານ.

ການປັ້ນໜ້ຫ່ຼໄຫ, ໜ້ໍ ມີ 3 ບ້ານ, ເຮັດເຕົາປະຢັດ ບ້ານບຶກທ່ຶ ຖືວ່າດີ. ຢາພື້ນເມືອງ ມີຢູ່ ບ້ານທາງຕາເວັນຕົກຂອງເມືອງ ມີໝ່ຢາພື້ນເມືອງດັງຫຼາຍ. ມີຄົນເຈັບໄປຫາຕະຫຼອດ ອາດເວົ້າໄດ້ວ່າ ເປັນ ຄຣິນິກຢາພື້ນເມືອງ.



ເຕົາປະຢັດ



ງານມະຫາກຳທີ່ແຂວງວຽງຈັນ
(ຕະຫຼາດນັດຜະລິດຕະພັນພື້ນບ້ານ)

ໂຕອີ່ງ, ໂຕຈີ່ນາຍ, ເຫັດປວກ ແລະເຫັດຕ່າງໆ ສ່ວນຫຼາຍສິ່ງຂາຍໃຫ້ໄທ, ແມ່ຄ້າຊື້ເຫັດປວກ ລາຄາກິໂລລະ 80 ບາດ, ໄປຮອດກຸງເທບລາຄາສູງຂຶ້ນຫຼາຍ ເຖິງ 250 ບາດ. ຂ້າພະເຈົ້າໄດ້ໄປຢາມ ໝູ່ຢູ່ໄທ ໄທບ້ານເວົ້າວ່າ ໂຕຫອຍຈູບກໍ່ກິນບໍ່ໄດ້ແລ້ວ, ຂຽດ, ອີ່ງກໍ່ບໍ່ກ້າກິນ, ເຫັດປວກກໍ່ບໍ່ມີແລ້ວ ຍ້ອນເຂົາເຈົ້າໃສ່ເຄມີຫຼາຍໃນດິນ ແລະພົດປູກຝັ່ງ, ຈີ່ນາຍໄທ (ເຂົາລ້ຽງເອົາ) ເວລາເອົາມາຈືນກິນ ໂຕມັນຈະຫຍາບ, ແຕ່ໂຕຈີ່ນາຍລາວ ເອົາມາຈືນເວລາຫຍໍ້າ ສຽງດັງກອບໆ, ສະນັ້ນ ເຂົາຈຶ່ງຊື້ຂອງກິນ ທຳມະຊາດຈາກປະເທດລາວ. ເວລາຂ້າພະເຈົ້າໄປປະຊຸມຢູ່ ໄຈກາ (JICA) ຂ້າພະເຈົ້າຍົກເອົາບັນຫາ ໂຕຈີ່ນາຍ ມາເວົ້າໃນກອງປະຊຸມ ຫົວດັງແຊວໆ ແລະບາງຄົນເວົ້າວ່າ ໂຕໄປຄົ້ນຄວ້າ ໂຕຈີ່ນາຍຫວາ ແຕ່ສຸດທ້າຍເຂົາເຈົ້າກໍ່ເຂົ້າໃຈບັນຫາ.



ລາຍການພິເສດ

ທ່ານ MUSHIAKE ເປົ່າແຄນ

ເລື່ອງທ່ອງທ່ຽວ ແມ່ນມີຫຼາຍ ເຊັ່ນ: ໜອງ ທຳມະຊາດ, ວັດ, ຫໍໄຕປິດົກ, ດ້ານວັດທະນະທຳ ຢູ່ສະຫວັນນະເຂດ ມີຂັບລຳຫຼາຍ ເຊັ່ນ: ລຳຜູ້ໄທ, ລຳຄອນສະຫວັນ, ລຳຕັ່ງຫວາຍ ເວລາເຮັດບຸນ ພະເວດ ເພິ່ນຕີກອງຕຸ້ມ.

ເຄື່ອງທຳມະຊາດ ຢູ່ປະເທດລາວ ແມ່ນມີ ຄຸນຄ່າສູງ, ປະຈຸບັນຄົນລາວຖືເປັນທຳມະດາ. ສະ ນັ້ນ ຢາກໃຫ້ຄົນລາວປົກປັກຮັກສາ ແລະເອົາໃຈ ໃສ່ເຄື່ອງມີຄຸນຄ່າສູງ, ມີຄຸນນະພາບດີໆ, ແປກ ປະຫຼາດ ເພາະວ່າດຽວນີ້ ຢູ່ໃນໂລກແມ່ນຫາຍາກ.

ການໃຊ້ຮູບການຕະຫຼາດນັດກໍ່ແມ່ນດີ ແຕ່ເວລາຢູ່ບຸນທາດຫຼວງ, ບຸນທາດອີ່ງຮັ້ງ ບໍ່ຄ່ອຍ ເຫັນ ເຄື່ອງຂອງຜູ້ຜະລິດແທ້ເອົາ ໄປຂາຍ. ຍ້ອນ ວ່າຕ້ອງຈ່າຍເງິນຄ່າເຊົ່າສະຖານທີ່ແພງ, ເສຍເງິນຄ່າການຂົນສົ່ງ ແລະພົບຄວາມຫຍຸ້ງຍາກ ຊາວ ຊົນນະບົດເອົາເຄື່ອງມາບໍ່ໄດ້. ເພາະສະນັ້ນ ຄວນມີນະໂຍ ບາຍພິເສດ.

ການວາງສະແດງຕະຫຼາດນັດ ການແຂ່ງຂັນຜະລິດຕະພັນ ແຕ່ລະຮ້ານ ບໍລິສັດບໍ່ໄດ້ເອົາເຄື່ອງ ດີແທ້ມາວາງສະແດງ ສ່ວນຫຼາຍແມ່ນເອົາລະດັບຊັ້ນ 2 ຊັ້ນ 3 ມາວາງສະແດງ. ເພາະວ່າເຂົາຢ້ານ ການລັກຮຽນແບບ, ຜ້າແພຄືກັນ, ຈັກສານຄືກັນ, ແຟຊັນໂຊກໍ່ຄືກັນ.

ຢູ່ປະເທດລາວຍັງມີຊັບພະຍາກອນທຳມະຊາດ ແລະຜະລິດຕະພັນພື້ນບ້ານທີ່ມີຄຸນນະພາບ ແລະຄຸນຄ່າສູງ, ທີ່ຢູ່ປະເທດໄກ້ຄຽງຊອກຫາຍາກແລ້ວ, ຂ້າພະເຈົ້າຄິດວ່າ ຄົນລາວເອງຄວນຈະສົນ ໃຈຕື່ມ ແລະຄົ້ນຄວ້າຜະລິດຕະພັນຕ່າງໆ, ພໍດີຢູ່ມະຫາວິທະຍາໄລແຫ່ງຊາດ ມີບັນດາອາຈານ ແລະ

ນັກສຶກ ສາຈາກທົ່ວປະເທດ ສະນັ້ນການເກັບກຳຂໍ້ມູນ ແລະການຄົ້ນຄວ້າຜະລິດຕະພັນ ຈຶ່ງມີຄວາມ ສະດວກ ກວ່າສະຖາບັນອື່ນໆ ແລະຖ້າເປັນໄປໄດ້ຄວນຈະເຮັດໂຄງການຄົ້ນຄວ້າຂະໜາດນ້ອຍ ຫຼາຍ ຄະນະຮ່ວມກັນ ຍົກຕົວຢ່າງ: ໂຄງການຄົ້ນຄວ້າເກືອຂີ້ຫາຂອງສະຫວັນນະເຂດ. ສຳຫຼັບຄະນະກະເສດ ສາດຮັບຜິດຊອບການຜະລິດແລະປຸງແຕ່ງ, ຄະນະວິທະຍາສາດສັງຄົມ ບົດບາດແລະປະຫວັດ ເກືອຂີ້ ຫາໃນທ້ອງຖິ່ນ, ຄະນະປ່າໄມ້ຮັບຜິດຊອບບັນຫາຟືນ, ເພາະວ່າເວລາຕົ້ມເກືອຕັດໄມ້ເອົາຟືນຫຼາຍ ປະຈຸບັນນີ້ ຟືນກໍ່ຫາຍາກຂຶ້ນ, ຄະນະວິທະຍາສາດຮັບຜິດຊອບວິເຄາະຫາດຢູ່ໃນເກືອຂີ້ຫາ ແລະອື່ນໆ. (ຈົບ)

ວັດທະນະທຳບອກເລົ່າແລະວຽກຫັດຖະກຳ ທີ່ໄດ້ສືບທອດກັນໃນຊົນເຜົ່າມົ້ງ

Kiyoko YASUI
ອາຈານ, ມະຫາວິທະຍາໄລສຶກສາຕ່າງປະເທດໂຕກຽວ


ອາຈານ Kiyoko YASUI

ສະບາຍດີ. (ຜູ້ເຂົ້າຮ່ວມຕົບມື...) ຂອບໃຈຫຼາຍໆ. ຂ້ອຍຊື່ Kiyoko YASUI ແມ່ນຄົນຍີ່ປຸ່ນ. ຂ້ອຍເອງກໍ່ພະຍາຍາມເວົ້າເປັນພາສາລາວ. ແຕ່ວ່າພາສາລາວຂອງຂ້ອຍ ກໍ່ບໍ່ຄ່ອຍດີປານໃດ. ຄຳສັບຍາກໆກໍ່ຍັງບໍ່ຮູ້. ຄິດວ່າເວົ້າຜິດບ້າງ. ແລ້ວກໍ່ ອອກສຽງເປັນພາສາໄທຫຼາຍກວ່າ ກໍ່ຂໍອະໄພນຳເດີ. ແລ້ວເວົ້າເປັນ "ຂ້າພະເຈົ້າ" ກໍ່ບໍ່ເປັນ. ຂ້ອຍຂໍໂທດຫຼາຍໆໄວ້ກ່ອນ. ເວົ້າເປັນທຳມະດາທຳມະດາຊື່ໆ.

ທຳອິດ ອາຈານ (ຜູ້ຈັດສຳມະນາ) ແນະນຳວ່າ ຂ້ອຍເຮັດວຽກກັບຊົນເຜົ່າມົ້ງມາຫຼາຍປີແລ້ວ. ແຕ່ບໍ່ແມ່ນວ່າ ເປັນນັກຄົ້ນຄວ້ານໍ. ຂ້ອຍເຄີຍເຮັດວຽກດ້ານຫ້ອງສະມຸດມາຫຼາຍປີ. ຂໍແນະນຳຕົວເອງວ່າຂ້ອຍເຮັດຫຍັງມາ, ຈະໄດ້ຄືຊິເຂົ້າໃຈວ່າເປັນຫຍັງ ຂ້ອຍຈຶ່ງສົນໃຈມົ້ງ, ແລ້ວກໍ່ ສົນໃຈນິທານມົ້ງນໍ. ທຳອິດ ຂ້ອຍເຮັດວຽກຢູ່ໄທ, ມີໂອກາດມາເຮັດວຽກຢູ່ຝັ່ງໄທ. ຕອນນັ້ນ ຫາກໍ່ຮຽນຈົບໃໝ່ໆ ແທ້ໆ ແຕ່ 20 ປີກ່ອນ, ກໍ່ໄດ້ມີໂອກາດໄປເຮັດວຽກ ຢູ່ສູນອົບພະຍົກ ຢູ່ທີ່ຈັງຫວັດເລີຍ, ປະເທດໄທ. ກໍ່ຢູ່ໄກ້ໆຊາຍແດນລາວນຳ. ຕອນນັ້ນ ຂ້ອຍເຮັດວຽກນຳອົງການ NGO ທີ່ມີຊື່ວ່າ ສັນຕິ ວໍລັນເຕຍ ອາໂຊຊິເອຊັນ SVA. ດຽວນີ້ ເພີ່ນເຮັດວຽກດ້ານການສຶກສາແລະເຮັດໂຄງການຫ້ອງສະມຸດຢູ່ລາວ. ຕອນນັ້ນ SVA ກໍ່ເຮັດວຽກຢູ່ໄທ. ແລ້ວກໍ່ ມີໂຄງການຫ້ອງສະມຸດເດັກນ້ອຍ. ແຕ່ວ່າທຳອິດ ຍັງບໍ່ມີຫຍັງ, ຍັງບໍ່ມີເຮືອນ. ໂຄງການກໍ່ຫາກໍ່ເລີ້ມ. ຕອນນັ້ນ ຂ້ອຍກໍ່ສະໝັກໄປເຮັດວຽກຢູ່ຫ້ອງສະມຸດເດັກ ຢູ່ທີ່ສູນອົບພະຍົກ ມີແຕ່ເດັກມົ້ງ, ຄົນມົ້ງເປັນສ່ວນຫຼາຍ. 90% ແມ່ນຄົນມົ້ງ, ຂ້ອຍກໍ່ມີໂອກາດເຮັດວຽກນຳເດັກນ້ອຍມົ້ງ. ແຕ່ກິດຈະກຳຂອງຫ້ອງສະມຸດນັ້ນ ຍັງບໍ່ທັນມີເຮືອນ, ບໍ່ທັນມີຫ້ອງ. ແລ້ວກໍ່ ບໍ່ມີປຶ້ມ, ບໍ່ມີໜັງສື, ປຶ້ມເປັນພາສາລາວກໍ່ບໍ່ມີ, ເປັນພາສາມົ້ງກໍ່ບໍ່ມີ ແລ້ວກໍ່ ຕົວເອງກໍ່ບໍ່ຮູ້ພາສາຫຍັງເລີຍ. ກ່ອນຈະເລີ້ມເຮັດວຽກນຳ

ເດັກນ້ອຍມົ້ງ ບໍ່ຮູ້ພາສາຫຍັງ, ຮູ້ແຕ່ພາສາໄທໜ້ອຍດຽວຊິ່ໆ. ຂ້ອຍກໍ່ບໍ່ຮູ້ວ່າຈະເຮັດຈັ່ງໃດດີ. ແຕ່ຕັດສິນໃຈເອົາປຶ້ມມີພາບ (Picture book) ໄປໃຫ້ເດັກນ້ອຍເບິ່ງ, ເພາະວ່າຖ້າມີພາບ ເດັກນ້ອຍກໍ່ອາດຈະເບິ່ງພໍເຂົ້າໃຈ ແລະອາດຈະມ່ວນ. ຂ້ອຍຈຶ່ງເອົາປຶ້ມຈາກຍີ່ປຸ່ນໄປນຳຫຼາຍໆຫົວ ປະມານ 200 ກວ່າຫົວ. ແຕ່ຂ້ອຍຍັງບໍ່ເຄີຍຟັງພາສາມົ້ງຈັກເທື່ອ. ແລ້ວກໍ່ ເຂົາເຈົ້າເວົ້າຫຍັງກໍ່ບໍ່ຮູ້. ຄຳພາສາມົ້ງທີ່ຂ້ອຍຮຽນທຳອິດ ຄື "ດະຈິ ດະຈິ" ແປວ່າ, "ແມ່ນຫຍັງ". ຢູ່ທີ່ນັ້ນ ຜູ້ໃຫຍ່ຂອງມົ້ງເວົ້າພາສາລາວກໍ່ໄດ້, ພາສາໄທກໍ່ໄດ້. ຄຳສັບງ່າຍໆ ຂ້ອຍກໍ່ເວົ້າໄດ້ເປັນພາສາໄທນໍ ຄື " ອະໄລ ອະໄລນະ ພູດຢັ້ງໄງ". ແລ້ວກໍ່ ເຂົາເຈົ້າເວົ້າວ່າ "ດະຈິ" ຂ້ອຍຈຶ່ງຈື່ແຕ່ຄຳດຽວວ່າ "ດະຈິ".

ຂ້ອຍເອົາປຶ້ມນີ້ໄປ ຊື່ວ່າ "ໂອກາສັນ ໂຕະ ໂກໂດໂມະ (Okasan To Kodomo)" ແປວ່າ "ແມ່ກັບລູກ". ແຕ່ຕອນນັ້ນ ຍັງແປບໍ່ໄດ້ນໍ, ເພາະວ່າເວົ້າບໍ່ເປັນ. ແຕ່ບໍ່ເປັນຫຍັງ. ເມື່ອມີເວລາ ຂ້ອຍກໍ່ເອົາປຶ້ມນີ້ໄປໃຫ້ເດັກນ້ອຍເບິ່ງ. ເຂົາເຈົ້າບໍ່ເຄີຍເຫັນປຶ້ມມີສີຈັກເທື່ອ ຈຶ່ງແລ່ນມາຫາ. ແຕ່ເວົ້າຫຍັງກໍ່ຂ້ອຍບໍ່ເຂົ້າໃຈ. ຂ້ອຍຈຶ່ງເອົາປຶ້ມນີ້ໃຫ້ເດັກນ້ອຍເບິ່ງ ແລ້ວຖາມວ່າ "ດະຈິ ດະຈິ". ເດັກນ້ອຍກໍ່ຕອບວ່າ "ເນ່ງ ເນ່ງ ເນ່ງ". ຂ້ອຍກໍ່ຮູ້ວ່າ "ໂອ້ ອັນນີ້ (ມ້າ) ເປັນພາສາມົ້ງວ່າ "ເນ່ງ". ເອົາປຶ້ມບັນທຶກອອກມາແລ້ວ ຂຽນເປັນພາສາຍີ່ປຸ່ນວ່າ "Neng". ແລ້ວກໍ່ ເຮັດແນວນີ້ ໃຫ້ເດັກນ້ອຍເບິ່ງລູກມ້າ ແລ້ວຖາມວ່າ "ດະຈິ". ເດັກນ້ອຍກໍ່ຕອບວ່າ "ມິຍົ່ວເນ່ງ ມິຍົ່ວເນ່ງ", ຂ້ອຍກໍ່ຮູ້ວ່າ "ມິຍົ່ວ" ແມ່ນ ລູກ, ເດັກນ້ອຍ. ທຳອິດ ມັນຟັງບໍ່ອອກດອກ. ແຕ່ພະຍາຍາມຂຽນໄວ້ວ່າ "Mi-nyua". ແລ້ວກໍ່ ຖາມອີກວ່າ "ດະຈິ". ເດັກນ້ອຍກໍ່ຕອບວ່າ "ເນ່ຍເນ່ງ ເນ່ຍເນ່ງ", "ເນ່ຍ" ແປວ່າ ແມ່, ກໍ່ຂຽນວ່າ "Nia" ເປັນພາສາຍີ່ປຸ່ນ. ແລ້ວກໍ່ ຖາມອີກວ່າ "ດະຈິ". ເດັກນ້ອຍຕອບວ່າ "ໂຕໄກ່ ໂຕໄກ່" (ສຽງຄ້າຍຄືກັນກັບໄກ່ເປັນພາສາລາວ). ເດັກນ້ອຍກໍ່ເຫັນຮູບລູກໄກ່ດີໃຈ ແລ້ວເວົ້າວ່າ "ມິຍົ່ວໄກ່ ມິຍົ່ວໄກ່" ເລີ້ມນັບລູກໄກ່ເບິ່ງ, "ອິ (1), ອໍ (2), ເປ (3), ບຸເລົາ (4), ຈິ (5), ຈໍ່ (6), ເຮ່ຍ (7), ຍີ່ (8), ... ". ມີແຕ່ຮູບນ້ອຍໆຂະໜາດນີ້ເອງ. ແຕ່ມັນເຮັດໃຫ້ເດັກນ້ອຍດີໃຈຫຼາຍ ແລະມັກປຶ້ມຫຼາຍໄດ້ນໍ.



ເດັກນ້ອຍມົ້ງອ່ານປຶ້ມຮູບ

ປຶ້ມເຫຼັ້ມນີ້ ພິມເປັນພາສາຍີ່ປຸ່ນນໍ, ດຽວນີ້ ເອົາຄຳແປ (ພາສາລາວ) ຕິດໃສ່ປຶ້ມນຳ. ແຕ່ແນວໃດກໍ່ ເດັກນ້ອຍໆອ່ານບໍ່ໄດ້, ເດັກນ້ອຍບາງຄົນເບິ່ງປຶ້ມແນວນີ້ (ເບິ່ງປຶ້ມລວງປີ້ນ). ເດັກນ້ອຍເຫັນວ່າ ອັນນີ້ມີຮູບຊິ່ໆ, ບໍ່ຮູ້ວ່າມີນິທານຢູ່ໃນນີ້. ຂ້ອຍກໍ່ຢາກຈະອະທິບາຍໃຫ້ເຂົາເຈົ້າວ່າ ອັນນີ້ບໍ່ແມ່ນວ່າມີຮູບຊິ່ໆ. ມີນິທານມ່ວນໆຢູ່ໃນນີ້. ແຕ່ຕອນນັ້ນ

ຂ້ອຍຍັງບໍ່ທັນຮູ້ພາສາ ກໍ່ບໍ່ຮູ້ວ່າຊິເຮັດຈັ່ງໃດດີ. ແຕ່ຂ້ອຍກໍ່ລອງເລົ່ານິທານເບິ່ງ ຊື່ວ່າ "ຫົວຜັກກາດໃຫຍ່". ມີພໍ່ເຖົ້າຜູ້ໜຶ່ງປູກຫົວຜັກກາດນໍ. ທຳອິດ ຫົວຜັກກາດຍັງນ້ອຍໆ ກິນບໍ່ໄດ້. ຕອນນັ້ນ ເວົ້າເທົ່າ ນີ້ກໍ່ຍັງເວົ້າບໍ່ເປັນ. ແຕ່ບໍ່ເປັນຫຍັງນໍ ໃຫ້ເດັກນ້ອຍເບິ່ງຮູບຊື່ໆ, ຢ່າງໜ້ອຍເຂົາເຈົ້າກໍ່ບໍ່ໄດ້ເບິ່ງປຶ້ມ ແນວນີ້ (ເບິ່ງລອງປຶ້ນ) ແລ້ວ. ພໍຫົວຜັກກາດໃຫຍ່ໝາຍແລ້ວ ພໍ່ເຖົ້າພະຍາຍາມຫຼົກຫົວຜັກກາດອອກ. ໜຶ່ງ ສອງ ສາມ ... ພາສາມີ້ງວ່າ ອິ ໂອ ເປ... ພໍ່ເຖົ້າວ່າ "ອິໂອ, ອິໂອ ..." (ອາຈານ Kiyoko ກໍ່ທຳ ທ່າຫຼົກຫົວຜັກກາດ). ແຕ່ຫຼົກບໍ່ໄດ້. ພໍ່ເຖົ້າບອກວ່າ "ແມ່ເຖົ້າ ແມ່ເຖົ້າ ... ມາຊ່ວຍແດ່". ແມ່ເຖົ້າ ກໍ່ມາ. ສອງຄົນພະຍາຍາມຫຼົກອອກ. "ອິ ໂອ, ອິ ໂອ ..." ແຕ່ຍັງບໍ່ໄດ້. "ຊ່ວຍແດ່ ໝານສາວ" ໝານ ສາວກໍ່ແລ່ນມາ. "ອິ ໂອ, ອິ ໂອ..." ຍັງບໍ່ໄດ້. ຕໍ່ໄປ "ໂວ້ງ, ໂວ້ງ, ໂວ້ງ" ໝາກໍ່ມາຊ່ວຍ (ອາຈານ Kiyoko ຊີ້ຮູບໝາໃນປຶ້ມ). ຖາມເດັກນ້ອຍວ່າ "ດະຈິ ດະຈິ" ເຂົາເຈົ້າຕອບວ່າ "ເອົາ". "ອິ ໂອ, ອິ ໂອ..." ອິ ຍັງບໍ່ໄດ້. "ແມວ ແມວ ແມວ" ແມວກໍ່ມາຊ່ວຍ, "ອິ ໂອ, ອິ ໂອ..." ອິ ຍັງບໍ່ໄດ້. "ຈູຍ ຈູຍ ຈູຍ" ໜູກໍ່ມາຊ່ວຍ, "ອິ ໂອ, ອິ ໂອ...ຫຼົກໄດ້ແລ້ວ, ເອົາເມືອບ້ານກິນເຂົ້ານຳກັນ..."

ດຽວນີ້ ຂ້ອຍເວົ້າເປັນພາສາມີ້ງກໍ່ໄດ້, ພາສາລາວກໍ່ໄດ້ ແຕ່ວ່າທຳອິດ ເວົ້າບໍ່ເປັນ ເວົ້າ ໄດ້ແຕ່ "ອິ ໂອ ເປ ... " ແຕ່ວ່າເດັກນ້ອຍກໍ່ ສາມາດເຂົ້າໃຈເລື່ອງງ່າຍໆໄດ້, ເຂົາເຈົ້າຈຶ່ງຮູ້ ວ່າ "ໂອ້ ອັນນີ້ບໍ່ແມ່ນຮູບຊື່ໆ ມີນິທານຢູ່ໃນນີ້". ເຂົາເຈົ້າເຂົ້າໃຈນິທານແລ້ວ ຈຶ່ງເປີດປຶ້ມຄືນມາ ເລົ່າໃຫ້ຄົນອື່ນຟັງໄດ້.



ຫົວຜັກກາດຍັງນ້ອຍໆ ກິນບໍ່ໄດ້



ຊ່ວຍກັນຫຼົກຫົວຜັກກາດໃຫຍ່



ຫຼົກໄດ້ແລ້ວ, ເອົາເມືອບ້ານກິນເຂົ້ານຳກັນ...

[Illustrations : © Churyo Sato 1962]

ຂ້ອຍເຮັດວຽກນຳກິດຈະກຳຫ້ອງສະມຸດ ທັງໝົດ 5 ປີ. ຂ້ອຍພະຍາຍາມຮຽນພາສາມົ້ງ, ເລົ່ານິທານໃຫ້ເດັກນ້ອຍຟັງ ແລະອະທິບາຍໃຫ້ເຂົ້າໃຈ. ແຕ່ປີທຳອິດ ມີແຕ່ເລົ່ານິທານຊື່ໆ ກໍ່ບໍ່ໄຫວ. ຂ້ອຍຈຶ່ງຕ້ອງເຫຼັ້ນກັບເດັກນ້ອຍແດ່, ວາດຮູບແດ່ ຄືໂຮງຮຽນອະນຸບານນໍ. ບໍ່ວ່າເດັກນ້ອຍລາວ ຫຼື ເດັກນ້ອຍຍີ່ປຸ່ນ ເມື່ອອາຍຸຍັງນ້ອຍ ເບິ່ງປຶ້ມຊື່ໆ ແຕ່ຕໍ່ໄປ ຖ້າມີປຶ້ມ ຕົວເອງກໍ່ພະຍາຍາມອ່ານນໍ. ເລື່ອງ "ຫົວຜັກກາດໃຫຍ່" ຖ້າເປັນ ປ.1, ປ.2 ກໍ່ອ່ານໄດ້ແລ້ວ. ແຕ່ຢູ່ຫັ້ນ ເຂົາເຈົ້າອ່ານບໍ່ໄດ້ ເພາະວ່າ ບໍ່ມີປຶ້ມ, ມີແຕ່ປຶ້ມເປັນພາສາຍີ່ປຸ່ນ, ແລ້ວກໍ່ ເວົ້າແທ້ໆ ຊົນເຜົ່າມົ້ງ ກໍ່ບໍ່ມີຕົວໜັງສືຂຽນນໍ, ບໍ່ມີປຶ້ມ ອັນນີ້ກໍ່ເປັນບັນຫາ. ແຕ່ຂ້ອຍກໍ່ບໍ່ຮູ້ວ່າຈະເຮັດຈັ່ງໃດດີ. ປີໜຶ່ງຜ່ານໄປແລ້ວ ປຶ້ມກໍ່ເກົ່າຫຼາຍແດ່, ຂາດ ແດ່. ມີແຕ່ປຶ້ມເກົ່າແກ່ ເດັກນ້ອຍກໍ່ເບື່ອ, ບໍ່ຢາກເບິ່ງແລ້ວ.

ຕອນນັ້ນ ພໍດີໄດ້ມີໂອກາດຟັງນິທານມົ້ງ ເວລາຂ້ອຍເຮັດວຽກຢູ່ຫັ້ນ ທຸກມື້ ຕອນເຊົ້າ ໄປ ເຮັດວຽກຢູ່ຫ້ອງສະມຸດ ຕອນແລງ ກໍ່ເມືອ. ປົກກະຕິ ບໍ່ມີໂອກາດນອນນຳເຂົາເຈົ້າ. ແຕ່ມີມື້ໜຶ່ງ ຂ້ອຍ ກໍ່ພະຍາຍາມພັກຢູ່ທີ່ສູນ ເພາະຢາກຮູ້ວ່າເຂົາເຈົ້າເຮັດຫຍັງຕອນກາງຄືນ. ມີພໍ່ຜູ້ໜຶ່ງກໍ່ອຸ້ມເດັກນ້ອຍ ມາ ແລ້ວກໍ່ ບອກວ່າ "ເອີ ມື້ນີ້ ຊິເລົ່ານິທານເດີ ..." ນິທານເປັນພາສາມົ້ງວ່າ "ດາແນ່ງ " ເດັກນ້ອຍ ຫຼາຍຄົນກໍ່ດີໃຈ ແລ່ນມາຫາພໍ່ຜູ້ນັ້ນ. ແລ້ວກໍ່ ນັ່ງຖ້າຢູ່ ຕອນນັ້ນ ຍັງບໍ່ມີໄຟຟ້າ, ບໍ່ມີຫຍັງ, ມັນມືດ ແລ້ວ. ຜູ້ຊາຍນັ້ນກໍ່ເລີ້ມເລົ່ານິທານໃຫ້ເດັກນ້ອຍຟັງ "ບູ້ໂຕອູ ເມືອ... (ດົນມາແລ້ວ ມີ...)" ນິທານ ຍາວໆເປັນ 40 ນາທີ 50 ນາທີ ແຕ່ເດັກນ້ອຍກໍ່ຕັ້ງໃຈຟັງ. ມືດ ແລ້ວກໍ່ ຟັງຢູ່. ທຳມະດາ ເດັກນ້ອຍ ມົ້ງກໍ່ຂີ້ດື້ຫຼາຍ, ຖ້າຕອນກາງເວັນ ເຂົາເຈົ້າແລ່ນຕະຫຼອດ, ບໍ່ຄ່ອຍໄດ້ຢຸດ, ບໍ່ຄ່ອຍໄດ້ນັ່ງ. ແຕ່ຕອນ ນັ້ນ ຂ້ອຍກໍ່ຕົກໃຈວ່າ ເຂົາເຈົ້າກໍ່ມືດ ແລ້ວກໍ່ ຕັ້ງໃຈຟັງ. ຕອນນັ້ນ ຂ້ອຍກໍ່ເຂົ້າໃຈພາສາມົ້ງໄດ້ໜ້ອຍ ໜຶ່ງ, ແຕ່ວ່າເນື້ອໃນກໍ່ຍັງບໍ່ທັນເຂົ້າໃຈ. ແນວໃດກໍ່ຕາມ ຂ້ອຍບໍ່ເຄີຍເຫັນປຶ້ມຂອງຊົນເຜົ່າມົ້ງຈັກ ເທື່ອນໍ ຈຶ່ງຄິດວ່າ ນິທານມົ້ງກໍ່ບໍ່ມີແນ່ນອນ, ຄື ຂ້ອຍຄິດວ່າ ບໍ່ມີປຶ້ມ ກໍ່ບໍ່ມີນິທານ. ແຕ່ແທ້ໆ ບໍ່ແມ່ນ

ແນວນັ້ນນໍ. ບໍ່ມີປຶ້ມ ແຕ່ແທ້ໆ ຊົນເຜົ່າມົ້ງກໍ່ມີນິທານຫຼາຍໆ ເປັນນິທານເລົ່າປາກເປົ່າ ຄື ບໍ່ໄດ້ຂຽນໄວ້, ຕັ້ງແຕ່ຫຼາຍສະຕະວັດກ່ອນ ພໍ່ເຖົ້າແມ່ເຖົ້າກໍ່ເລົ່ານິທານໃຫ້ເດັກນ້ອຍຟັງ. ພໍ່ກໍ່ເລົ່ານິທານໃຫ້ລູກຟັງ, ລູກໂຕຂຶ້ນແລ້ວ ເລົ່ານິທານຕໍ່ໆໄປສູ່ລຸ້ນຫຼັງຟັງ. ຕອນນັ້ນ ຂ້ອຍຢູ່ກັບເດັກນ້ອຍມົ້ງໄດ້ປີໜຶ່ງ ແລ້ວ ກໍ່ມີໂອກາດຟັງນິທານມົ້ງ, ແລ້ວກໍ່ ເຂົ້າໃຈໄດ້ວ່າ ບໍ່ແມ່ນວ່າເຜົ່າມົ້ງບໍ່ມີນິທານ, ແຕ່ມີນິທານຫຼາຍ.

ຂ້ອຍກໍ່ເລີ້ມສົນໃຈນິທານມົ້ງ, ແລ້ວກໍ່ ຕອນນັ້ນ ຂ້ອຍພະຍາຍາມອັດສຽງ, ອັດເທບໄວ້. ປົກກະຕິ ຂ້ອຍບໍ່ໄດ້ຢູ່ໃນສູນຕອນກາງຄືນ, ເຮັດວຽກຢູ່ຫ້ອງສະມຸດ ມີແຕ່ຕອນກາງເວັນຊິ່ໆ ຈຶ່ງໃຫ້ເດັກນ້ອຍ ຊ່ວຍອັດສຽງໃຫ້. ຕອນນັ້ນ ມີແຕ່ເທບນ້ອຍໆ ມັນສຽງກໍ່ບໍ່ຄ່ອຍດີ, ແຕ່ໃຫ້ເດັກນ້ອຍເອົາເທບເມືອບ້ານ ເດັກນ້ອຍກໍ່ອັດສຽງມາໃຫ້. ຕອນຢູ່ຝັ່ງໄທ ອັດສຽງໄດ້ ທັງໝົດ 200 ກວ່າເລື່ອງ. ແຕ່ວ່າຕອນກາງເວັນ ບໍ່ຄ່ອຍເລົ່ານິທານ ເພາະວ່າກາງເວັນນີ້ ເປັນເວລາເຮັດວຽກ. ທຳມະດາ ກໍ່ຕ້ອງໄປເຮັດໄຮ່ແດ່,ໄປເຮັດນາແດ່ ຈຶ່ງບໍ່ມີເວລາ. ຕອນກາງຄືນ ເວລາທີ່ບໍ່ມີຫຍັງເຮັດ ສ່ວນຫຼາຍ ໝູ່ບ້ານກໍ່ຍັງບໍ່ທັນມີໄຟຟ້າ, ບໍ່ມີໂທລະພາບ. ຜູ້ເຖົ້າກໍ່ເລົ່ານິທານໃຫ້ເດັກນ້ອຍຟັງ ເດັກນ້ອຍກໍ່ມັກຫຼາຍ. ແຕ່ເຂົາເຈົ້າກໍ່ບອກວ່າ ຖ້າເລົ່ານິທານຕອນກາງເວັນ ດຽວຈະເຈັບຫົວ ຫຼືມີບັນຫາ ຈຶ່ງບໍ່ຄ່ອຍໄດ້ເລົ່າ.

ຫຼັງຈາກອັດສຽງ ອັດນິທານໄດ້ຫຼາຍແລ້ວ ພວກເຮົາຢາກຈະເຮັດປຶ້ມນິທານມົ້ງ ແຕ່ກ່ອນເຜົ່າມົ້ງບໍ່ມີຕົວໜັງສືຂຽນຂອງຕົວເອງ. ແຕ່ດຽວນີ້ ບາງຄົນໃຊ້ອັກສອນອັງກິດເປັນຕົວໜັງສືຂຽນກໍ່ມີ, ໃຊ້ອັກສອນລາວກໍ່ມີຄືກັນ. ພວກເຮົາຢາກຈະເຮັດປຶ້ມ ຢາກໃຫ້ເດັກນ້ອຍມົ້ງຟັງນິທານ ອ່ານນິທານ ແລະຂຽນພາສາມົ້ງ. ແລ້ວກໍ່ ພວກເຮົາລອງປັກແສ່ວເຮັດປຶ້ມເບິ່ງ ເພາະວ່າເຜົ່າມົ້ງນີ້ປັກແສ່ວເກ່ງຫຼາຍ. ເວລາເຮັດກະໂປງແດ່ ເຮັດເສື້ອແດ່ ເຂົາເຈົ້າປັກເອງ. ຖ້າເປັນຜູ້ຍິງມົ້ງ ຕັ້ງແຕ່ນ້ອຍໆ ປັກແສ່ວໄດ້, ປັກແສ່ວເກ່ງ. ເຂົາເຈົ້າຈຶ່ງຄິດວ່າປັກແສ່ວອາດຈະດີກວ່າວາດຮູບ. ກໍ່ລອງເບິ່ງວ່າ ຊິເຮັດໄດ້ບໍ່, ອັນນີ້ ຄື ປຶ້ມປັກແສ່ວນໍ, ເດັກນ້ອຍມົ້ງເຮັດເອງ (ອາຈານ Kiyoko ເປີດປຶ້ມໃຫ້ເບິ່ງ). ປຶ້ມນີ້ ເດັກນ້ອຍຂຽນເປັນພາສາມົ້ງ ແລ້ວກໍ່ ປັກແສ່ວເອງ. ຖ້າອອກມາເປັນຮູບພາບປັກແສ່ວ ອາດຈະງາມກວ່າຮູບໃນປຶ້ມນິທານຍີ່ປຸ່ນ. ພວກເຮົາເອງກໍ່ຕົກໃຈວ່າ "ໂອ້ ເຮັດໄດ້ຂະໜາດນີ້ນໍ" ເພາະວ່າງາມຫຼາຍແທ້. ແລ້ວກໍ່ ເວລາພວກເຮົາເລີ້ມກິດຈະກຳເຮັດປຶ້ມປັກແສ່ວ ຄົນອື່ນກໍ່ບອກວ່າ "ເອີ ຂ້ອຍກໍ່ຢາກເຮັດ, ຂ້ອຍກໍ່ເຮັດໄດ້" ເພາະວ່າຖ້າເປັນຜູ້ຍິງມົ້ງ ທຸກຄົນເຮັດໄດ້ ມັກປັກແສ່ວນໍ. ພວກເຮົາເຮັດຢູ່ຝັ່ງໄທ ກໍ່ປະມານ 100 ເຫຼັ້ມ, 100 ເລື່ອງ. ເຮັດປຶ້ມຢູ່ໃນກິດຈະກຳຂອງຫ້ອງສະມຸດ. ຂ້ອຍກໍ່ເອົາປຶ້ມປັກແສ່ວໄປຍີ່ປຸ່ນ ແລະໃຫ້ຄົນຍີ່ປຸ່ນເບິ່ງນໍ. ຫຼາຍຄົນບອກວ່າ "ໂອ້ ງາມຫຼາຍ ດີຫຼາຍ." ຄົນຍີ່ປຸ່ນເຮັດບໍ່ໄດ້ນໍ ເພາະປັກບໍ່ເປັນ. ບໍ່ແນ່ໃຈວ່າ ຄົນລາວຊິເຮັດໄດ້ບໍ່ ແຕ່ຖ້າເປັນຄົນທີ່ມີວັດທະນະ

ທຳ ຫຼືເກ່ງປັກແສ່ວນີ້ ກໍ່ເຮັດໄດ້. ສຳລັບເຂົາເຈົ້າ ມັນບໍ່ຍາກນໍ ໃຊ້ເວລາກໍ່ບໍ່ດົນປານໃດ. ອັນນີ້ ຜົນງານທີ່ອອກມາຈາກກິດຈະກຳຂອງຫ້ອງສະມຸດ,

ຂ້ອຍເຮັດວຽກຢູ່ຫັ້ນ 5 ປີ. ຂ້ອຍເອງກໍ່ບອກວ່າເປັນຄົນຍີ່ປຸ່ນ, ຍີ່ປຸ່ນເປັນປະເທດທີ່ຈະເລີນແລ້ວ, ມີປຶ້ມນິທານກໍ່ງາມຫຼາຍ. ແຕ່ວ່າຖ້າຂ້ອຍເອົາປຶ້ມຈາກຍີ່ປຸ່ນໄປໃຫ້ເຂົາເຈົ້າຊື່ໆ ຄິດວ່າບໍ່ຄ່ອຍມີຄວາມໝາຍ ປຶ້ມຍີ່ປຸ່ນກໍ່ງາມຢູ່ ແຕ່ວ່າບໍ່ແມ່ນຂອງເຂົາເຈົ້າເອງນໍ. ປຶ້ມຈາກຍີ່ປຸ່ນແດ່, ຈາກອາເມລິກາແດ່ ຈາກປະເທດທີ່ພັດທະນາແລ້ວແດ່, ແຕ່ວ່າຖ້າເອົາມາໃຫ້ຊື່ໆ ກໍ່ຄິດວ່າມັນຍັງບໍ່ພໍນໍ. ທຳອິດ ຂ້ອຍຄິດວ່າ ຄົນມົ້ງເອງກໍ່ບໍ່ມີນິທານ, ບໍ່ມີປຶ້ມ, ບໍ່ມີຫຍັງ. ແຕ່ ແທ້ໆ ມີນິທານຫຼາຍ, ມີວັດທະນະທຳປັກແສ່ວ, ວັດທະນະທຳທີ່ງາມ ກໍ່ມີຫຼາຍແລ້ວ. ເດັກນ້ອຍເອງກໍ່ມີຄວາມສາມາດຫຼາຍ. ພວກເຮົາມັກຈະຄິດວ່າ ຖ້າເປັນຊົນເຜົ່ານ້ອຍໆ ເຂົາເຈົ້າບໍ່ມີການສຶກສາ, ບໍ່ຮູ້ຈັກຫຍັງ. ແຕ່ບໍ່ແມ່ນນໍ. ເຂົາເຈົ້າມີວັດທະນະທຳທີ່ພິເສດ, ວັດທະນະທຳທີ່ງາມກໍ່ມີຫຼາຍ, ພວກເຮົາຕ້ອງຮູ້ ຕ້ອງຮຽນວ່າ ຊົນເຜົ່ານີ້ມີຄວາມສາມາດແບບໃດແດ່ ແລະຕ້ອງຮູ້ຈັກວັດທະນະທຳຂອງຊົນເຜົ່ານັ້ນ. ຖ້າເປັນຄົນມົ້ງ ມັນຄົງຈະເປັນປັກແສ່ວ, ຈະເປັນຄວາມສາມາດທີ່ຈະເຮັດປຶ້ມໄດ້. ຖ້າໃຫ້ຄົນຍີ່ປຸ່ນເຮັດ ກໍ່ເຮັດບໍ່ໄດ້. ເຮົາຕ້ອງຮູ້ຈັກເຂົາເຈົ້າ ກ່ອນຈະເລີ້ມມີກິດຈະກຳ.

ເລື່ອງທີ່ເວົ້າມາແລ້ວແມ່ນສະໄໝຂ້ອຍເຮັດຢູ່ຝັ່ງໄທ. ຫຼັງຈາກເຮັດວຽກນຳຫ້ອງສະມຸດເດັກນ້ອຍມົ້ງສຳເລັດແລ້ວ ກໍ່ເຂົ້າມາເຮັດຢູ່ລາວ. ທຳອິດ ຂ້ອຍເຮັດວຽກນຳອົງການ SVA ຮັບຜິດຊອບກ່ຽວກັບຫ້ອງສະມຸດ ເດັກນ້ອຍຄືກັນ. ແຕ່ຕອນນັ້ນ ສ່ວນຫຼາຍ ແມ່ນເຮັດຢູ່ວຽງຈັນ ແລ້ວກໍ່ຕັ້ງແຕ່ປີ 1997 ຂ້ອຍກໍ່ເລີ້ມເຮັດວຽກນຳອາຈານ ສົມທອນ ທີ່ນັ່ງຢູ່ທີ່ນີ້. ຢູ່ສະຖາບັນຄົ້ນຄວ້າວັດທະນະທຳ. ພວກເຮົາເລີ້ມໂຄງການນ້ອຍທີ່ເກັບກຳຂໍ້ມູນ ແລະປົກປັກຮັກສານິທານມົ້ງ, ນິທານປາກເປົ່າ. ສ່ວນຫຼາຍແມ່ນໄປຊຽງຂວາງແດ່ ໄປຊຳເໜືອແດ່ ແລ້ວກໍ່ ໄປຫາໝູ່ບ້ານມົ້ງ ແລ້ວກໍ່ ພະຍາຍາມໄປຫາພໍ່ເຖົ້າແມ່ເຖົ້າ ກໍ່ບອກວ່າ "ຢາກຟັງນິທານແດ່, ຢາກຈະອັດນິທານແດ່."




ອາຈານ ສົມທອນ ລໍ່ເປ້ຍຢາວ
(ຜູ້ໃຫ້ຄວາມເຫັນໃນສຳມະນາ)
ຊ່ຽວຊານວັດທະນະທຳມົ້ງ
ສະຖາບັນຄົ້ນຄວ້າວັດທະນະທຳ

ແຕ່ທຳອິດ ເວລາພວກເຮົາໄປຫາເຂົາເຈົ້າ ເຂົາເຈົ້າກໍ່ຖາມວ່າ "ພວກເຈົ້າມາເຮັດຫຍັງ." ພວກເຮົາກໍ່ບອກວ່າ "ຢາກຟັງນິທານ, ຢາກອັດນິທານ." ເຂົາເຈົ້າບໍ່ເຊື່ອພວກເຮົາເລີຍ. ເຂົາເຈົ້າເວົ້າວ່າ "ອຸດສາມາແຕ່ຍີ່ປຸ່ນ ມາຟັງນິທານຫວະ ບໍ່ເຊື່ອດອກ. ພວກເຈົ້າມາຂາຍເຄື່ອງບໍ່ແມ່ນຫວະ." ພວກເຮົາຕອບວ່າ "ບໍ່ແມ່ນ ບໍ່ແມ່ນ ບໍ່ໄດ້ມາຂາຍເຄື່ອງ." ເຂົາເຈົ້າຍັງບໍ່ເຊື່ອ ກໍ່ຖາມອີກວ່າ "ມາແຕ່ຍີ່ປຸ່ນ ເພາະມີໂຄງການການກະເສດ ບໍ່ແມ່ນຫວະ. ເປັນຫຍັງ ສົນໃຈນິທານ." ແຕ່ວ່າພວກເຮົາກໍ່ຢູ່ຮອດກາງຄືນ ແລ້ວ ກໍ່ເລີ່ມອັດນິທານ, ມີຫຼາຍຄົນໄດ້ເຂົ້າມາເລົ່າໃຫ້ຟັງ ແລ້ວກໍ່ ຜູ້ອື່ນກໍ່ເລົ່າໃຫ້ຟັງ. ເຂົາເຈົ້າກໍ່ເວົ້າວ່າ "ໂອ້ ພວກເຈົ້າມາຟັງນິທານແທ້ໆນໍ, ມາອັດນິທານແທ້ໆນໍ" ແຕ່ບາງເທື່ອ ເວລາເຮົາໄປຢາມໝູ່ບ້ານ ຊາວບ້ານບາງຄົນກໍ່ບອກວ່າ "ເສຍໃຈຫຼາຍ, ພໍ່ຂ້ອຍຮູ້ຈັກນິທານຫຼາຍ ແລ້ວກໍ່ ຮູ້ຈັກເລື່ອງປະຫວັດແດ່, ນິທານແດ່, ເລື່ອງວັດທະນະທຳກໍ່ຮູ້ຫຼາຍ ແຕ່ວ່າເພິ່ນເສຍຊີວິດໄປແລ້ວ." ແລ້ວກໍ່ ເຂົາເຈົ້າເວົ້າວ່າ "ເອີ ພໍ່ເສຍແລ້ວ ກໍ່ບໍ່ມີຜູ້ໃດເວົ້າໄດ້ຂະໜາດນັ້ນ." ພວກເຮົາກໍ່ເສຍດາຍ, ນິທານມີຢູ່ໃນຫົວຂອງເຂົາເຈົ້າຊິ້ງນໍ, ຄົນມີ້ງບໍ່ໄດ້ຂຽນໄວ້, ບໍ່ໄດ້ອັດໄວ້ ສ່ວນຫຼາຍຢູ່ໃນສະໝອງ ເຂົາເຈົ້າຈື່ໄວ້ຊິ້ງ. ຜູ້ນັ້ນເສຍຊີວິດໄປແລ້ວ ນິທານແດ່, ປະຫວັດແດ່, ທັງໝົດໄປນຳ. ກໍ່ຮູ້ສຶກເສຍດາຍຫຼາຍ. ບາງເທື່ອ ພວກເຮົາອັດນິທານຂອງແມ່ເຖົ້າຜູ້ໜຶ່ງ ແຕ່ປີໜຶ່ງຜ່ານໄປ ກໍ່ກັບໄປຫາອີກ ແຕ່ແມ່ເຖົ້າຜູ້ນັ້ນເສຍຊີວິດແລ້ວກໍ່ມີ, ລູກຫຼານກໍ່ຖາມພວກເຮົາວ່າ "ເອີ ມີເທບບໍ່ ເຮົາຢາກຟັງ ເພາະວ່າແມ່ເຖົ້າເສຍຊີວິດໄປແລ້ວ." ເວລາພວກເຮົາອັດເທບໄວ້ ເຂົາເຈົ້າກໍ່ດີໃຈ. ດຽວນີ້ ຮູ້ສຶກວ່ານິທານປາກເປົ່ານີ້ຍັງມີຢູ່, ແຕ່ວ່າຖ້າຜູ້ທີ່ມັກເລົ່ານິທານເສຍຊີວິດໄປແລ້ວ, ນິທານທັງໝົດກໍ່ຈະຫາຍໄປ ເພາະວ່າເຂົາເຈົ້າຈື່ໄວ້ຊິ້ງ. ມັນບໍ່ເຫັນ, ຈັບບໍ່ໄດ້ ກໍ່ຮູ້ສຶກວ່າເສຍດາຍຫຼາຍ. ອັນນີ້ ບໍ່ພຽງແຕ່ກໍລະນີຊົນເຜົ່າມ້ຽງເທົ່ານັ້ນ ຊົນເຜົ່າອື່ນໆກໍ່ຄືກັນ, ຊົນເຜົ່າອື່ນໆກໍ່ເລົ່ານິທານຄືຊິມີຫຼາຍ. ແຕ່ວ່າຖ້າຫາຍໄປເທື່ອໜຶ່ງແລ້ວ ເອົາມາອີກບໍ່ໄດ້. ດຽວນີ້ ຂ້ອຍກໍ່ຮູ້ສຶກວ່າຕ້ອງຟ້າວເຮັດ ຖ້າຄົນທີ່ຮູ້ຫຼາຍເສຍຊີວິດໄປ ກໍ່ມັນຊ້າໂພດ. ດຽວນີ້ ສັງຄົມເລີ່ມປ່ຽນແປງໄປຫຼາຍຢູ່. ໝູ່ບ້ານທີ່ຢູ່ໃນພູເຂົາກໍ່ເລີ່ມມີໄຟຟ້າ ອັນນີ້ເປັນສິ່ງທີ່ດີນໍ. ແຕ່ຖ້າມີໄຟຟ້າ ອີກບໍ່ດົນ ກໍ່ຢາກມີໂທລະພາບ. ອັນນີ້ກໍ່ດີຄືກັນ. ແຕ່ວ່າຖ້າມີໂທລະພາບແລ້ວ ຕອນກາງຄືນ ກໍ່ເຂົາເຈົ້າເບິ່ງແຕ່ໂທລະພາບ ຫຼືວ່າເບິ່ງວີດີໂອ, ບໍ່ໄດ້ເລົ່ານິທານແລ້ວ ເພາະວ່າເດັກນ້ອຍກໍ່ມັກເບິ່ງໂທລະພາບ. ແລ້ວກໍ່ ຖ້າມີໂທລະພາບ ຜູ້ໃຫຍ່ກໍ່ຢາກເບິ່ງ. ອັນນີ້ ຂ້ອຍບໍ່ໄດ້ເວົ້າວ່າມັນບໍ່ດີນໍ. ແຕ່ວ່າຖ້າເບິ່ງໂທລະພາບຫຼາຍໂພດ ນິທານຂອງຕົວເອງກໍ່ອາດຈະຫາຍໄປ. ຕອນນີ້ ທຸກຄົນຍັງບໍ່ທັນຮູ້ສຶກຫຍັງນໍ. ແຕ່ວ່າ ອີກ 5 ປີ, 10 ປີຕໍ່ໜ້າ ເຖິງແມ່ນວ່າຢາກຈະຟັງນິທານກໍ່ຕາມ ໂອ້ ບໍ່ມີຜູ້ໃດຮູ້ນິທານ. ເຂົາເຈົ້າເບິ່ງໂທລະພາບຊິ້ງ ບໍ່ຈື່ນິທານ. ແຕ່ກໍ່ ບໍ່ທັນມີຫຍັງ, ແລ້ວກໍ່ ສັງຄົມກໍ່ແຄບນໍ. ບໍ່ຄ່ອຍມີໂອກາດຮູ້ຈັກສັງຄົມອື່ນ ກໍ່ອາດຮັກສານິທານຂອງຕົວເອງໄດ້. ແຕ່ດຽວນີ້ ສັງຄົມກວ້າງຂຶ້ນ, ແລ້ວກໍ່ ມີໂທລະພາບແດ່, ມີແນວອື່ນແດ່ ເຂົ້າມາ. ອັນນີ້ເປັນສິ່ງທີ່ດີ. ແຕ່ວ່າສຳລັບນິທານປາກເປົ່າ ພວກເຮົາພະຍາຍາມອັດສຽງໄວ້ໄວໆ. ຂ້ອຍຄຶດແນວນີ້. ຖ້າຫາຍໄປເທື່ອໜຶ່ງແລ້ວເອົາອີກບໍ່ໄດ້ ອັນນີ້ເສຍດາຍຫຼາຍ. ທີ່ຍີ່ປຸ່ນກໍ່ຄືກັນ, ຢູ່ຍີ່ປຸ່ນກໍ່ມີຊົນເຜົ່ານ້ອຍ ຊື່ວ່າ Ainu. ແຕ່ດຽວນີ້


ຄົນທີ່ເວົ້າພາສາ Ainu ກໍ່ມີໜ້ອຍ ເພາະວ່າມັນລືມແລ້ວ, ຖ້າລືມເທື່ອໜຶ່ງແລ້ວ ຢາກຈະເອົາມາອີກ ກໍ່ເອົາມາຍາກ. ຄິດວ່າຢູ່ລາວ ວັດທະນະທຳທີ່ບໍ່ເຫັນ ແຕ່ສຳຄັນກໍ່ມີຫຼາຍໆ. ແຕ່ວ່າມັນບໍ່ເຫັນ, ບໍ່ໄດ້ຂຽນໄວ້, ບໍ່ໄດ້ອັດໄວ້ ກໍ່ຖ້າເສຍເທື່ອໜຶ່ງແລ້ວ ມັນເອົາມາຍາກ. ຄິດວ່າຖ້າມີຜູ້ໃດສົນໃຈນິທານປາກເປົ່າ ຕ້ອງຊ່ວຍກັນຮັກສາໄວ້. ສຳລັບນິທານມົ້ງ ເຮົາກໍ່ພະຍາຍາມຮັກສາຢູ່ ເພາະວ່າຕົນເອງກໍ່ເວົ້າພາສາມົ້ງໄດ້. ແຕ່ວ່າຂ້ອຍຍັງບໍ່ຮູ້ພາສາອື່ນ ຖ້າຢາກຈະເກັບກຳຂໍ້ມູນນິທານປາກເປົ່າ ຕ້ອງຮູ້ພາສາຂອງເຂົາເຈົ້ານຳນໍ. ຖ້າມີຄົນສົນໃຈໃນການຮັກສານິທານປາກເປົ່າ ຊິມເຊີຍນໍ. ຢາກໃຫ້ເຂົາເຈົ້າເຮັດນໍ.

ຂ້ອຍລອງເລົ່ານິທານເບິ່ງ, ອັນນີ້ ນິທານມົ້ງ ເຮັດຈາກການປັກແສ່ວນໍ. ມື້ນີ້ແມ່ນເທື່ອທຳອິດທີ່ເວົ້າເປັນພາສາລາວ ບໍ່ແນ່ໃຈວ່າຊິເລົ່າໄດ້ບໍ່. ນານມາແລ້ວ ມີເສືອໂຕໜຶ່ງໄປພໍ້ກັບຄົນຄາກ ເສືອເວົ້າວ່າ "ຄົນຄາກເຈົ້າຢູ່ນີ້ເຮັດຫຍັງຫວະ." ຄົນຄາກຕອບວ່າ "ເອີ ຂ້ອຍຢູ່ນີ້ ຂ້ອຍຖ້າເຈົ້າແຫຼະ ຂ້ອຍຢາກກິນຕັບເສືອ." "ໂອ້ຍ ແທ້ຫວະ ຂ້ອຍກໍ່ຢາກກິນຄົນຄາກນ້ຳ ຄົນຄາກເຈົ້າກິນຕັບເສືອຫວະ. ໂອ້ຍ ຖ້າຈັ່ງຊັ້ນ ເຮົາຊິລອງຮາກເບິ່ງ ແມ່ນຫຍັງຢູ່ໃນທ້ອງ." ເສືອກໍ່ຮາກ ມີຄົນຄາກອອກມາ ຄົນຄາກກໍ່ຮາກນ້ຳໝາກໄມ້ ແລ້ວເສືອລອງຊິມເບິ່ງ ມັນຊິມຫຼາຍ "ໂອ້ຍ ເຈົ້າກິນຕັບເສືອແທ້ໆຫວະ ເຈົ້າເຮັດຈັ່ງໃດ ຈຶ່ງກິນຕັບເສືອໄດ້" "ໂອ້ຍ ເວລາເສືອອ້າປາກໃຫຍ່ໆ ຂອ້ຍກໍ່ກະໂດດລົງໄປ ໃນທ້ອງ. ກິນຕັບແລ້ວ ກະໂດດອອກມາອີກ " "ໂອ້ຍ ເຈົ້າໄວຂະໜາດນັ້ນຫວະ ເຮົາຊິແລ່ນແຂ່ງກັນ ເອົາບໍ່" ສອງໂຕກໍ່ໄປແມ່ນຳ້ນໍ ເສືອບອກວ່າ "ເອີ ເຮົາຊິຂ້າມແມ່ນຳ້ໄປ ຜູ້ໃດໄປຮອດກ່ອນ ຜູ້ນັ້ນ ຊະນະ. ຄົນຄາກ ເຈົ້າໄປກ່ອນສາ" ຄົນຄາກກໍ່ບອກວ່າ "ເອີ້ຍ ເສືອເຈົ້າໄປກ່ອນເດີ" ແລ້ວກໍ່ ເສືອວ່າ ຊິກະໂດດ ຄົນຄາກກໍ່ຄ່ອຍໆຄາບຫາງເສືອ "ໜຶ່ງ ສອງ ສາມ..." ຫາງເສືອແກວ່ງຄົນຄາກໄປພຸ້ນ. ຄົນຄາກໄດ້ມາກ່ອນເສືອ ແລ້ວບອກວ່າ "ຂ້ອຍຢູ່ນີ້ ຖ້າເຈົ້າເດ. ເມື່ອກີ້ນີ້ ຫາກໍ່ກິນເສືອໂຕໜຶ່ງແລ້ວ." ຄົນຄາກອ້າປາກໃຫ້ເສືອເຫັນປາກຂອງຕົນ ມີຂົນເສືອຕິດຢູ່. ເສືອກໍ່ຢ້ານ "ໂອ້ຍ ຄົນຄາກກິນເສືອ ຫວະ ຂ້ອຍຢ້ານ." ເສືອກໍ່ໜີໄປຂຶ້ນພູລົງພູ ຂຶ້ນພູລົງພູ ແລ້ວກໍ່ໄປພໍ້ແມວໂຕໜຶ່ງ. ແມວຖາມວ່າ "ເສືອເຈົ້າໄປໃສນະ." ເສືອຕອບວ່າ "ໂອ້ຍ ຂ້ອຍໜີຄົນຄາກ ຄົນຄາກຈະກິນຂ້ອຍ." ແມວບອກວ່າ "ບໍ່ເປັນຫຍັງດອກ ບໍ່ຕ້ອງຢ້ານດອກ. ເອີ ເຮົາກັບໄປເບິ່ງ." ເສືອບອກວ່າ "ໂອ້ຍ ຂ້ອຍຢ້ານໃດ໋." ແມວບອກວ່າ "ຖ້າຈັ່ງຊັ້ນ ເຮົາຊິເອົາຫາງມັດໄວ້ເດີ ເຮົາໄປນຳກັນເດີ" ເສືອກັບແມວກັບໄປຫາຄົນຄາກອີກ, ຄົນຄາກເຫັນສອງໂຕກັບມາ ກໍ່ຮູ້ສຶກຢ້ານ. "ໂອ້ຍ ເສືອກັບມາກິນຂ້ອຍໃດ໋." ຄົນຄາກກໍ່ກະໂດດລົງໄປໃນນ້ຳ. ບັດຊາມ... (ສຽງນ້ຳ) ມີສຽງໃຫຍ່ແລ້ວ, ເສືອບອກວ່າ "ໂອ້ຍ ຄົນຄາກຊິມາ." ເສືອກໍ່ຢ້ານແລ້ວ ກໍ່ແລ່ນໜີ ແລ່ນໄປ ແລ້ວກໍ່ ເບິ່ງແມວ "ເປັນຫຍັງ ແມວນອນຢູ່ນີ້. ໂອ້ຍ ແມວ ຂ້ອຍກໍ່ເມື່ອຍໃດ໋, ເຈົ້າ ຍັງນອນຫຼັບສະບາຍຢູ່ຫວະ." ເສືອເບິ່ງດີໆແລ້ວ ຮູ້ວ່າແມວຕາຍແລ້ວ. ເສືອກໍ່ຕັດສິນໃຈເອົາແມວໄປຝັງໃຫ້. ຝັງແລ້ວ ເສືອວ່າຊິແລ່ນເມືອບ້ານ ແຕ່ແມວກໍ່ຍັງດຶງເສືອຢູ່. "ໂອ້ຍ ເປັນຫຍັງ ຂ້ອຍກໍ່


ເມື່ອຍແລ້ວ ຝັ່ງເຈົ້າໃຫ້ ຍັ່ງດຶ່ງຂ້ອຍຫວະ ໂອ້ຍ ຂ້ອຍບໍ່ດີໃຈໃດ໋ ຂ້ອຍຈະກິນເຈົ້າມະ." ເສືອກໍ່ກິນ ແມວໄປ ແລ້ວກໍ່ເຫັນວ່າ "ໂອ້ຍ ຫາງເຮົານີ້ມັດໄວ້ນໍ..." ນິທານນີ້ຈົບ.




ປຶ້ມຮູບປັກແສ່ວ "ເສືອກັບຄັນຄາກ" (ໜ້າປົກ)



ຄັນຄາກຮາກນ້ຳໝາກໄມ້




ຄັນຄາກຄາບຫາງເສືອ



ຄັນຄາກໄປຮອດກ່ອນເສືອ



ເສືອໜີໄປ ຂຶ້ນພູລົ່ງພູ ຂຶ້ນພູລົ່ງພູ



ເສືອກັບແມວເອົາຫາງມັດໄວ້

ມື້ນີ້ ຂ້ອຍເລົ່ານິທານມົ້ງເລື່ອງໜຶ່ງໃຫ້ທ່ານທັງຫຼາຍຟັງນຳນໍ. ແຕ່ວັດທະນະທຳຂອງຊົນເຜົ່າ ມົ້ງ ກໍ່ບໍ່ແມ່ນນິທານຢ່າງດຽວນໍ. ຊົນເຜົ່າມົ້ງກໍ່ມີຝີມືທີ່ດີຫຼາຍແນວ ເຊັ່ນ ຝີມືປັກແສ່ວ ເປັນຕົ້ນ. ພວກ ເຮົາກໍ່ໄດ້ໄປຢາມໝູ່ບ້ານມົ້ງຂຽວຢູ່ຊຳເໜືອ ຫຼາຍເທື່ອແລ້ວ ເຫັນເຂົາເຈົ້າມີຝີມືດີທີ່ເຮັດກະໂປ່ງນໍ. ເວລາເຮັດກະໂປ່ງ ເຂົາເຈົ້າບໍ່ໄດ້ຊື້ຫຍັງ ມີແຕ່ເອົາຂອງທຳມະຊາດມາເຮັດກະໂປ່ງຊິ້ງ. ອັນນີ້ແມ່ນ ເສື້ອຂອງເຂົາເຈົ້ານໍ ກໍ່ງາມ ແຕ່ວ່າເວລາເຮັດກະໂປ່ງນີ້ ຄົນມົ້ງຂຽວບໍ່ຈຳເປັນຊື້ຫຍັງ. ເອົາວັດຖຸຈາກ ທຳມະຊາດ ເຮັດໄດ້ທັງໝົດ. ອັນນີ້ກໍ່ເອົາຕົ້ນປານມາເຮັດດ້າຍ. ເດັກນ້ອຍໆກໍ່ເລີ້ມຮຽນຈາກແມ່ ປັກ ແສ່ວນໍ. ຜູ້ຍິງມົ້ງກໍ່ມີຝີມືທີ່ດີຫຼາຍແນວນໍ. ດຽວນີ້ ອາດຈະລືມໄປວ່າ ແຕ່ກ້ີເຂົາເຈົ້າບໍ່ມີເງິນ ແຕ່ເອົາ ວັດຖຸຈາກທຳມະຊາດ ເຮັດໄດ້ທັງໝົດດ້ວຍຕົວເອງ. ແຕ່ດຽວນີ້ ເລີ້ມເສຍໄປເລື້ອຍໆ. ພວກເຮົາຍັງ ເຫັນຢູ່ວ່າແມ່ຖ່າຍທອດຝີມືໃຫ້ລູກສາວ. ແຕ່ຂ້ອຍຄິດວ່າໜ້າຈະເກັບຂໍ້ມູນໄວ້ ແລ້ວກໍ່ ຕ້ອງຮັກສາ ໄວ້. ຖ້າຝີມືຫາຍໄປ ແລະບໍ່ຮູ້ວິທີເຮັດ ກໍ່ໜ້າເສຍດາຍຄືກັນ. ເຂົາເຈົ້າເຮັດກະໂປ່ງກໍ່ໃຊ້ເວລາຫຼາຍ, ປີໜຶ່ງ ເຮັດໄດ້ ອັນໜຶ່ງ ຫຼືວ່າສອງອັນຊິ້ງ. ຈິງໆແລ້ວ ອັນນີ້ໃຊ້ເວລາຫຼາຍ ຕໍ່ໄປ ເຂົາເຈົ້າອາດຈະ ເລີ້ມໃສ່ສິ້ນ, ກະໂປ່ງຂອງເຂົາເຈົ້າກໍ່ອາດຈະຫາຍໄປ. ຝີມືທີ່ເຂົາເຈົ້າມີມາດົນແລ້ວກໍ່ອາດຈະຫາຍ ໄປ, ຂ້ອຍກໍ່ຢາກຈະເກັບຂໍ້ມູນໄວ້.



ກະໂປ່ງຂອງຊົນເຜົ່າມົ້ງ



ແມ່ຍິງຊົນເຜົ່າມົ້ງ

ເວລາເຮົາໄປຢາມໝູ່ບ້ານ ກໍ່ເອົາປຶ້ມໄປໃຫ້ເຂົາເຈົ້າເບິ່ງ ແລະເລົ່ານິທານໃຫ້ຟັງຢູ່. ເດັກ ນ້ອຍກໍ່ມັກຫຼາຍ. ເດັກນ້ອຍມັກນິທານຈາກປຶ້ມປະເທດອື່ນ ແຕ່ເດັກນ້ອຍກໍ່ມັກນິທານຂອງຕົວເອງຄື ກັນ. ຂ້ອຍເອງກໍ່ຄິດຢາກໃຫ້ເດັກນ້ອຍມົ້ງມີໂອກາດອ່ານປຶ້ມຫຼາຍຂຶ້ນ ເຮັດໃຫ້ເດັກນ້ອຍມີໂອກາດ

ຮຽນຈາກບ່ອນອື່ນຫຼາຍຂຶ້ນ ເຮັດໃຫ້ເດັກນ້ອຍມີຈິດໃຈກວ້າງຂຶ້ນ. ແຕ່ວ່າໃນເວລາດຽວກັນນີ້ ຕ້ອງ ພະຍາຍາມສຶນໃຈແລະຮຽນຈາກວັດທະນະທຳຕົວເອງນຳ. ຢາກໃຫ້ມີໂອກາດຟັງນິທານຂອງຕົວເອງ ແດ່, ຟັງນິທານຕ່າງປະເທດແດ່, ສຳຄັນຄືກັນ. ດຽວນີ້ ພວກເຮົາກໍ່ພະຍາຍາມມີກິດຈະກຳຫ້ອງ ສະມຸດຢູ່ເຂດພູດອຍ. ແຕ່ບໍ່ແມ່ນວ່າ ເອົານິທານມາຈາກຕ່າງປະເທດເທົ່ານັ້ນກໍ່ພໍແລ້ວ, ເພາະວ່າ ວັດທະນະທຳຂອງຕົວເອງນີ້ ມີສິ່ງທີ່ດີຫຼາຍແນວ. ຂ້ອຍກໍ່ໄດ້ຮຽນຈາກວັດທະນະທຳຂອງມົ້ງຫຼາຍໆ ແລະໄດ້ຮຽນຈາກເດັກນ້ອຍດ້ວຍ. ກໍ່ເຮັດໃຫ້ຂ້ອຍຮູ້ສຶກວ່າ ປະສົບການຂອງຕົວເອງກໍ່ກວ້າງຂຶ້ນ, ແລ້ວກໍ່ ເຮັດໃຫ້ໂລກຂອງຂ້ອຍກໍ່ກວ້າງຂຶ້ນ. ຂ້ອຍຄິດວ່າຢູ່ລາວນີ້ ວັດທະນະທຳເປັນຕາໜ້າສົນ ໃຈຫຼາຍໆ. ແຕ່ຂ້ອຍເອງກໍ່ຍັງບໍ່ເຄີຍໄປຫຼາຍແຂວງນຳ, ສ່ວນຫຼາຍ ໄປແຕ່ຊຽງຂວາງແລະຊຳເໜືອຊື່ໆ. ແຕ່ລະແຂວງ, ແຕ່ລະຊົນເຜົ່າມີວັດທະນະທຳໜ້າສົນໃຈ ແລະນິທານພື້ນເມືອງໜ້າສົນໃຈຫຼາຍໆ. ພວກເຮົາຄວນຈະພະຍາຍາມຊ່ວຍກັນເກັບໄວ້ ຫຼືວ່າຮັກສາໄວ້, ແລະຢາກໃຫ້ຜູ້ອື່ນຮູ້ນຳ. ບໍ່ຄື ປະເທດອື່ນໆ ປະເທດລາວຍັງຮັກສາວັດທະນະທຳອັນດີງາມຫຼາຍແນວຢູ່ ຍັງບໍ່ທັນໄດ້ເສຍຫາຍ ທັງໝົດນຳ. ຖ້າມີຜູ້ໃດສົນໃຈວັດທະນະທຳພື້ນເມືອງ ກໍ່ຢາກໃຫ້ຊ່ວຍກັນເຮັດ.

ຄິດວ່າຮອດເວລາແລ້ວ ກໍ່ຂໍຂອບໃຈຫຼາຍໆ. ຖ້າຂ້ອຍເວົ້າບໍ່ຄ່ອຍດີ ແລະທ່ານທັງຫຼາຍບໍ່ ຄ່ອຍເຂົ້າໃຈ ກໍ່ຂໍໂທດນຳ. ຂໍຂອບໃຈຫຼາຍໆ ທີ່ໃຫ້ມີໂອກາດເວົ້າມື້ນີ້ນຳ. ຂອບໃຈຫຼາຍໆເດີ້. (ຈົບ)

ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງໄດ້ເກີດຂຶ້ນມາຈາກໃສ ?
< ເສດຖະກິດຂອງລາວໃນສະຕະວັດທີ 16-17 >

Yoshiyuki MASUHARA
ນັກຄົ້ນຄວ້າ, ມະຫາວິທະຍາໄລກຽວໂຕ

ຂ້າພະເຈົ້າຊື່ວ່າ ມາຊູຮາລາ, ເມື່ອກີ້ນີ້ ອາຈານ (ພິທີກອນ) ກໍ່ໄດ້ອະທິບາຍວ່າ ຂ້າພະເຈົ້າຮຽນໜັງສືຢູ່ທີ່ມະຫາວິທະຍາໄລຊຽງໃໝ່ ປະເທດໄທ ເພື່ອຮຽນຕໍ່ປະລິນຍາໂທ ສາຂາປະຫວັດສາດ. ເພາະສະນັ້ນ ບາງທີ ເວົ້າປົນກັບພາສາໄທ ຂ້າພະເຈົ້າຈຶ່ງຂໍໂທດຫຼາຍໆ. (ເຖິງ ແມ່ນວ່າ ເວົ້າເປັນສຳນຽງພາສາໄທກໍ່ຕາມ) ບໍ່ໄດ້ຕັ້ງໃຈ. ຢູ່ທີ່ປະເທດໄທ ປະມານ 7 ປີ ດົນພໍສົມຄວນນໍ. (ເວລາ ຂ້າພະເຈົ້າເວົ້າພາສາລາວ) ບາງທີ ພາສາໄທລົບກວນພາສາລາວ ກໍ່ເລີຍເວົ້າປົນກັນເລີຍ. ຢ່າງໃດກໍ່ຕາມ ຂໍອະໄພລ່ວງໜ້າເດີ !

ຫົວຂໍ້ຂອງສຳມະນາມື້ນີ້ ຄື ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງ ໄດ້ເກີດຂຶ້ນມາຈາກໃສ? ອັນນີ້ເວົ້າເຖິງ ປະຫວັດສາດເສດຖະກິດຂອງລາວ ໂດຍສະເພາະແມ່ນໃນສະໄໝ ສະຕະວັດທີ 16 - 17. ແຕ່ວ່າປະຫວັດສາດລາວ ນັ້ນມີເນື້ອໃນຫຼາຍພໍສົມຄວນ, ຄວາມຈິງ ບໍ່ສາມາດເວົ້າໄດ້ທັງໝົດໃນເວລາຈຳກັດໃນເວລາ ໜຶ່ງຊົ່ວໂມງເທົ່ານັ້ນ. ມັນເປັນໄປບໍ່ໄດ້. ຖ້າມີທ່ານໃດສົນໃຈຂໍໃຫ້ອ່ານຜົນງານ ຂອງຂ້າພະເຈົ້າດ້ວຍ. (ທ່ານ Masuhara ຍົກ ປຶ້ມໃຫ້ເຫັນ). ແຕ່ອັນນີ້ກໍ່ຂຽນເປັນພາສາໄທອີກ. ຂໍໂທດຫຼາຍໆ. (ເບິ່ງ ໝາຍເຫດ* ໃນຕອນທ້າຍຂອງເອກະສານ)



ທ່ານ Yoshiyuki MASUHARA

ກ່ອນອື່ນ ຂ້າພະເຈົ້າຂໍອະທິບາຍວ່າ ເປັນຫຍັງ ຂ້າພະເຈົ້າສົນໃຈສຶກສາເລື່ອງນີ້. ບາງຄົນອະທິບາຍວ່າ ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງ ໃນສະໄໝເຈົ້າໄຊຍະເຊດຖາທິລາດແດ່ ເຈົ້າສຸລິຍະວົງສາທຳມິກະລາດແດ່ ໄດ້ມາຈາກຄວາມປີຊາສາມາດຂອງເຈົ້າຊີວິດ. ໝາຍຄວາມວ່າ ເຈົ້າຊີວິດເກ່ງ ກໍ່ເລີຍປະເທດຊາດກໍ່ຈະເລີນ. ອັນນີ້ກໍ່ເປັນວິທີໜຶ່ງ ເພື່ອອະທິບາຍປະຫວັດສາດນໍ. ຂ້າພະເຈົ້າບໍ່ໄດ້ປະຕິເສດຄວາມຄິດແບບນີ້ ແຕ່ຄິດວ່າໜ້າຈະຍັງມີວິທີການຢ່າງອື່ນ ທີ່ຈະອະທິບາຍຄວາມເປັນມາ ຫຼືເຫດຜົນຂອງຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງ. ຂ້າພະເຈົ້າຈຶ່ງສົນໃຈໃນເລື່ອງນີ້ ຕັ້ງແຕ່ 4 – 5 ປີກ່ອນມານີ້. ຫຼາຍຄົນບອກວ່າ ສະ

ໄໝສະຕະວັດທີ 16 – 17 ເປັນ “ຍຸກທອງຄຳ” ຂອງອານາຈັກລ້ານຊ້າງ. ຄວາມຈິງ ທາງດ້ານ ການເມືອງ ອານາຈັກລ້ານຊ້າງໃນຂະນະນັ້ນ ມີສະຖຽນລະພາບຄ່ອນຂ້າງຫຼາຍ, ທາງດ້ານວັດ ທະນະທຳ ກໍ່ມີຄວາມຈະເລີນກ້າວໜ້າຫຼາຍພໍສົມຄວນ ຕົວຢ່າງເຊັ່ນ ຢ່າງທີ່ທ່ານທັງຫຼາຍເຫັນຢູ່ ທີ່ນີ້ ວັດຊຽງທອງຫຼວງພະບາງ ແລະພະທາດຫຼວງວຽງຈັນ ກໍ່ໄດ້ສ້າງຂຶ້ນໃນສະຕະວັດທີ 16. ນີ້ຄື ສັນຍາລັກຂອງວັດທະນະທຳອານາຈັກລ້ານຊ້າງນໍ.



ວັດຊຽງທອງຫຼວງພະບາງ



ພະທາດຫຼວງວຽງຈັນ



Van Wuysthoff
(ທີ່ວັດປ່າແຄ ຫຼວງພະບາງ)



ເຈົ້າໄຊຍະເຊດຖາທິລາດ

ກ່ອນຈະອະທິບາຍເຫດຜົນ ຫຼືປັດໄຈຕ່າງໆ ທີ່ເຮັດໃຫ້ອານາຈັກລ້ານຊ້າງຈະເລີນຮຸ່ງ ເຮືອງນັ້ນ ພວກເຮົາທົບທວນປະຫວັດສາດລາວ ປະຫວັດສາດລ້ານຊ້າງເສຍກ່ອນນໍ. ບາງທ່ານ ອາດຈະລືມປະຫວັດສາດລາວວ່າໃນສະໄໝໃດ ມີຫຍັງເກີດຂຶ້ນ. ປະມານກາງສະຕະວັດທີ 14 ອັນນີ້ເປັນສະໄໝສະຖາປະນາອານາຈັກລ້ານຊ້າງ ໂດຍມີເຈົ້າຟ້າງຸ່ມເປັນກະສັດອົງທຳອິດຂອງ

ອານາຈັກລ້ານຊ້າງ. ແລ້ວກໍ່ ເຂົ້າສູ່ສະຕະວັດທີ 16. ໃນສະໄໝນັ້ນ ທາງດ້ານວັດທະນະທຳ ໂດຍ ສະເພາະ ສາດສະໜາພຸດ ກໍ່ຈະເລີນກ້າວໜ້າຫຼາຍທີ່ສຸດ ແລະລະຫວ່າງ ປີ 1548 ເຖິງ 1571 ເຈົ້າໄຊຍະເຊດຖາທິລາດຄອງລາດ. ອັນນີ້ເປັນຮູບປັ້ນ (ຂອງເຈົ້າໄຊຍະເຊດຖາທິລາດ) ຢູ່ຂ້າງ ໜ້າພະທາດຫຼວງວຽງຈັນ ທີ່ທຸກທ່ານຄົງຈະເຄີຍເຫັນ. ໃນປີ 1560 ເພີ່ນຍ້າຍລາຊະທານີ (ນະຄອນຫຼວງ) ຈາກຊຽງທອງ, ຊຽງທອງຄື ຊື່ເດີມຂອງຫຼວງພະບາງນໍ, ມາສູ່ວຽງຈັນ. ເຂົ້າສູ່ ສະຕະວັດທີ 17 ແລ້ວ, ລະຫວ່າງປີ 1637 ເຖິງ 94 ອັນນີ້ເປັນສະໄໝເຈົ້າສຸລິຍະວົງສາທຳມິກະ ລາດນໍ. ຂ້າພະເຈົ້າຂໍອະທິບາຍວ່າ ກາງສະຕະວັດທີ 17 ນັ້ນ ພໍ່ຄ້າຕ່າງຊາດເຂົ້າມາຫຼາຍໃນວຽງ ຈັນ ໂດຍສະເພາະແມ່ນ ວັນວຸດສະຕິບ (Van Wuysthoff). ວັນວຸດສະຕິບເປັນພໍ່ຄ້າຊາວໂຮລັງ (Holland) ຫຼື ຊາວ Dutch. ເພີ່ນມາຕິດຕໍ່ຄ້າຂາຍກັບເຈົ້າສຸລິຍະວົງສາທຳມິກະລາດ (ໃນປີ 1641). ປີຕໍ່ມາ ມາຣິຍາ ເລເຣຍ (Maria Leria) ນີ້ເປັນບາດຫຼວງອິຕາລີ ຄືນັກເຜີຍແຜ່ສາດສະ ໜາຄຣິສ ເຂົ້າມາປະເທດລາວ ແຕ່ຄວາມຈິງ ບໍ່ຄ່ອຍໄດ້ປະສົບຜົນສຳເລັດເທົ່າທີ່ຄວນ ໃນການ ເຜີຍແຜ່ສາດສະໜາຄຣິສ. ຢ່າງໃດກໍ່ຕາມ ຕັ້ງແຕ່ ປີ 1500 ຈົນຮອດ ປີ 1700 ນັ້ນ ເປັນສອງ ສະຕະວັດແຫ່ງຄວາມຈະເລີນຮຸ່ງເຮືອງ ຄື "ຍຸກທອງຄຳ" ຂອງອານາຈັກລ້ານຊ້າງ. ແຕ່ ຫຼັງຈາກ ເຂົ້າສູ່ສະຕະວັດທີ 18 ແລ້ວ ມີບັນຫາພາຍໃນເກີດຂຶ້ນເລື້ອຍໆ ຢ່າງເຊັ່ນ ປີ 1707 ວຽງຈັນກັບ ຫຼວງພະບາງແຍກອອກຈາກກັນ. ຕໍ່ມາ ໃນປີ 1713 ຈຳປາສັກກໍ່ແຍກອອກຈາກວຽງຈັນ. ໝາຍ ຄວາມວ່າ ອານາຈັກລ້ານຊ້າງແຍກອອກເປັນສາມອານາຈັກ ຄື ຫຼວງພະບາງ, ວຽງຈັນ ແລະ ຈຳປາສັກ. ແຕ່ໃນທີ່ສຸດ ປີ 1779 ສະຫຍາມຢຶດຄອງລາວ. ຕໍ່ມາ ໃນສະຕະວັດທີ 19 ຢ່າງທີ່ທຸກ ທ່ານຄົງຈະຮູ້ດີແລ້ວ ປີ 1827 - 28 ຄື ສົງຄາມເຈົ້າອະນຸເກີດຂຶ້ນ. ໃນທີ່ສຸດ ທ້າຍສະຕະວັດທີ 19 ດ້ວຍສັນຍາຝຣັ່ງ - ສະຫຍາມ ອານາຈັກລ້ານຊ້າງໄດ້ກາຍເປັນເມືອງຂຶ້ນຂອງປະເທດຝຣັ່ງ.

ມື້ນີ້ ຂ້າພະເຈົ້າຈະເວົ້າເຖິງສະໄໝຕັ້ງແຕ່ ປີ 1500 ຈົນເຖິງ ປີ 1700 ປະມານ 200 ປີ . ເມື່ອສຶກສາເສດຖະກິດຂອງລາວໃນສະໄໝສະຕະວັດທີ 16 - 17 ພວກເຮົາຈະເຮັດແນວໃດດີ ? ຂ້າພະເຈົ້າຄິດວ່າ ຕ້ອງສຶກສາເສດຖະກິດລາວຈາກທັງປັດໄຈພາຍນອກ ແລະປັດໄຈພາຍໃນ. ປັດໄຈພາຍນອກ ໝາຍຄວາມວ່າ ສະພາບເສດຖະກິດໃນໂລກ. ຂ້າພະເຈົ້າຄິດວ່າ ການສຶກສາ ປະຫວັດສາດລາວ ທີ່ຜ່ານມານັ້ນ ພວກເຮົາບໍ່ຄ່ອຍໄດ້ສົນໃຈເລື່ອງສາຍສຳພັນທາງເສດຖະກິດ ລະຫວ່າງອານາຈັກລ້ານຊ້າງກັບໂລກພາຍນອກ. ແຕ່ຄວາມຈິງ ສະພາບເສດຖະກິດໃນໂລກນີ້ ມີຜົນກະທົບກະເທືອນເຖິງພາຍໃນຫຼາຍພໍສົມຄວນ. ພວກເຮົາຈຶ່ງຕ້ອງສຶກສາສະພາບພາຍນອກ ກ່ອນ ຈາກນັ້ນ ຈະກັບມາສຶກສາປັດໄຈພາຍໃນນໍ. ສ່ວນປັດໄຈພາຍໃນນັ້ນ ປະກອບດ້ວຍສອງ ຢ່າງ ອັນທີໜຶ່ງແມ່ນຊັບພະຍາກອນທຳມະຊາດ. ຖ້າເວົ້າເຖິງເສດຖະກິດ ຕ້ອງສຶກສາວ່າ ໃນ ປະເທດລາວນີ້ ມີຊັບພະຍາກອນຫຍັງແດ່. ຢ່າງທີ່ອະທິບາຍຕາມຫຼັງ ໃນສະໄໝນັ້ນ ຊັບພະຍາ ກອນທຳມະຊາດເປັນປັດໄຈສຳຄັນຫຼາຍ. ປັດໄຈພາຍໃນອັນທີສອງ ຄື ການເຄື່ອນໄຫວທາງ ເສດຖະກິດ. ເຖິງແມ່ນວ່າມີຊັບພະຍາກອນ ທີ່ມີຄຸນຄ່າສູງມາກມາຍກໍ່ຕາມ ແຕ່ຖ້າພວກເຮົາບໍ່ ສາມາດເອົາຊັບພະຍາກອນທຳມະຊາດເຫຼົ່ານັ້ນມາສູ່ສູນກາງການຄ້າ ແລະຂາຍຕໍ່ຕ່າງປະເທດ

ໄດ້, ຄົງຈະບໍ່ມີຄວາມໝາຍ ແມ່ນບໍ່. ເພາະສະນັ້ນ ນອກຈາກມີຊັບພະຍາກອນທຳມະຊາດແລ້ວ ຕ້ອງມີການເຄື່ອນໄຫວທາງເສດຖະກິດ ຈະເວົ້າອີກແນວໜຶ່ງວ່າ "ລະບົບເສດຖະກິດ" ກໍ່ໄດ້. ຕໍ່ໄປນີ້ ພວກເຮົາຈະສຶກສາສະພາບເສດຖະກິດໃນໂລກໃນຂະນະນັ້ນເສຍກ່ອນ.

ນັກປະຫວັດສາດອາຊີອາຄະເນມັກໃຊ້ຄຳວ່າ "ຍຸກຂອງການຄ້າ" ມາອະທິບາຍປະຫວັດສາດອາຊີອາຄະເນໃນສະໄໝນັ້ນ. ຄຳສັບນີ້ ຫຼາຍຄົນຄົງຈະເຄີຍໄດ້ຍິນນໍ. ຍຸກຂອງການຄ້ານີ້ ພາສາອັງກິດ ເອີ້ນວ່າ "the age of commerce". ມັນເປັນແນວຄວາມຄິດຂອງອາຈານ Anthony Reid ຊາວອິດສະຕາລີນ. ເພິ່ນຊີ້ໃຫ້ເຫັນວ່າ ລະຫ່ວາງສະຕະວັດທີ 15 - 17 ນັ້ນ ການຄ້າລະຫ່ວາງຊາດໃນອາຊີອາຄະເນ ໄດ້ຂະຫຍາຍຕົວຢ່າງວ່ອງໄວ ຊຶ່ງບໍ່ເຄີຍປາກົດມາກ່ອນ. ຄວາມຈິງການຄ້າລະຫ່ວາງຊາດໃນອາຊີອາຄະເນນັ້ນ ບໍ່ພຽງແຕ່ໄດ້ຂະຫຍາຍຕົວເທົ່ານັ້ນ ອາຊີອາຄະເນເອງຍັງໄດ້ກາຍເປັນສູນກາງການຄ້າຂອງໂລກໃນສະໄໝນັ້ນກໍ່ວ່າໄດ້. ເພາະວ່າຊາວຢູລົບກໍ່ເຂົ້າມາຄ້າຂາຍຢູ່ທີ່ອາຊີອາຄະເນ ພໍ່ຄ້າຊາວຈີນແດ່, ຊາວຍີ່ປຸ່ນແດ່, ແມ້ແຕ່ຄົນ ທີ່ມາຈາກແຖບ ແມກຊິໂກ ຫຼືອາເມລິກາລາຕິນ ກໍ່ເອົາເງິນເຂົ້າມາປະເທດຟີລິປິນ ແລກປ່ຽນກັບສິນຄ້າຈີນແລ້ວ ຈຶ່ງກັບໄປປະເທດຂອງເຂົາເຈົ້າກໍ່ມີ. ສະແດງວ່າ ພໍ່ຄ້າຈາກທົ່ວໂລກເຂົ້າມາຄ້າຂາຍຢູ່ທີ່ອາຊີອາຄະເນ. ຍ້ອນວ່າຫຼັກຖານທາງປະຫວັດສາດ (ທີ່ກ່ຽວກັບເສດຖະກິດລາວໃນສະໄໝນັ້ນ) ຖືກຈຳກັດຫຼາຍ ມີໜ້ອຍຫຼາຍ. ຖ້າຫາກພວກເຮົາອ່ານແຕ່ຫຼັກຖານຢູ່ພາຍໃນປະເທດລາວເທົ່ານັ້ນຄົງຈະບໍ່ສາມາດສຶກສາ (ສະພາບເສດຖະກິດຂອງລ້ານຊ້າງ) ໂດຍລະອຽດໄດ້. ພວກເຮົາຈຶ່ງຕ້ອງສຶກສາບົດບັນທຶກຂອງຄົນຕ່າງຊາດ ທີ່ໄດ້ເຂົ້າມາອານາຈັກລ້ານຊ້າງ. ຫຼັກຖານອີກປະເພດໜຶ່ງຊຶ່ງພວກເຮົາຕ້ອງນຳໃຊ້ກໍ່ຄື ບົດບັນທຶກຂອງຄົນຕ່າງຊາດທີ່ໄດ້ເຂົ້າມາປະເທດໃກ້ຄຽງ ເຊັ່ນ ອະຍຸດທະຢາ ກຳປູເຈຍ ຫວຽດນາມ ແລະອື່ນໆ. ເພາະວ່າ ບາງເທື່ອເຂົາເຈົ້າບັນທຶກກ່ຽວກັບລາວໄດ້ໜ່ອຍໜຶ່ງ. ເວລາຂ້າພະເຈົ້າຂຽນບົດວິທະຍານິພົນປະລິນຍາໂທ ສົມມຸດວ່າ ອ່ານປຶ້ມໜຶ່ງຫົວ ຊຶ່ງເປັນບົດບັນທຶກຂອງຊາວຝຣັ່ງແດ່ ຊາວອັງກິດແດ່ ເວົ້າລວມ ຊາວຢູລົບນໍ. ເຖິງແມ່ນວ່າອຸດສາອ່ານຫົວໜຶ່ງແລ້ວກໍ່ຕາມ ໄດ້ຂໍ້ມູນກ່ຽວກັບການຄ້າລາວ ມີພຽງແຕ່ 3 ບັນທັດ ຫຼື 4 ບັນທັດເທົ່ານັ້ນ. ເພາະສະນັ້ນ ພວກເຮົາຕ້ອງຍອມຮັບວ່າ ການສຶກສາປະຫວັດສາດລາວນັ້ນຍາກລຳບາກ ແລະບໍ່ຄ່ອຍມີປະສິດທິພາບໃນການເຮັດວຽກນໍ. ແຕ່ນັກປະຫວັດສາດຕ້ອງອົດທົນ.

ຕໍ່ໄປນີ້ ຂ້າພະເຈົ້າຊີ້ໃຫ້ເຫັນວ່າ ຊາວຕ່າງຊາດໄດ້ບັນທຶກຜະລິດຕະຜົນສຳຄັນໆ ຂອງລາວວ່າແນວໃດແດ່. ກ່ອນທີ່ຈະສະແດງໃຫ້ເຫັນຂໍ້ມູນ ທີ່ຂ້າພະເຈົ້າໄດ້ສຶກສາມາ, ຂ້າພະເຈົ້າຢາກຈະຖາມນັກສຶກສາວ່າ ໃນສະໄໝນັ້ນ ຜະລິດຕະຜົນສຳຄັນໆຂອງອານາຈັກລ້ານຊ້າງມີຫຍັງແດ່...? ຖ້າຫາກວ່າສະໄໝປະຈຸບັນນໍ ສິນຄ້າຂາອອກທີ່ສຳຄັນທີ່ສຸດ ແມ່ນຫຍັງ...? ໄຟຟ້າ ແມ່ນບໍ. ແຕ່ວ່າສະໄໝນັ້ນ ໄຟຟ້າຍັງບໍ່ທັນມີເທື່ອ ຂາຍໄຟຟ້າບໍ່ໄດ້ນໍ. ຖ້າແນວນັ້ນ ແມ່ນຫຍັງເປັນສິນຄ້າສຳຄັນ. (ນັກສຶກສາຕອບວ່າ ເຄື່ອງປ່າຂອງດົງ ທອງຄຳ...) ນ້ອງຮຽນມາຈາກໃສ ?

ອານາຈັກລ້ານຊ້າງ. ແລ້ວກໍ່ ເຂົ້າສູ່ສະຕະວັດທີ 16. ໃນສະໄໝນັ້ນ ທາງດ້ານວັດທະນະທຳ ໂດຍ ສະເພາະ ສາດສະໜາພຸດ ກໍ່ຈະເລີນກ້າວໜ້າຫຼາຍທີ່ສຸດ ແລະລະຫວ່າງ ປີ 1548 ເຖິງ 1571 ເຈົ້າໄຊຍະເຊດຖາທິລາດຄອງລາດ. ອັນນີ້ເປັນຮູບປັ້ນ (ຂອງເຈົ້າໄຊຍະເຊດຖາທິລາດ) ຢູ່ຂ້າງ ໜ້າພະທາດຫຼວງວຽງຈັນ ທີ່ທຸກທ່ານຄົງຈະເຄີຍເຫັນ. ໃນປີ 1560 ເພີ່ນຍ້າຍລາຊະທານີ (ນະຄອນຫຼວງ) ຈາກຊຽງທອງ, ຊຽງທອງຄື ຊື່ເດີມຂອງຫຼວງພະບາງນໍ, ມາສູ່ວຽງຈັນ. ເຂົ້າສູ່ ສະຕະວັດທີ 17 ແລ້ວ, ລະຫວ່າງປີ 1637 ເຖິງ 94 ອັນນີ້ເປັນສະໄໝເຈົ້າສຸລິຍະວົງສາທຳມິກະ ລາດນໍ. ຂ້າພະເຈົ້າຂໍອະທິບາຍວ່າ ກາງສະຕະວັດທີ 17 ນັ້ນ ພໍ່ຄ້າຕ່າງຊາດເຂົ້າມາຫຼາຍໃນວຽງ ຈັນ ໂດຍສະເພາະແມ່ນ ວັນອຸດສະຕິບ (Van Wuysthoff). ວັນອຸດສະຕິບເປັນພໍ່ຄ້າຊາວໂຮລັງ (Holland) ຫຼື ຊາວ Dutch. ເພີ່ນມາຕິດຕໍ່ຄ້າຂາຍກັບເຈົ້າສຸລິຍະວົງສາທຳມິກະລາດ (ໃນປີ 1641). ປີຕໍ່ມາ ມາຣິອາ ເລເຣຍ (Maria Leria) ນີ້ເປັນບາດຫຼວງອິຕາລີ ຄືນັກເຜີຍແຜ່ສາດສະ ໜາຄຣິສ ເຂົ້າມາປະເທດລາວ ແຕ່ຄວາມຈິງ ບໍ່ຄ່ອຍໄດ້ປະສົບຜົນສຳເລັດເທົ່າທີ່ຄວນ ໃນການ ເຜີຍແຜ່ສາດສະໜາຄຣິສ. ຢ່າງໃດກໍ່ຕາມ ເຖິງແຕ່ ປີ 1500 ຈົນຮອດ ປີ 1700 ນັ້ນ ເປັນສອງ ສະຕະວັດແຫ່ງຄວາມຈະເລີນຮຸ່ງເຮືອງ ຄື "ຍຸກທອງຄຳ" ຂອງອານາຈັກລ້ານຊ້າງ. ແຕ່ ຫຼັງຈາກ ເຂົ້າສູ່ສະຕະວັດທີ 18 ແລ້ວ ມີບັນຫາພາຍໃນເກີດຂຶ້ນເລື້ອຍໆ ຢ່າງເຊັ່ນ ປີ 1707 ວຽງຈັນກັບ ຫຼວງພະບາງແຍກອອກຈາກກັນ. ຕໍ່ມາ ໃນປີ 1713 ຈຳປາສັກກໍ່ແຍກອອກຈາກວຽງຈັນ. ໝາຍ ຄວາມວ່າ ອານາຈັກລ້ານຊ້າງແຍກອອກເປັນສາມອານາຈັກ ຄື ຫຼວງພະບາງ, ວຽງຈັນ ແລະ ຈຳປາສັກ. ແຕ່ໃນທີ່ສຸດ ປີ 1779 ສະຫຍາມຢຶດຄອງລາວ. ຕໍ່ມາ ໃນສະຕະວັດທີ 19 ຢ່າງທີ່ທຸກ ທ່ານຄົງຈະຮູ້ດີແລ້ວ ປີ 1827 - 28 ຄື ສົງຄາມເຈົ້າອະນຸເກີດຂຶ້ນ. ໃນທີ່ສຸດ ທ້າຍສະຕະວັດທີ 19 ດ້ວຍສັນຍາຝຣັ່ງ - ສະຫຍາມ ອານາຈັກລ້ານຊ້າງໄດ້ກາຍເປັນເມືອງຂຶ້ນຂອງປະເທດຝຣັ່ງ.

ມື້ນີ້ ຂ້າພະເຈົ້າຈະເວົ້າເຖິງສະໄໝຕັ້ງແຕ່ ປີ 1500 ຈົນເຖິງ ປີ 1700 ປະມານ 200 ປີ . ເມື່ອສຶກສາເສດຖະກິດຂອງລາວໃນສະໄໝສະຕະວັດທີ 16 - 17 ພວກເຮົາຈະເຮັດແນວໃດດີ ? ຂ້າພະເຈົ້າຄິດວ່າ ຕ້ອງສຶກສາເສດຖະກິດລາວຈາກທັງປັດໄຈພາຍນອກ ແລະປັດໄຈພາຍໃນ. ປັດໄຈພາຍນອກ ໝາຍຄວາມວ່າ ສະພາບເສດຖະກິດໃນໂລກ. ຂ້າພະເຈົ້າຄິດວ່າ ການສຶກສາ ປະຫວັດສາດລາວ ທີ່ຜ່ານມານັ້ນ ພວກເຮົາບໍ່ຄ່ອຍໄດ້ສົນໃຈເລື່ອງສາຍສຳພັນທາງເສດຖະກິດ ລະຫວ່າງອານາຈັກລ້ານຊ້າງກັບໂລກພາຍນອກ. ແຕ່ຄວາມຈິງ ສະພາບເສດຖະກິດໃນໂລກນີ້ ມີຜົນກະທົບກະເທືອນເຖິງພາຍໃນຫຼາຍພໍສົມຄວນ. ພວກເຮົາຈຶ່ງຕ້ອງສຶກສາສະພາບພາຍນອກ ກ່ອນ ຈາກນັ້ນ ຈະກັບມາສຶກສາປັດໄຈພາຍໃນນໍ. ສ່ວນປັດໄຈພາຍໃນນັ້ນ ປະກອບດ້ວຍສອງ ຢ່າງ ອັນທີໜຶ່ງແມ່ນຊັບພະຍາກອນທຳມະຊາດ. ຖ້າເວົ້າເຖິງເສດຖະກິດ ຕ້ອງສຶກສາວ່າ ໃນ ປະເທດລາວນີ້ ມີຊັບພະຍາກອນຫຍັງແດ່. ຢ່າງທີ່ອະທິບາຍຕາມຫຼັງ ໃນສະໄໝນັ້ນ ຊັບພະຍາ ກອນທຳມະຊາດເປັນປັດໄຈສຳຄັນຫຼາຍ. ປັດໄຈພາຍໃນອັນທີສອງ ຄື ການເຄື່ອນໄຫວທາງ ເສດຖະກິດ. ເຖິງແມ່ນວ່າມີຊັບພະຍາກອນ ທີ່ມີຄຸນຄ່າສູງມາກມາຍກໍ່ຕາມ ແຕ່ຖ້າພວກເຮົາບໍ່ ສາມາດເອົາຊັບພະຍາກອນທຳມະຊາດເຫຼົ່ານັ້ນມາສູ່ສູນກາງການຄ້າ ແລະຂາຍຕໍ່ຕ່າງປະເທດ

ໄດ້, ຄົງຈະບໍ່ມີຄວາມໝາຍ ແມ່ນບໍ. ເພາະສະນັ້ນ ນອກຈາກມີຊັບພະຍາກອນທຳມະຊາດແລ້ວ ຕ້ອງມີການເຄື່ອນໄຫວທາງເສດຖະກິດ ຈະເວົ້າອີກແນວໜຶ່ງວ່າ "ລະບົບເສດຖະກິດ" ກໍ່ໄດ້. ຕໍ່ໄປນີ້ ພວກເຮົາຈະສຶກສາສະພາບເສດຖະກິດໃນໂລກໃນຂະນະນັ້ນເສຍກ່ອນ.

ນັກປະຫວັດສາດອາຊີອາຄະເນມັກໃຊ້ຄຳວ່າ "ຍຸກຂອງການຄ້າ" ມາອະທິບາຍປະຫວັດສາດອາຊີອາຄະເນໃນສະໄໝນັ້ນ. ຄຳສັບນີ້ ຫຼາຍຄົນຄົງຈະເຄີຍໄດ້ຍິນນຳ. ຍຸກຂອງການຄ້ານີ້ ພາສາອັງກິດ ເອີ້ນວ່າ "the age of commerce". ມັນເປັນແນວຄວາມຄິດຂອງອາຈານ Anthony Reid ຊາວອົດສະຕາລີນ. ເພິ່ນຊີ້ໃຫ້ເຫັນວ່າ ລະຫ່ວາງສະຕະວັດທີ 15 - 17 ນັ້ນ ການຄ້າລະຫ່ວາງຊາດໃນອາຊີອາຄະເນ ໄດ້ຂະຫຍາຍຕົວຢ່າງວ່ອງໄວ ຊຶ່ງບໍ່ເຄີຍປາກົດມາກ່ອນ. ຄວາມຈິງການຄ້າລະຫ່ວາງຊາດໃນອາຊີອາຄະເນນັ້ນ ບໍ່ພຽງແຕ່ໄດ້ຂະຫຍາຍຕົວເທົ່ານັ້ນ ອາຊີອາຄະເນເອງຍັງໄດ້ກາຍເປັນສູນກາງການຄ້າຂອງໂລກໃນສະໄໝນັ້ນກໍ່ວ່າໄດ້. ເພາະວ່າຊາວຢູລົບກໍ່ເຂົ້າມາຄ້າຂາຍຢູ່ທີ່ອາຊີອາຄະເນ ພໍ່ຄ້າຊາວຈີນແດ່, ຊາວຍີ່ປຸ່ນແດ່, ແມ້ແຕ່ຄົນ ທີ່ມາຈາກແຖວແມກຊິໂກ ຫຼືອາເມລິກາລາຕິນ ກໍ່ເອົາເງິນເຂົ້າມາປະເທດຟີລິປິນ ແລກປ່ຽນກັບສິນຄ້າຈີນແລ້ວຈຶ່ງກັບໄປປະເທດຂອງເຂົາເຈົ້າກໍ່ມີ. ສະແດງວ່າ ພໍ່ຄ້າຈາກທົ່ວໂລກເຂົ້າມາຄ້າຂາຍຢູ່ທີ່ອາຊີອາຄະເນ. ຍ້ອນວ່າຫຼັກຖານທາງປະຫວັດສາດ (ທີ່ກ່ຽວກັບເສດຖະກິດລາວໃນສະໄໝນັ້ນ) ຖືກຈຳກັດຫຼາຍ ມີໜ້ອຍຫຼາຍ. ຖ້າຫາກພວກເຮົາອ່ານແຕ່ຫຼັກຖານຢູ່ພາຍໃນປະເທດລາວເທົ່ານັ້ນຄົງຈະບໍ່ສາມາດສຶກສາ (ສະພາບເສດຖະກິດຂອງລ້ານຊ້າງ) ໂດຍລະອຽດໄດ້. ພວກເຮົາຈຶ່ງຕ້ອງສຶກສາບົດບັນທຶກຂອງຄົນຕ່າງຊາດ ທີ່ໄດ້ເຂົ້າມາອາມາຈັກລ້ານຊ້າງ. ຫຼັກຖານອີກປະເພດໜຶ່ງຊຶ່ງພວກເຮົາຕ້ອງນຳໃຊ້ກໍ່ຄື ບົດບັນທຶກຂອງຄົນຕ່າງຊາດທີ່ໄດ້ເຂົ້າມາປະເທດໃກ້ຄຽງ ເຊັ່ນ ອະຢຸດທະຢາ ກຳປູເຈຍ ຫວຽດນາມ ແລະອື່ນໆ. ເພາະວ່າ ບາງເທື່ອເຂົາເຈົ້າບັນທຶກກ່ຽວກັບລາວໄດ້ໜ່ອຍໜຶ່ງ. ເວລາຂ້າພະເຈົ້າຂຽນບົດວິທະຍານິພົນປະລິນຍາໂທ ສົມມຸດວ່າ ອ່ານປຶ້ມໜຶ່ງຫົວ ຊຶ່ງເປັນບົດບັນທຶກຂອງຊາວຝຣັ່ງແດ່ ຊາວອັງກິດແດ່ ເວົ້າລວມ ຊາວຢູລົບນຳ. ເຖິງແມ່ນວ່າອຸດສາອ່ານຫົວໜຶ່ງແລ້ວກໍ່ຕາມ ໄດ້ຂໍ້ມູນກ່ຽວກັບການຄ້າລາວ ມີພຽງແຕ່ 3 ບັນທັດ ຫຼື 4 ບັນທັດເທົ່ານັ້ນ. ເພາະສະນັ້ນ ພວກເຮົາຕ້ອງຍອມຮັບວ່າ ການສຶກສາປະຫວັດສາດລາວນັ້ນຍາກລຳບາກ ແລະບໍ່ຄ່ອຍມີປະສິດທິພາບໃນການເຮັດວຽກນຳ. ແຕ່ນັກປະຫວັດສາດຕ້ອງອົດທົນ.

ຕໍ່ໄປນີ້ ຂ້າພະເຈົ້າຊີ້ໃຫ້ເຫັນວ່າ ຊາວຕ່າງຊາດໄດ້ບັນທຶກຜະລິດຕະຜົນສຳຄັນໆ ຂອງລາວວ່າແນວໃດແດ່. ກ່ອນທີ່ຈະສະແດງໃຫ້ເຫັນຂໍ້ມູນ ທີ່ຂ້າພະເຈົ້າໄດ້ສຶກສາມາ, ຂ້າພະເຈົ້າຢາກຈະຖາມນັກສຶກສາວ່າ ໃນສະໄໝນັ້ນ ຜະລິດຕະຜົນສຳຄັນໆຂອງອາມາຈັກລ້ານຊ້າງມີຫຍັງແດ່...? ຖ້າຫາກວ່າສະໄໝປະຈຸບັນນຳ ສິນຄ້າຂາອອກທີ່ສຳຄັນທີ່ສຸດ ແມ່ນຫຍັງ...? ໄຟຟ້າ ແມ່ນບໍ. ແຕ່ວ່າສະໄໝນັ້ນ ໄຟຟ້າຍັງບໍ່ທັນມີເທື່ອ ຂາຍໄຟຟ້າບໍ່ໄດ້ນຳ. ຖ້າແນວນັ້ນ ແມ່ນຫຍັງເປັນສິນຄ້າສຳຄັນ. (ນັກສຶກສາຕອບວ່າ ເຄື່ອງປ່າຂອງດົງ ທອງຄຳ...) ນ້ອງຮຽນມາຈາກໃສ ?

(ตอบว่า มาจากพากวิชาประหวัดชาด) เก่งหลาย, รู้จักหมดบ๋. มื้นี้ ข้าพะเจ้าจะกับบ้านเลียได้บ๋ (ผู้เข้าร่วมสำมะนาก่ำหัวเลาะ) บ่ต้องเว้าหยังเลีย. (ถามนักสึกสาอีกว่า) ยิกตัวอย่างได้บ๋ ? ในเถื่องป่าของดิง มีหยังแด่ ? (นักสึกสาตอบว่า ยาน ขี้ถั่ง งาช้าง...) น้องก่ำมาจากประหวัดสาด แม่นบ่. ข้าพะเจ้าอยากจะกับบ้านแล้ว... (ผู้เข้าร่วมสำมะนาหัวเลาะอีกเที่อหนึ่ง)


ອັນນີ້ ຄື ຕາຕະລາງຜະລິດຕະຜົນສຳຄັນໆຂອງອານາຈັກລ້ານຊ້າງໃນສະຕະວັດທີ 16-17 ຊຶ່ງຂ້າພະເຈົ້າໄດ້ເກັບຂໍ້ມູນຈາກບົດບັນທຶກຕ່າງໆຂອງຊາວຕະເວັນຕົກ. ເມື່ອກີ້ນີ້ ນັກສຶກສາກ່ໍບອກວ່າ ເຄື່ອງປ່າຂອງດິງ ໂດຍສະເພາະແມ່ນ ຍານ ຂີ້ຄັ່ງ ງາຊ້າງ ແລະອື່ນໆ ເປັນສິນຄ້າສຳຄັນໃນສະໄໝນັ້ນ. ຄິດວ່ານັກສຶກສາກ່ໍໄດ້ຂໍ້ມູນມາຈາກບົດບັນທຶກຂອງ Van Wuysthoff ທີ່ໄດ້ເຫັນໃນຕາຕະລາງນີ້. ບຸກຄົນນີ້ເປັນບຸກຄົນສຳຄັນໃນປະຫວັດສາດລາວນ໋. ແຕ່ນອກຈາກນີ້ ໃນຊຸມປີ 1550 Gaspar da Cruz ຊຶ່ງພັກຢູ່ກຳປູເຈຍນ໋ ເພິ່ນກ່ໍບັນທຶກໄວ້ວ່າ ລາຍການຜະລິດຕະຜົນສຳຄັນມີຄື ທອງຄຳ ແລະຊະມົດ. ເຄີຍໄດ້ຍິນຄຳວ່າ “ຊະມົດ” ບ໋ ? ບາງທ່ານອາດຈະບ່ໍເຄີຍໄດ້ຍິນນ໋. ຈັກໜ່ອຍ ຊິອະທິບາຍໃຫ້. Dutch Papers ອັນນີ້ຄື ເອກະສານລວບລວມບົດບັນທຶກຂອງເຈົ້າໜ້າທີ່ຂອງບໍລິສັດອິນເດຍຕາເວັນອອກ ປະເທດ Dutch ນ໋. ຢູ່ໃນເອກະສານນີ້ ເຂົາເຈົ້າບັນທຶກໄວ້ວ່າ ທອງຄຳ, ຍານ, ຂີ້ຄັ່ງ ເປັນສິນຄ້າສຳຄັນ. Van Wuysthoff ນີ້ ໄດ້ບັນທຶກຫຼາຍພໍສົມຄວນນ໋, ທອງຄຳ, ຍານ, ຊະມົດ, ນໍແຮດ, ຂີ້ຄັ່ງ, ໜັງກວາງ, ຝ້າຍ, ຄ້ອງເຮັດດ້ວຍທອງແດງ, ຜ້າໄໝ. ຕ່ໍໄປ G. Maria Leria ນ໋. ເພິ່ນເປັນບາດຫຼວງຊາວອິຕາລີ ແລະເດີນທາງມາຮອດວຽງຈັນແທ້ໆ. ແຕ່ຜູ້ບັນທຶກນັ້ນເປັນ G.F.de Marini ຕ່າງຫາກ. ຢ່າງໃດກ່ໍຕາມ ເພິ່ນໄດ້ບັນທຶກໄວ້ວ່າ ມີ ທອງຄຳ, ຍານ, ຊະມົດ, ນໍແຮດ, ງາຊ້າງ, ນ້ຳເຜິ້ງ, ຂີ້ເຜິ້ງ, ເງິນ, ເຫຼັກ, ຊີ້ນ, ກ໋ວ, ຝ້າຍ. ແລ້ວກ່ໍໃນຊຸມປີ 1640 Fransisco ຊຶ່ງພັກຢູ່ພາກກາງຂອງຫວຽດນາມນ໋. ເພິ່ນກ່ໍບອກໄວ້ວ່າ ຢູ່ທີ່ລາວມີມາດ. ຂ້າພະເຈົ້າສົງໄສຢູ່ວ່າ ມາດອາດຈະເປັນວັດຖຸດິບ ສຳລັບຜະລິດດິນປືນ (ອາຈານພາກວິຊາປະຫວັດສາດຊີ້ບອກວ່າ ເປັນພາສາລາວ ເອີ້ນວ່າ“ໝໍ້ປືນ”). ຍ້ອນວ່າໃນສະຕະວັດທີ 17 ຢູ່ທີ່ຫວຽດນາມ ເລີ້ມມີການຜະລິດປືນແລ້ວ. ສຸດທ້າຍ A. de Chaumout ແລະ Nicolas Gervaise ນ໋ ທັງສອງຄົນນີ້ກ່ໍພັກຢູ່ທີ່ອະຍຸດທະຢາໃນທ້າຍສະຕະວັດທີ 17, ມີ ທອງຄຳ, ຍານ, ຊະມົດ, ນໍແຮດ, ງາຊ້າງ, ທັບທິມ, ກາລະບູນ, ໜັງຄວາຍ, ໜັງກວາງ.

ສະຫຼຸບແລ້ວ ສິນຄ້າຂາອອກສຳຄັນໃນຂະນະນັ້ນ ສາມາດແບ່ງອອກເປັນສອງປະເພດໃຫຍ່ໆ (1) **ໂລຫະປະເພດຕ່າງໆຄື: ທອງຄຳ, ເງິນ, ເຫຼັກ, ຊີ້ນ, ກ໋ວ** ແລະອື່ນໆ. (2) **ເຄື່ອງປ່າຂອງດິງຄື: ຍານ, ຂີ້ຄັ່ງ, ນໍແຮດ, ງາຊ້າງ, ໜັງກວາງ ຊະມົດ** ແລະອື່ນໆ. Van Wuysthoff ໄດ້ບັນທຶກໄວ້ວ່າ ລາຍໄດ້ຂອງອານາຈັກລ້ານຊ້າງໃນສະໄໝນັ້ນ ໄດ້ມາຈາກ ຂີ້ຄັ່ງ, ຍານ ແລະ ທອງຄຳ. ກ່ຽວກັບສິນຄ້າສຳຄັນສາມຢ່າງດັ່ງກ່າວ ຂ້າພະເຈົ້າຂໍອະທິບາຍເພີ່ມຕື່ມໜ່ອຍໜຶ່ງນ໋. G.F.de Marini ບັນທຶກໄວ້ວ່າ “ທອງຄຳບ່ໍໄດ້ຂຸດເອົາຈາກບ່ໍແຮ່ ແຕ່ໄດ້ຮ່ອນເອົາຈາກແມ່ນ້ຳສາຍຕ່າງໆໃນຮູບແບບຊາຍຄຳ” ດຽວນີ້ ປະຊາຊົນຍັງເຮັດແບບນີ້ຢູ່ແຄມແມ່ນ້ຳຂອງ ແມ່ນບ໋.

ສາຍຕ່າງໆໃນຮູບແບບຊາຍຄຳ" ດຽວນີ້ ປະຊາຊົນຍັງເຮັດແບບນີ້ຢູ່ແຄມແມ່ນ້ຳຂອງ ແມ່ນບໍ່. ຮູບນີ້ໄດ້ຖ່າຍຢູ່ທີ່ເມືອງຈອມເພັດ ແຂວງຫຼວງພະບາງ ຄິດວ່າໃນສະໄໝກ່ອນ ຄື 300 ປີ 400 ປີຫຼັງກໍ່ຄົງຈະເຮັດແບບນີ້ນໍ. ຕໍ່ໄປ ອັນນີ້ເປັນຮູບຂອງຕົ້ນຍານ. Marini ໄດ້ບັນທຶກໄວ້ວ່າ "ຈຸດເດັ່ນທີ່ສຳຄັນທີ່ສຸດຂອງອານາຈັກລ້ານຊ້າງ ກໍ່ຄື ມີຍານເປັນປະລິມານຫຼາຍ ຊຶ່ງຖືກັນວ່າ ມີຄຸນນະພາບດີທີ່ສຸດໃນຕາເວັນອອກ". ປະມານເດືອນ 9 ຫຼື ເດືອນ 10 ຊາວບ້ານ ບັກເປືອກໄມ້ແນວນີ້ ແລ້ວກໍ່ ຍານກໍ່ຊຶມອອກມາໃນປະມານ ເດືອນ 3 ຫຼື ເດືອນ 4. ຈາກນັ້ນ ຊາວບ້ານເກັບຍານເອົາໄປຂາຍ. ເຂົາເຈົ້າຜະລິດນ້ຳຫອມນໍ. ປະຈຸບັນ ສ່ວນຫຼາຍແມ່ນສົ່ງໄປຂາຍຢູ່ປະເທດຝຣັ່ງ. ອັນນີ້ ຄື ຂີ້ຄັ່ງ ເປັນຢາງສີເຫຼືອງ ຊຶ່ງແມງຄັ່ງຂັບຖ່າຍຢູ່ກິ່ງໄມ້ ໃຊ້ຂີ້ຄັ່ງອັດເຂົ້າດ້ວມພ້າໃຫ້ແໜ້ນ ຫຼື ຍ້ອມຝ້າຍໃຫ້ສີແດງ. ຊາວບ້ານບາງຄົນກໍ່ຍັງໃຊ້ກັນຢູ່. ຮູບນີ້ໄດ້ຖ່າຍຢູ່ທີ່ເມືອງນ້ຳບາກ ແຂວງຫຼວງພະບາງ. ທີ່ນີ້ ຂ້າພະເຈົ້າຂໍອະທິບາຍເຖິງຊະມົດໜ່ອຍໜຶ່ງ. ຊະມົດ ຄື ເຄື່ອງຫອມຊະນິດໜຶ່ງ ຊຶ່ງໄດ້ຈາກຕ່ອມກິ່ນຢູ່ບໍລິເວນທ້ອງຂອງກວາງຊະມົດປ່າຕົວຜູ້ ກວາງຊະມົດປ່າມີການກະຈາຍພັນຢູ່ໃນພາກໃຕ້ຂອງຈີນ ແລະພາກເໜືອຂອງຫວຽດນາມ. ຂ້າພະເຈົ້າຄິດວ່າໃນສະໄໝນັ້ນ ຊະມົດບໍ່ເປັນສິນຄ້າຂອງລາວແທ້ໆ. ມັນຄົງຈະໄດ້ມາຈາກຈີນເປັນສ່ວນໃຫຍ່. ຍ້ອນວ່າ Van Wuysthoff ໄດ້ບັນທຶກໄວ້ວ່າ ພໍ່ຄ້າຈາກຈີນເອົາຊະມົດລົງມາຫຼວງພະບາງແລ້ວ ລົງມາວຽງຈັນອີກ. ຄິດວ່າຢູ່ໃນປະເທດລາວ ໃນສະໄໝນັ້ນ ເຖິງແມ່ນວ່າມີຊະມົດກໍ່ຕາມ ແຕ່ຄົງມີໜ້ອຍ. ສ່ວນໃຫຍ່ ໄດ້ມາຈາກຈີນ ແລ້ວສົ່ງໄປ ອະຍຸດທະຢາແດ່, ພະມ້າແດ່, ແລ້ວກໍ່ ສົ່ງໄປຂາຍຢູ່ທີ່ອິນເດຍ, ຕາເວັນອອກກາງ ແລະຢູລົບນໍ.




ຮ່ອນທອງຄຳ (ທີ່ເມືອງຈອມເພັດ ແຂວງຫຼວງພະບາງ)





ຂີ້ຄ້າ

(ທີ່ເມືອງນ້ຳບາກແຂວງຫຼວງພະບາງ)



ກວາງຊະມົດປ່າ

© ສຳນັກງານກອງທຶນອະນຸລັກສັດປ່າໂລກ
ແຫ່ງປະເທດໄທ, 2000.

ພວກເຮົາພິຈາລະນາລາຍການສິນຄ້າສຳຄັນໆຂອງລາວແລ້ວ ອາດຈະສາມາດສະຫຼຸບລັກສະນະພິເສດຂອງສິນຄ້າເຫຼົ່ານັ້ນໄດ້ວ່າ

(1) **ມີຄຸນຄ່າສູງ ແຕ່ກິນເນື້ອທີ່ນ້ອຍ:** ເພາະວ່າອານາຈັກລ້ານຊ້າງບໍ່ມີທະເລ ຈຶ່ງມີຂໍ້ຈຳກັດທາງດ້ານຄົມມະນາຄົມ ອັນນີ້ບໍ່ຄືກັນກັບອະຢຸດທະຢາ ກຳປູເຈຍ ແລະ ຫວຽດນາມນຳ. ເຖິງແມ່ນວ່າ ມີຄຸນຄ່າສູງ ແຕ່ຖ້າຫາກກິນເນື້ອທີ່ຫຼາຍ ຫຼືມີນ້ຳໜັກຫຼາຍໂພດ ຄົງຈະບໍ່ຄຸ້ມຄ່າໃນການຂົນສົ່ງ ຈຶ່ງຍາກທີ່ຈະເປັນສິນຄ້າຂາອອກໄດ້. ທອງຄຳກໍ່ມີນ້ຳໜັກຫຼາຍຄືກັນ ແຕ່ມີຄຸນຄ່າສູງ ກໍ່ເລີຍເປັນສິນຄ້າຂາອອກໄດ້. ກົງກັນຂ້າມ ຢູ່ໃນລາຍການສິນຄ້ານີ້ ບໍ່ມີເຂົ້າ ຫຼືຕົ້ນໄມ້. ເພາະວ່າສິນຄ້າເຫຼົ່ານີ້ເສຍເນື້ອທີ່ຫຼາຍແລະໜັກດ້ວຍ. ການຂົນສົ່ງສິນຄ້າເຫຼົ່ານີ້ເສຍປຽບກວ່າປະເທດໃກ້ຄຽງນຳ.

(2) **ສິນຄ້າອາໄສຕະຫຼາດຕ່າງປະເທດ:** ຢ່າງທີ່ພິຈາລະນາມາແລ້ວໃນຂ້າງເທິງ ເຄື່ອງປ່າຂອງດົງເປັນສິນຄ້າສຳຄັນຂອງອານາຈັກລ້ານຊ້າງ. ຕາມຜົນການສຳຫຼວດພາກສະໜາມຂອງຂ້າພະເຈົ້າ ປະຈຸບັນ ຜູ້ເກັບເຄື່ອງປ່າຂອງດົງສ່ວນໃຫຍ່ແມ່ນພວກລາວເທິງຢູ່ເຂດພູດອຍ. ແຕ່ເຂົາເຈົ້າສ່ວນໃຫຍ່ບໍ່ຄ່ອຍຮູ້ວ່າ ເຄື່ອງປ່າຂອງດົງ ຊຶ່ງຕົນເອງໄປເກັບຢູ່ໃນປ່ານັ້ນ ມີປະໂຫຍດແນວໃດ ? ໃຊ້ແນວໃດ ? ເຂົາເຈົ້າໄປເກັບມາແລ້ວມີແຕ່ຂາຍໃຫ້ພໍ່ຄ້າ ແລ້ວໄດ້ເງິນຊື່ໆ. ເຂົາເຈົ້າບໍ່ຄ່ອຍໃຊ້ເຄື່ອງປ່າຂອງດົງໃນຊີວິດປະຈຳວັນ. ອີກດ້ານໜຶ່ງ ສົມມຸດວ່າ ລາວລຸ່ມຢູ່ໃນຕົວເມືອງຫຼວງພະບາງເອົາສິນຄ້າຕ່າງໆຂຶ້ນໄປພູເຂົາ ແລ້ວກໍ່ ແລກປ່ຽນກັບເຄື່ອງປ່າຂອງດົງ ຊຶ່ງລາວເທິງໄດ້ເກັບເອົາມາ. ແຕ່ຄວາມຈິງ ບໍ່ໄດ້ໝາຍຄວາມວ່າ ລາວລຸ່ມເອງໃຊ້ເຄື່ອງປ່າຂອງດົງເຫຼົ່ານັ້ນ


ໃນຊີວິດປະຈຳວັນເຊັ່ນດຽວກັນ. ເຂົາເຈົ້າກໍ່ຂາຍໃຫ້ພໍ່ຄ້າອື່ນໆເທົ່ານັ້ນ. ແຕ່ຂີ້ຄ້ຽງອາດຈະເປັນຂໍ້ຍົກເວັ້ນກໍ່ໄດ້ນໍ. ເພາະວ່າເຂົາເຈົ້າຍັງໃຊ້ຍ້ອມຜ້າຢູ່. ແຕ່ຄົນລາວເອງບໍ່ໄດ້ໃຊ້ຢາມ ແມ່ນບໍ່. ອັນນີ້ເປັນສິນຄ້າສຳລັບສົ່ງໄປຂາຍຕ່າງປະເທດເກືອບຈະຮ້ອຍເປີເຊັນນໍ. ເພາະສະນັ້ນ ສາມາດເວົ້າໄດ້ວ່າ ສິນຄ້າຂາອອກສ່ວນໃຫຍ່ບໍ່ມີການບໍລິໂພກພາຍໃນອານາຈັກລ້ານຊ້າງ. ໝາຍຄວາມວ່າ ຂາຍສິນຄ້າເຫຼົ່ານີ້ອອກໄດ້ ຫຼືອອກບໍ່ໄດ້ນັ້ນ ຂຶ້ນຢູ່ກັບສະພາບຕະຫຼາດຕ່າງປະເທດ. ຖ້າຫາກຕະຫຼາດຕ່າງປະເທດຕ້ອງການສິນຄ້າເຫຼົ່ານີ້ ມັນກໍ່ມີຄ່າ ຈຶ່ງຂາຍອອກໄດ້. ແຕ່ຖ້າຫາກຕະຫຼາດຕ່າງປະເທດບໍ່ຕ້ອງການ ບໍ່ຊື້ ມັນກໍ່ບໍ່ມີຄ່າ ຂາຍບໍ່ອອກເລີຍ. ເພາະສະນັ້ນ ສິນຄ້າເຫຼົ່ານັ້ນອາໄສສະພາບຂອງຕະຫຼາດຕ່າງປະເທດຢູ່ສະເໝີ. ເວົ້າອີກແນວໜຶ່ງວ່າ ການຄ້າຕ່າງປະເທດຂອງອານາຈັກລ້ານຊ້າງໃນສະໄໝນັ້ນ ມັກຈະໄດ້ຮັບຜົນກະທົບກະເທືອນຈາກສະພາບເສດຖະກິດໃນໂລກ. ເສດຖະກິດລາວໃນສະໄໝນັ້ນ ຈະເລີນກ້າວໜ້າກໍ່ຈິງ ແຕ່ໃນເວລາດຽວກັນ ອາດຈະບໍ່ໝັ້ນຄົງກໍ່ໄດ້.

(3) **ລະບົບໝູນວຽນສິນຄ້າ**: ທ່ານທັງຫຼາຍຄົງຈະບໍ່ເຄີຍໄດ້ຍິນຄຳສັບນີ້ນໍ ຍ້ອນວ່າເປັນຄຳສັບທີ່ຂ້າພະເຈົ້າແຕ່ງຂຶ້ນເອງ. ເຖິງແມ່ນວ່າຢູ່ໃນເຂດພູດອຍ ມີສິນຄ້າທີ່ມີຄຸນຄ່າສູງ ເຊັ່ນ ຢາມ, ຂີ້ຄ້ຽງ, ໜັງສັດຊະນິດຕ່າງໆ ເປັນຕົ້ນ ປະລິມານຫຼາຍກໍ່ຕາມ, ແຕ່ຖ້າຫາກສິນຄ້າເຫຼົ່ານີ້ຢູ່ໃນເຂດພູດອຍຊື່ໆ ຄົງຈະບໍ່ມີຄວາມໝາຍຫຍັງເລີຍ. ຕ້ອງມີລະບົບ ຫຼື System ຢ່າງໃດຢ່າງໜຶ່ງ ຊຶ່ງເຮັດໃຫ້ສິນຄ້າເຫຼົ່ານີ້ ຈາກເຂດພູດອຍ ໄຫຼລົງມາສູ່ສູນກາງການຄ້າ. ສຳລັບລະບົບແນວນີ້ ຂ້າພະເຈົ້າຕັ້ງຊື່ວ່າ "**ລະບົບໝູນວຽນສິນຄ້າ**". ຖ້າຫາກບໍ່ມີລະບົບແນວນີ້ ບໍ່ສາມາດຂາຍສິນຄ້າເຫຼົ່ານີ້ ໃຫ້ຕ່າງປະເທດໄດ້ ແມ່ນບໍ່. ຈັກໜ່ອຍ ຂໍອະທິບາຍໂດຍລະອຽດອີກເທື່ອໜຶ່ງນໍ.

ຕໍ່ໄປ ຂ້າພະເຈົ້າຂໍອະທິບາຍເຖິງການເຄື່ອນໄຫວທາງເສດຖະກິດຂອງອານາຈັກລ້ານຊ້າງນໍ. ປົກກະຕິ ການເຄື່ອນໄຫວທາງເສດຖະກິດ ຫຼືລະບົບເສດຖະກິດນັ້ນ ປະກອບດ້ວຍສາມພາກສ່ວນ ຄື ການຜະລິດສິນຄ້າ, ການໝູນວຽນສິນຄ້າ ແລະການບໍລິໂພກສິນຄ້າ. ແຕ່ມື້ນີ້ເວລາຈຳກັດຫຼາຍ ຈຶ່ງຂໍອະທິບາຍສະເພາະເລື່ອງການໝູນວຽນສິນຄ້າເທົ່ານັ້ນ. ຕາມຜົນການສຶກສາທີ່ຜ່ານມາ ຂ້າພະເຈົ້າຄິດວ່າ ໃນສະໄໝກ່ອນ ລະບົບໝູນວຽນສິນຄ້ານີ້ປະກອບດ້ວຍສອງພາກສ່ວນ. ພາກສ່ວນທີໜຶ່ງ ກໍ່ຄື **ລະບົບສ່ວຍ** ("ສ່ວຍ" ແປວ່າພາສີ), ແລ້ວກໍ່ ອັນທີສອງ ຄື ການຄ້າພາຍໃນ. ທີ່ນີ້ ຈະອະທິບາຍລະບົບສ່ວຍ ຫຼື ລະບົບພາສີກ່ອນ. ພວກເຮົາຮູ້ຈັກກັນດີໂດຍທົ່ວໄປວ່າ ໃນສະໄໝອານາຈັກລ້ານຊ້າງ ໜ້າທີ່ຂອງໄພ່ ("ໄພ່" ແປວ່າປະຊາຊົນທົ່ວໄປໃນສະໄໝກ່ອນ) ຄື ການຖືກເກນແຮງງານ ໝາຍຄວາມວ່າ ນາຍສັ່ງໃຫ້ໄພ່ເຂົ້າມາເຮັດວຽກ ເພື່ອຜົນປະໂຫຍດຂອງຕົນເອງ ໃນໄລຍະເວລາທີ່ນາຍກຳນົດໄວ້. ສົມມຸດວ່າ ປີລະ 2 ເດືອນ ໄພ່ ຄື ຊາວບ້ານ ຕ້ອງໄປເຮັດວຽກກັບນາຍ. ແຕ່ກໍລະນີທີ່ໄພ່ອາໄສຢູ່ໃນເຂດທຸລະກັນດານ ເຂດພູດອຍ, ຍາກທີ່ຈະເກນເຂົາເຈົ້າມາເຮັດວຽກໃນຕົວເມືອງ ແມ່ນບໍ. ໃນກໍລະນີນີ້ ນາຍມັກຈະສັ່ງໃຫ້ຊາວບ້ານສົ່ງສ່ວຍສິນຄ້າໃຫ້ແກ່ຕົນ ແທນເກນແຮງງານ. ຕາມຫຼັກຖານທາງປະຫວັດສາດ ໃນເວລາສົ່ງສ່ວຍສິນຄ້າ ໄພ່ມັກຈະສົ່ງທອງຄຳ ເງິນ ຫຼື ບາງທີ ສະບຽງອາຫານຊະນິດຕ່າງໆເຊັ່ນ

ໝາກເຜັດ, ກະທຽມ, ຂີງ, ເຂົ້າ, ນ້ຳເຜິ້ງ ເປັນຕົ້ນ ໃຫ້ແກ່ນາຍ. ແຕ່ຄວາມຈິງ ລາຍການສ່ວຍສິນຄ້ານີ້ ຄົ້ນຄວ້າຍາກຫຼາຍ ເພາະວ່າໃນຫຼັກຖານທາງປະຫວັດສາດລາວ ບໍ່ວ່າຕຳນານ ຫຼື ກົດໝາຍບູຮານ ເພິ່ນບັນທຶກກ່ຽວກັບລະບົບສ່ວຍໜ່ອຍຫຼາຍ ເກືອບຈະບໍ່ມີເລີຍ. ຂ້າພະເຈົ້າຈຶ່ງອ່ານກົດໝາຍບູຮານຂອງລາວແປດເລື່ອງ. ແຕ່ໄດ້ຂໍ້ມູນເທົ່ານີ້ນໍ. ແລ້ວກໍ່ ລະບົບສ່ວຍນັ້ນ ບໍ່ພຽງແຕ່ກໍລະນີທີ່ຊາວບ້ານ ສົ່ງໃຫ້ນາຍເທົ່ານັ້ນ ຍັງມີສ່ວຍອີກປະເພດໜຶ່ງທີ່ ເຈົ້າເມືອງສົ່ງໄປໃຫ້ເຈົ້າຊີວິດ (ນັກປະຫວັດສາດມັກຈະເອີ້ນສ່ວຍແນວນີ້ວ່າ "ບັນນາການ"). ການສົ່ງສ່ວຍແນວນີ້ ເຈົ້າເມືອງທ້ອງຖິ່ນສົ່ງທອງຄຳໃຫ້ແກ່ເຈົ້າຊີວິດ ເປັນສ່ວນໃຫຍ່ ເພື່ອສະແດງຄວາມຈົງຮັກພັກດີຕໍ່ເຈົ້າຊີວິດ. ແຕ່ມີຂໍ້ມູນທີ່ເປັນໜ້າສົນໃຈ ຄື Van Wuysthoff ບັນທຶກໄວ້ວ່າ ມີເມືອງທ້ອງຖິ່ນແຫ່ງໜຶ່ງ ເຈົ້າເມືອງເມືອງນັ້ນ ທຸກປີ ສົ່ງທອງຄຳເປັນສ່ວຍໃຫ້ແກ່ເຈົ້າຊີວິດ ຄື ເຈົ້າສຸລິຍະວົງສາທຳມິກະລາດ. ແຕ່ໃນຂະນະດຽວກັນ Van Wuysthoff ຍັງບອກໄວ້ວ່າ ເມືອງນັ້ນເປັນແຫຼ່ງຜະລິດຍານແລະຂີ້ຄັ່ງ ປະລິມານຫຼາຍພໍສົມຄວນ. ແຕ່ Van Wuysthoff ບໍ່ໄດ້ບັນທຶກໄວ້ວ່າ ເຈົ້າເມືອງເມືອງນັ້ນສົ່ງເຄື່ອງປ່າຂອງດົງເປັນສ່ວຍໃຫ້ແກ່ເຈົ້າຊີວິດ. ຂໍ້ມູນອີກຢ່າງໜຶ່ງ Van Wuysthoff ໄດ້ບັນທຶກໄວ້ວ່າ ເຈົ້າຊີວິດລາວ ຄື ເຈົ້າສຸລິຍະວົງສາທຳມິກະລາດ ສົ່ງລູກນ້ອງໄປທ້ອງຖິ່ນ ເພື່ອຈະຫາຊື້ເຄື່ອງປ່າຂອງດົງ ເຊັ່ນ ຍານ ຂີ້ຄັ່ງ ເປັນຕົ້ນ. ໝາຍຄວາມວ່າ ເຄື່ອງປ່າຂອງດົງນັ້ນ ອາດຈະບໍ່ໄດ້ຢູ່ໃນລາຍການສ່ວຍສິນຄ້າ ເວົ້າອີກແນວໜຶ່ງວ່າ ໃນເວລາເຄື່ອງປ່າຂອງດົງ ຈາກທ້ອງຖິ່ນໄຫຼລົງມາສູ່ສູນກາງການຄ້າ ຄື ນະຄອນວຽງຈັນ ຄົງຈະບໍ່ໄດ້ຜ່ານລະບົບສ່ວຍ. ຂ້າພະເຈົ້າຈຶ່ງຕັ້ງຄຳຖາມວ່າ ເຄື່ອງປ່າຂອງດົງໄດ້ນຳເຂົ້າມາສູ່ສູນກາງໄດ້ແນວໃດ ? ໂດຍຜ່ານລະບົບໃດ ? ເພາະສະນັ້ນ ພວກເຮົາຕ້ອງພິຈາລະນາການຄ້າພາຍໃນອີກ.

ຮູບ - 1 : ການຄ້າພາຍໃນ



ອັນນີ້ເປັນຮູບອະທິບາຍການຄ້າພາຍໃນ (ເບິ່ງ ຮູບ-1) ຊຶ່ງເຊື່ອມໂຍງເຂດພູດອຍ ຄື ບ່ອນຜະລິດສິນຄ້າ ກັບນະຄອນວຽງຈັນ ຄື ສູນກາງການຄ້າ. ຢ່າງທີ່ອະທິບາຍແລ້ວວ່າ ຢູ່ໃນເຂດພູດອຍ ປະຊາຊົນສ່ວນໃຫຍ່ເປັນພວກລາວເທິງນໍ. ຕາມທຳມະດາແລ້ວ ເຂົາເຈົ້າເປັນຜູ້ເກັບສິນຄ້າປະເພດເຄື່ອງປ່າຂອງດົງ. ພໍ່ຄ້າລາວລຸ່ມ ຊຶ່ງຢູ່ທີ່ເມືອງທ້ອງຖິ່ນ ຫຼືແຫຼ່ງລວບລວມສິນຄ້າ ສົມມຸດວ່າຢູ່ທີ່ຫຼວງພະບາງ, ຫຼວງພະບາງແມ່ນຕົວຢ່າງທີ່ດີທີ່ສຸດສຳລັບແຫຼ່ງລວບລວມສິນຄ້ານໍ, ພໍ່ຄ້າລາວລຸ່ມຈາກຫຼວງພະບາງ ເອົາເກືອ ເຄື່ອງຫັດຖະກຳບາງຊະນິດ ແລະສິນຄ້າອື່ນໆ ຂຶ້ນໄປເຂດພູດອຍ ແລກປ່ຽນກັບເຄື່ອງປ່າຂອງດົງຂອງລາວເທິງ. ບາງທີ ພວກລາວເທິງຈາກເຂດພູດອຍລົງມາຫຼວງພະບາງ ແລກປ່ຽນສິນຄ້າກໍ່ມີ. ການຄ້າລະຫວ່າງເມືອງທ້ອງຖິ່ນກັບນະຄອນວຽງຈັນນີ້ ພໍ່ຄ້າຈາກວຽງຈັນ ຄື ພໍ່ຄ້າລາວລຸ່ມ ແລະພໍ່ຄ້າຕ່າງປະເທດນໍ ເຂົາເຈົ້າເອົາເກືອ ເຄື່ອງຫັດຖະກຳບາງຊະນິດ ຜ້າແພຕ່າງປະເທດ ແລະສິນຄ້າອື່ນໆ ໄປເມືອງທ້ອງຖິ່ນແລ້ວ ແລກປ່ຽນກັບທອງຄຳ ເຄື່ອງປ່າຂອງດົງ ແລະສິນຄ້າອື່ນໆຢູ່ທີ່ນັ້ນ.

ກ່ຽວກັບຜ້າແພຕ່າງປະເທດນັ້ນ ຕ້ອງອະທິບາຍໜ່ອຍໜຶ່ງກ່ອນ. ມື້ນີ້ ພວກເຮົາສຶກສາກັນວ່າ ໃນສະໄໝອານາຈັກລ້ານຊ້າງ ມີສິນຄ້າຂາອອກຫຼາຍຢ່າງ ຄື ທອງຄຳແດ່ ເຄື່ອງປ່າຂອງດົງຫຼາຍຊະນິດແດ່. ແຕ່ໜ້າສົນໃຈ ຄື ສິນຄ້າຂາເຂົ້າສ່ວນໃຫຍ່ ຫຼືເກືອບຈະທັງໝົດ ເປັນຜ້າແພຕ່າງປະເທດ ໂດຍສະເພາະ ຜ້າແພອິນເດຍ. ຄິດວ່າ ຊົນຊັ້ນຜູ້ປົກຄອງຂອງອານາຈັກລ້ານຊ້າງ ມັກຈະຊື້ຜ້າແພຕ່າງປະເທດມາໃສ່ ເພື່ອຈະສະແດງ ຖານະທາງສັງຄົມຂອງຕົນເອງ ໃຫ້ຊາວບ້ານເຫັນ. ໃນສະໄໝກ່ອນ ອັນນີ້ມີຄວາມໝາຍສຳຄັນຫຼາຍ. ໃນທຸກໆປະເທດໃນສະໄໝນັ້ນ, ຊົນຊັ້ນຜູ້ປົກຄອງມັກຈະຊື້ເຄື່ອງປະດັບແດ່ ເສື້ອຜ້າດີໆແດ່ ມາໃສ່ ແລະໃຫ້ຊາວບ້ານເຫັນ ເພື່ອສະແດງອຳນາດຂອງຕົນເອງ. ເພາະສະນັ້ນ ຜ້າແພຕ່າງປະເທດສ່ວນໃຫຍ່ ໄດ້ບໍລິໂພກຢູ່ໃນນະຄອນວຽງຈັນກໍ່ຈິງ ແຕ່ສ່ວນໜຶ່ງ ພໍ່ຄ້າວຽງຈັນອາດຈະນຳໄປຫຼວງພະບາງ ຫຼືເມືອງທ້ອງຖິ່ນຕ່າງໆ ຂາຍໃຫ້ເຈົ້າເມືອງໃນເມືອງຕ່າງໆກໍ່ເປັນໄປໄດ້. ອີກເລື່ອງໜຶ່ງ ເກືອກໍ່ເປັນສິນຄ້າສຳຄັນອີກຢ່າງໜຶ່ງ. ທຸກຄົນຊາບດີແລ້ວວ່າ ເກືອເປັນສິ່ງທີ່ຂາດບໍ່ໄດ້ໃນຊີວິດມະນຸດເຮົາ. ແຕ່ວ່າໃນຂະນະດຽວກັນ ບໍ່ສາມາດຜະລິດເກືອໄດ້ທຸກແຫ່ງນໍ ບາງແຫ່ງຜະລິດໄດ້, ບາງແຫ່ງຜະລິດບໍ່ໄດ້. ໃນປະເທດລາວນີ້ ແຖວວຽງຈັນຜະລິດເກືອໄດ້ຫຼາຍ ແຕ່ແຖວຫຼວງພະບາງ ຜະລິດບໍ່ໄດ້. ເນື່ອງຈາກຄວາມບໍ່ສະໝໍ່າສະເໝີຂອງການກະຈາຍບ່ອນຜະລິດເກືອ ບໍ່ພຽງແຕ່ປະເທດລາວເທົ່ານັ້ນ ໃນທຸກໆປະເທດ ຍີ່ປຸ່ນກໍ່ຄືກັນ ຢູລົບກໍ່ຄືກັນ ເກືອເປັນສິນຄ້າສຳຄັນທີ່ເກົ່າແກ່ທີ່ສຸດຢ່າງໜຶ່ງ. ເພາະສະນັ້ນ ຂ້າພະເຈົ້າຂໍເນັ້ນຄວາມສຳຄັນຂອງເກືອ ໃນ ການຄ້າສະໄໝກ່ອນ. ນອກຈາກນີ້ ຂໍອະທິບາຍເພີ່ມຕື່ມວ່າ ເຄື່ອງຫັດຖະກຳ ທີ່ຈາກສູນກາງ ການຄ້າ ກະຈາຍໄປສູ່ທ້ອງຖິ່ນນັ້ນ ຄົງຈະເປັນເຄື່ອງປັ້ນດິນເຜົາ, ເຄື່ອງເຫຼັກ ແລະຜ້າແພເປັນສ່ວນໃຫຍ່.


ຖ້າເວົ້າເຖິງບົດບາດຂອງແຕ່ລະກຸ່ມຄົນ ແລະສາຍສຳພັນທາງເສດຖະກິດ ລະຫວ່າງກຸ່ມຄົນຕ່າງໆ ພໍສະຫຼຸບໄດ້ຄືດັ່ງຕໍ່ໄປນີ້. ພວກລາວເທິງໃນສະໄໝນັ້ນ ມີບົດບາດສຳຄັນໃນການເກັບ

ເຄື່ອງປ່າຂອງດົງ, ສ່ວນລາວລຸ່ມນັ້ນມີບົດບາດໃນຖານະທີ່ເປັນພໍ່ຄ້າ ແມ່ຄ້າ ຫຼື ຊ່າງຜະລິດເຄື່ອງຫັດຖະກຳ ເຊັ່ນ ເຄື່ອງປັ້ນດິນເຜົາ ເຄື່ອງເຫຼັກ, ແລະຜ້າແພ. ແຕ່ບາງທ່ານອາດຈະສົງໄສນິດໜຶ່ງວ່າ ລາວລຸ່ມເປັນ ພໍ່ຄ້າບໍ່ ? ແມ່ຄ້າບໍ່ ? ສົມມຸດວ່າໃນປະເທດລາວປະຈຸບັນນີ້ ຖ້າໄດ້ຍິນຄຳວ່າ "ພໍ່ຄ້າ ແມ່ຄ້າ" ພວກເຮົານຶກເຖິງກຸ່ມຄົນໃດແດ່ ? ຢູ່ທີ່ຕະຫຼາດເຊົ້າ ແມ່ນໃຜຄ້າຂາຍຫຼາຍທີ່ສຸດ ? (ຜູ້ເຂົ້າຮ່ວມຕອບວ່າ ຈີນ...) ຄິດວ່າ ເຂົາເຈົ້າສ່ວນໃຫຍ່ ເປັນຄົນລາວເຊື້ອສາຍຈີນ ແລ້ວກໍ່ຫວຽດນາມ ແມ່ນບໍ່. ເພາະສະນັ້ນ ຖ້າບອກວ່າ ລາວລຸ່ມ ໃນສະໄໝກ່ອນມີບົດບາດສຳຄັນໃນຖານະທີ່ເປັນພໍ່ຄ້າ ແມ່ຄ້າ. ບາງທ່ານອາດຈະສົງໄສນໍ. ແລ້ວກໍ່ ບາງທ່ານອາດຈະບອກວ່າ ອາຊີບຕົ້ນຕໍຂອງລາວລຸ່ມ ແມ່ນເຮັດໄຮ່ເຮັດນາ. ເລື່ອງນີ້ ນັກວິຊາການຫຼາຍທ່ານກໍ່ຍັງຖຽງກັນຢູ່. ຄວາມຈິງ ລາວລຸ່ມຫຼາຍຄອບຄົວເຮັດນາຢູ່ນໍ. ແຕ່ວ່າໃນປະຫວັດສາດລາວທີ່ຍາວນານ ຂ້າພະເຈົ້າຄິດວ່າ ເມື່ອບັນພະບຸລຸດຂອງລາວລຸ່ມ ຍ້າຍເຂົ້າມາ ແລະຂະຫຍາຍອິດທິພົນໃນດິນແດນລາວປະຈຸບັນ ເຂົາເຈົ້າມີບົດບາດສຳຄັນໃນຖານະທີ່ເປັນພໍ່ຄ້າ ແມ່ຄ້າ. ຖ້າຫາກບັນພະບຸລຸດຂອງຄົນລາວທຸກຄົນເປັນຊາວນາຊາວໄຮ່ ອານາຈັກລ້ານຊ້າງໃນສະໄໝນັ້ນ ບໍ່ໜ້າຈະຈະເລີນກ້າວໜ້າຢ່າງທີ່ພວກເຮົາຮັບຮູ້. ຢ່າງໃດກໍ່ຕາມ ກ່ຽວກັບເລື່ອງນີ້ ນັກປະຫວັດສາດຕ້ອງສຶກສາກັນຕໍ່ໄປ. ແລ້ວກໍ່ ກຸ່ມຄົນທີສາມ ຄື ພໍ່ຄ້າຕ່າງປະເທດ. ພໍ່ຄ້າຕ່າງປະເທດນັ້ນ ບໍ່ພຽງແຕ່ເຂົ້າມາວຽງຈັນເທົ່ານັ້ນ, ເຂົາເຈົ້າຍັງເຂົ້າໄປເຖິງເມືອງທ້ອງຖິ່ນຕ່າງໆໃນອານາຈັກລ້ານຊ້າງ. ພໍ່ຄ້າຕ່າງປະເທດໃນຂະນະນັ້ນ ມາຈາກອະຢຸດທະຢາແດ່ ມາລາຢູແດ່ ແລະພວກມຸດສະລິມ (Islam) ກໍ່ມາ. ພວກມຸດສະລິມນີ້ ມາຈາກແຖວອິນເດຍແດ່ ຕາເວັນອອກກາງແດ່ ຫຼາຍຄົນເຂົ້າມາລາວ. ໃນສະໄໝສະຕະວັດທີ 15 - 17 ໃນການຄ້າລະຫວ່າງຊາດໃນອາຊີອາຄະເນ ພາສາຈີນກັບພາສາມາລາຢູເປັນພາສາກາງ. ເມື່ອເຈົ້າຊີວິດຂອງປະເທດຕ່າງໆໃນອາຊີອາຄະເນ ສົ່ງບັນນາການ (ສ່ວຍ) ໃຫ້ແກ່ຈັກກະພັດຈີນ ຫຼື ຈັກກະພັດຈີນສົ່ງຂອງຂວັນໃຫ້ແກ່ເຈົ້າຊີວິດ ໃນອາຊີອາຄະເນ, ເພີ່ນໃຊ້ພາສາຈີນຊຽນເອກະສານທາງການນໍ. ນອກຈາກນັ້ນ ຖ້າເປັນພໍ່ຄ້າເອກະຊົນ ເຂົາເຈົ້າມັກໃຊ້ພາສາມາເລຢູ ຍ້ອນວ່າໃນສະໄໝນັ້ນ ເມືອງ Malacca (ໃນປະເທດມາເລເຊຍ ປະຈຸບັນ) ເປັນສູນກາງການຄ້າໃຫຍ່ທີ່ສຸດແຫ່ງໜຶ່ງໃນອາຊີອາຄະເນ.

ລະບົບໝູນວຽນສິນຄ້າໃນສະຕະວັດທີ 17 (ເບິ່ງ ຮູບ-2 ໃນທ້າຍບົດ) ປະກອບດ້ວຍ ລະບົບສ່ວຍ ການຄ້າພາຍໃນ ແລະການຄ້າຕ່າງປະເທດ. ໃນລະບົບສ່ວຍນີ້ ໄພ່ ຄື ປະຊາຊົນທົ່ວໄປສົ່ງທອງຄຳ ແລະອາຫານບາງຊະນິດໃຫ້ແກ່ເຈົ້າເມືອງ. ອັນນີ້ຢູ່ທີ່ສູນກາງກໍ່ຄືກັນ. ເຈົ້າເມືອງກໍ່ສົ່ງທອງຄຳໃຫ້ແກ່ເຈົ້າຊີວິດເປັນສ່ວຍຄືກັນ. ຕໍ່ໄປ ການຄ້າພາຍໃນນໍ. ເຄື່ອງປ່າຂອງດົງຈາກເຂດພູດອຍ ໄດ້ເອົາລົງມາສູ່ເມືອງທ້ອງຖິ່ນ, ກົງກັນຂ້າມ ເກືອ ແລະເຄື່ອງຫັດຖະກຳ ໄດ້ເອົາຂຶ້ນໄປເຂດພູດອຍ. ຈາກເມືອງທ້ອງຖິ່ນ ຄື ຫຼວງພະບາງ ທອງຄຳ ແລະເຄື່ອງປ່າຂອງດົງ ໄຫຼເຂົ້າມາສູ່ນະຄອນວຽງຈັນ, ແລ້ວກໍ່ ຈາກວຽງຈັນ ເກືອ, ເຄື່ອງຫັດຖະກຳ ແລະຜ້າແພຕ່າງປະເທດ ກໍ່ກະຈາຍໄປສູ່ເມືອງທ້ອງຖິ່ນ. ໃນການຄ້າຕ່າງປະເທດ ທອງຄຳ ແລະເຄື່ອງປ່າຂອງດົງ ເປັນສິນຄ້າຂາອອກອັນສຳຄັນ ແລະຜ້າແພຕ່າງປະເທດ ເປັນສິນຄ້າຂາເຂົ້າອັນສຳຄັນ. ການຄ້າຕ່າງ

ປະເທດຂອງອານາຈັກລ້ານຊ້າງນັ້ນ ບໍ່ພຽງແຕ່ການຄ້າລະຫວ່າງວຽງຈັນກັບຕະຫຼາດຕ່າງປະເທດເທົ່ານັ້ນ. ພໍ່ຄ້າຕ່າງປະເທດໄດ້ເຂົ້າມາເມືອງທ້ອງຖິ່ນ ໂດຍກົງກໍ່ມີເຊັ່ນກັນ.

ສະຫຼຸບແລ້ວ ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງໄດ້ເກີດຂຶ້ນມາຈາກໃສ ? ປັດໄຈພາຍນອກ ຄື **ຍຸກຂອງການຄ້າ** (the Age of Commerce) ຄື ສະພາບເສດຖະກິດໃນໂລກທີ່ອຳນວຍໃຫ້ແກ່ອານາຈັກລ້ານຊ້າງ. ຕະຫຼາດຕ່າງປະເທດຕ້ອງການສິນຄ້າຂອງລາວຫຼາຍ ຂຶ້ນໃນຍຸກຂອງການຄ້າ. ປັດໄຈພາຍໃນອັນທີໜຶ່ງ ຄື **ຄວາມອຸດົມສົມບູນທາງຊັບພະຍາກອນທຳມະຊາດ**. ໃນສະໄໝນັ້ນ ອານາຈັກລ້ານຊ້າງສາມາດຜະລິດສິນຄ້າຕ່າງໆໄດ້ ຊຶ່ງຕະຫຼາດຕ່າງປະເທດຕ້ອງການຢູ່. ປັດໄຈພາຍໃນອັນທີສອງ ຄື **ການສ້າງລະບົບໝູນວຽນສິນຄ້າ** ໝາຍຄວາມວ່າ ລາວເທິງໃນເຂດພູດອຍ ລາວລຸ່ມໃນເມືອງທ້ອງຖິ່ນ ພ້ອມດ້ວຍລາວລຸ່ມແລະພໍ່ຄ້າຕ່າງປະທດໃນສູນກາງການຄ້າ (ນະຄອນວຽງຈັນ) ໄດ້ເຊື່ອມໂຍງກັນ ໃນລະບົບເສດຖະກິດອັນດຽວກັນ ຫຼືເວົ້າອີກແນວໜຶ່ງວ່າ ການສ້າງລະບົບໝູນວຽນ ສິນຄ້າໃນຂົງເຂດກ້ວາງຂວາງໄດ້ສຳເລັດ. ສິ່ງເຫຼົ່ານີ້ເປັນປັດໄຈສຳຄັນທີ່ສຸດຢ່າງໜຶ່ງ ທີ່ເຮັດໃຫ້ອານາຈັກລ້ານຊ້າງຈະເລີນກ້າວໜ້າໃນສະໄໝນັ້ນ.



ຜູ້ເຂົ້າຮ່ວມສຳມະນາ



ແລກປ່ຽນຄວາມຄິດເຫັນ


ສຸດທ້າຍນີ້ ຂ້າພະເຈົ້າຂໍປະກອບຄວາມຄິດເຫັນນິດໜຶ່ງນໍ. ທີ່ນີ້ ຂ້າພະເຈົ້າຂຽນວ່າ "**ແມ່ນໃຜ ເປັນຜູ້ສ້າງປະຫວັດສາດ**" ເວລາໄດ້ຍິນຄຳວ່າ "**ປະຫວັດສາດ**" ພວກເຮົາມັກຈະນຶກເຖິງ ລະຄອນປະຫວັດສາດ ຫຼືນະວະນິຍາຍປະຫວັດສາດ. ໃນລະຄອນປະຫວັດສາດ ມີ Hero (ວີລະບຸລຸດ) ຫຼືວ່າ Heroine (ວີລະສັດຕີ) ທ່ານໃດທ່ານໜຶ່ງມັກຈະອອກມາຕໍ່ສູ້ກັບສັດຕູຊົ່ວຮ້າຍ ເອົາຊະນະກູ້ຊາດໃນທີ່ສຸດ ຄືກັບວ່າ ເພີ່ນສະແດງບົດບາດສຳຄັນຜູ້ດຽວ. ເພາະສະນັ້ນ ພວກເຮົາກໍ່ມັກຈະຄິດວ່າ ວີລະບຸລຸດ ທີ່ມີຈຳນວນໜ່ອຍເທົ່ານັ້ນ ມີຄວາມສຳຄັນໃນປະຫວັດສາດ. ເວົ້າອີກແນວໜຶ່ງວ່າ ປະຊາຊົນທົ່ວໄປບໍ່ມີຄວາມສຳຄັນໃນປະຫວັດສາດ ຫຼືບໍ່ມີບົດບາດຫຍັງເລີຍໃນການສ້າງສັງຄົມ. ພວກເຮົາມັກຈະຄິດແນວນັ້ນນໍ. ແຕ່ດັ່ງໄດ້ພິຈາລະນາມາແລ້ວໃນສຳມະນາມື້ນີ້ ຄວາມຈະເລີນຮຸ່ງເຮືອງຂອງອານາຈັກລ້ານຊ້າງນັ້ນ ບໍ່ພຽງແຕ່ເກີດມາຈາກຄວາມ

ປັຊາສາມາດຂອງເຈົ້າຊີວິດທີ່ມີຊື່ສຽງຜູ້ດຽວ ເຊັ່ນ ເຈົ້າໄຊຍະເຊດຖາທິລາດ ຫຼືເຈົ້າສຸລິຍະວົງສາ ທຳມິກະລາດ ເປັນຕົ້ນເທົ່ານັ້ນ ຫາກຍັງເກີດມາຈາກປັດໄຈຫຼາຍໆຢ່າງຄື ສະພາບເສດຖະກິດ ໃນໂລກທີ່ອຳນວຍໃຫ້, ຄວາມອຸດົມສົມບູນທາງຊັບພະຍາກອນທຳມະຊາດ ແລະການສ້າງ ລະບົບໝູນວຽນສິນຄ້າ ໃນອານາຈັກລ້ານຊ້າງສະໄໝນັ້ນ. ປະຊາຊົນທົ່ວໄປ ບໍ່ວ່າເຮັດວຽກຫຍັງ ບໍ່ວ່າສັງກັດຢູ່ຊົນເຜົ່າກຸ່ມໃດ ບໍ່ວ່າອາໄສຢູ່ບ່ອນໃດກໍ່ຕາມ ທຸກຄົນຍ່ອມມີຄວາມປາຖະໜາ ທີ່ຈະ ຍົກລະດັບຊີວິດຂອງຕົນເອງໃຫ້ສູງຂຶ້ນ ເທົ່າທີ່ຈະເຮັດໄດ້. ຄວາມຕ້ອງການຂອງເຂົາເຈົ້າ ທີ່ມີຕໍ່ ວັດຖຸສິ່ງຂອງຕ່າງໆນັ້ນ ຄົງຈະເປັນເງື່ອນໄຂສຳຄັນຢ່າງໜຶ່ງ ທີ່ໄດ້ສ້າງລະບົບໝູນວຽນສິນຄ້າ ໃນສັງຄົມລ້ານຊ້າງສະໄໝນັ້ນ. ການທຳມາຫາກິນທຸກມື້ນີ້ຂອງ ພວກເຮົາເປັນສິ່ງທີ່ເລັກໆນ້ອຍໆ ກໍ່ຈິງ ແຕ່ການເຄື່ອນໄຫວທາງເສດຖະກິດຂອງແຕ່ລະບຸກຄົນນັ້ນ ໄດ້ ເຊື່ອມໂຍງກັນໃນຂົງເຂດ ກວ້າງຂວາງແລ້ວ ຈຶ່ງກາຍເປັນພະລັງຍິ່ງໃຫຍ່ ທີ່ເຮັດໃຫ້ສັງຄົມປ່ຽນໄປ. ດັ່ງນັ້ນ ພວກເຮົາ ສາມາດເວົ້າໄດ້ວ່າ ນອກຈາກຊົນຊັ້ນຜູ້ປົກຄອງໃນສະໄໝນັ້ນແລ້ວ ປະຊາຊົນທົ່ວໄປ ຄື ຊາວ ນາ, ຊາວສວນ, ຊາວປະມົງ, ຊ່າງຫັດຖະກຳ, ພໍ່ຄ້າແມ່ຄ້າ ແລະອື່ນໆ ກໍ່ເປັນຜູ້ສ້າງປະຫວັດສາດ ອີກດ້ວຍ. ອັນນີ້ຄື ຄວາມຄິດເຫັນຂອງຂ້າພະເຈົ້ານໍ. ການບັນຍາຍໃນມື້ນີ້ ມີພຽງເທົ່ານີ້ນໍ. ຂໍຂອບໃຈຫຼາຍໆ. (ຈົບ)

---

* **ໝາຍເຫດ** : ໂຍຊິຍູກິ ມາຊູຮາຣາ, พ.ศ.๒๕๔๖, **ประวัติศาสตร์เศรษฐกิจของราชอาณาจักรล้านช้าง สมัยคริสต์ศตวรรษที่ ๑๔-๑๗**, สำนักพิมพ์มติชน, กรุงเทพฯ. (ມີໃຫ້ຢືມຢູ່ທີ່ຫ້ອງສະມຸດ ສູນລາວ - ຍີ່ປຸ່ນ)

ຮູບ -2 : ລະບົບໝູນວຽນສິນຄ້າໃນສະຕະວັດທີ 17



ຄວາມຮູ້ທ້ອງຖິ່ນ
ຄື ການຊ່ວຍເຫຼືອເຊິ່ງກັນແລະກັນ ໃນຊຶມນະບົດ

Kayoko YOSHIDA
ນັກສຶກສາປະລິນຍາເອກ, ມະຫາວິທະຍາໄລກຽວໂຕ

ສະບາຍດີໝົດທຸກຄົນ ມື້ນີ້ໂອກາດອັນດີເໝາະ, ຂ້າພະເຈົ້າມີຊື່ວ່າ: Kayoko YOSHIDA ແມ່ນນັກສຶກສາປະລິນຍາເອກ ມະຫາວິທະຍາໄລກຽວໂຕ. ຂ້າພະເຈົ້າມາປະເທດລາວຄັ້ງທຳອິດ ແມ່ນ 5 ປີກ່ອນ, ໃນເວລານັ້ນຂ້າພະເຈົ້າແມ່ນນັກທ່ອງທ່ຽວ ບໍ່ໄດ້ເວົ້າພາສາລາວຈັກໜ້ອຍ ແຕ່ວ່າຂ້າພະເຈົ້າຖືກໃຈກັບທຳມະຊາດ ອັນທີ່ສວຍສົດງົດງາມ ແລ້ວກໍ່ອາຫານແຊບ ແລະຄົນໃຈດີ, ຫຼັງຈາກມາທ່ອງທ່ຽວຫຼາຍເທື່ອແລ້ວ ຂ້າພະເຈົ້າມີຄວາມສົນໃຈວ່າ ການດຳລົງຊີວິດຢູ່ໃນປະເທດລາວເປັນແນວໃດ ແລ້ວຕັດສິນໃຈວ່າ ຮຽນກ່ຽວກັບສັງຄົມ, ວັດທະນະທຳ ແລະການດຳລົງຊີວິດຂອງປະຊາຊົນຢູ່ໃນປະເທດລາວ.

ຕັ້ງແຕ່ປີ 2003 ຂ້າພະເຈົ້າໄດ້ມາປະເທດລາວອີກຄື: ເປັນນັກວິໄຈຂອງ ຄະນະວິທະຍາສາດສັງຄົມ ຢູ່ມະຫາວິທະຍາໄລແຫ່ງຊາດລາວ. ແລ້ວຕັ້ງແຕ່ເດືອນ 9 ປີ 2004 ເກັບຂໍ້ມູນຢູ່ແຂວງຫຼວງພະບາງ. ອັນມື້ນີ້ຂ້າພະເຈົ້າຢາກແນະນຳການດຳລົງຊີວິດຮີດຄອງປະເພນີ ແລະສັງຄົມ ວັດທະນະທຳ ຂອງຊາວບ້ານນາຍາງໃຕ້, ເມືອງນ້ຳບາກ, ແຂວງຫຼວງພະບາງ. ເພາະວ່າ ພາສາລາວຂອງຂ້າພະເຈົ້າຍັງບໍ່ເກັ່ງປານໃດ ກໍ່ຢ້ານວ່າພວກທ່ານບໍ່ເຂົ້າໃຈດີປານໃດ. ແຕ່ເຖິງຢ່າງໃດກໍ່ຕ້ອງອົດທົນພະຍາຍາມເວົ້າຊ້າເອົາເໝາະ ອັນໃດບໍ່ເຂົ້າໃຈກໍ່ຊ່ວຍໆກັນແດ່ເດີ.



ນາງ Kayoko YOSHIDA



ບ້ານນາຍາງໃຕ້

1. ບ້ານ

ບ້ານນາຍາງໃຕ້ ເປັນຊົນນະບົດບ້ານໜຶ່ງ ຊຶ່ງຕັ້ງຢູ່ທາງພາກເໜືອຂອງແຂວງຫຼວງພະບາງ, ຊຶ່ງອຸດົມສົມບູນໄປດ້ວຍພູເຂົາ, ປ່າໄມ້ ແລະທຳມະຊາດອັນສວຍສົດງົດງາມ. ປະຊາຊົນສ່ວນຫຼາຍແມ່ນຊົນເຜົ່າລື້. ພວກເຂົາມີປະຫວັດສາດ, ພາສາ ແລະຮີດຄອງປະເພນີເປັນຂອງຕົນເອງ. ເວົ້າກັນວ່າບັນພະບູລຸດຂອງພວກເຂົາເຈົ້າ ມາຈາກສິບສອງພັນນາ, ພາກໃຕ້ຂອງປະເທດຈີນ. ພວກເຂົາເຈົ້າຍົກຍ້າຍມາຢູ່ປະເທດລາວ ເພື່ອສະແຫວງຫາການດຳລົງຊີວິດທີ່ດີ. ແລ້ວພວກເຂົາກໍ່ມາເຖິງດິນແດນໃໝ່ແຫ່ງນັ້ນໄດ້ປະມານ 600 ປີແລ້ວ. ໃນສະໄໝນັ້ນ ມີໜອງໃຫຍ່ໆໜອງໜຶ່ງ ເຊິ່ງເຕັມໄປດ້ວຍຝູງນົກຍາງ ເຊິ່ງມາຫາກິນໃນບໍລິເວນນັ້ນ, ປະຊາຊົນເລີຍຮ້ອງນັ້ນວ່າ ໜອງນົກຍາງ. ຢູ່ມາປະຊາຊົນ ເອົາໜອງນັ້ນມາເປັນນາ ແລ້ວຮ້ອງນານັ້ນວ່າ ນາຍາງ ເຊິ່ງ ເປັນຊື່ຂອງບ້ານນາຍາງ.

ຢ່າງໃດກໍ່ຕາມ ບ້ານນາຍາງ ດັ້ງເດີມນັ້ນມີສອງບ້ານຄື: ບ້ານນາຍາງໃຕ້ ແລະ ບ້ານນາຍາງເໜືອ. ທັງສອງບ້ານນັ້ນໄດ້ຂະຫຍາຍພື້ນທີ່ເຮັດນານັບມື້ນັບຫຼາຍຂຶ້ນເລື້ອຍໆ ຈຶ່ງເຮັດໃຫ້ຢູ່ຫ່າງໄກກັນ ແລະມີບາງຄອບຄົວໄດ້ຍ້າຍເຮືອນໄປຢູ່ໃກ້ໆກັບນາ. ແລ້ວຈຶ່ງເກີດມີບ້ານໃໝ່ຫຼາຍໆບ້ານເຊັ່ນ: ບ້ານນາໃໝ່ ແລະບ້ານປົ່ງຈອງ ແຍກອອກຈາກບ້ານນາຍາງເໜືອ, ບ້ານຫ້ວຍຫ້າ ແລະບ້ານຫ້ວຍຫີດ ແຍກອອກຈາກບ້ານນາຍາງໃຕ້. ໃນ 6 ບ້ານເຫຼົ່ານີ້ ຍັງຮັກແພງເປັນພີ່ນ້ອງກັນມາຈົນເຖິງປະຈຸບັນນີ້.

ສຳຫຼັບບ້ານນາຍາງໃຕ້ ມີພົນລະເມືອງ 511 ຄົນ ແລະມີ 107 ຫຼັງຄາເຮືອນ. ປະຊາຊົນສ່ວນຫຼາຍແມ່ນຊາວກະສິກອນ. ໂດຍສະເພາະແມ່ນເຮັດນາ, ເຮັດສວນເປັນຕົ້ນຕໍໃນການດຳລົງຊີວິດຂອງເຂົາເຈົ້າ. ສຳຫຼັບຊາວບ້ານນັ້ນ ກໍ່ຄືກັບປະຊາຊົນລາວທົ່ວໆໄປ, ເຂົ້າເປັນອາຫານຫຼັກຂອງເຂົາເຈົ້າ. ບາງເວລາພວກເຂົາກິນແຕ່ເຂົ້າລ້ວນໆກໍ່ພໍ. ດັ່ງນັ້ນເຂົາເຈົ້າຈຶ່ງເອົາໃຈໃສ່ດູແລຮັກສານາຂອງຕົນເອງໃຫ້ດີເທົ່າທີ່ຈະເຮັດໄດ້.

2. ການເຮັດນາ

ພວກເຂົາເລີ້ມເຮັດນາແມ່ນຫຼັງຈາກປີໃໝ່ລາວ. ສຳຫຼັບວິທີການສັກກ້າ, ຄືຜູ້ຊາຍເປັນຄົນສັກໂດຍໃຊ້ໄມ້ ແລ້ວຜູ້ຍິງເປັນຄົນໃສ່ເຂົ້າ. ຫຼັງຈາກນັ້ນປະມານ 3 ອາທິດ ເຂົ້າທີ່ໃສ່ລົງໄປນັ້ນ ກໍ່ຈະແຕກອອກເປັນຕົ້ນ. ແລ້ວແບ່ງອອກເປັນ 3 ຫຼື 4 ຕົ້ນ ເພື່ອເອົາໄປປູກອີກເທື່ອໜຶ່ງ ຮ້ອງວ່າການຈຳກ້າ ຫຼືຊຳກ້າ. ກ້າວເຂົ້າມາເຖິງລະດູຝົນພໍດີ ປະຊາຊົນຈະເລີ້ມໄຖນາ ເພື່ອເປັນການລໍຖ້າກ້າໃຫຍ່ພໍທີ່ຈະດຳນາ. ປະຈຸບັນນີ້ມີ 20 ຄອບຄົວໃຊ້ລົດໄຖນາ, ນອກຈາກນັ້ນ ແມ່ນຍັງໃຊ້ຄວາຍ. ການໄຖນາແມ່ນມີພຽງຜູ້ຊາຍເທົ່ານັ້ນ ເພາະແມ່ນວຽກໜັກ ແລະຄວາຍກໍ່ບໍ່ຟັງຄວາມຂອງຜູ້ຍິງ.

ເຫດການທີ່ໃຫຍ່ທີ່ສຸດໃນລະດູການເຮັດນາຄື ການດຳນາ ແລະການກ່ຽວເຂົ້າ. ໃນລະດູນັ້ນຫຼາຍຄົນເຮັດວຽກນຳກັນຄື ຂ້ອຍຊ່ວຍເຈົ້າແລ້ວ ເຈົ້າຕ້ອງມາຊ່ວຍຂ້ອຍ (ເອີ້ນວ່າ: ການເຮົ້າກັນ).

ນີ້ເປັນຄືກັນກັບວ່າ ເປັນກິດອັນໜຶ່ງໃນການດຳລົງຊີວິດຢູ່ຊົນນະບົດ. ໃນຊ່ວງນັ້ນໝົດທຸກຄົນຈະຄາວຽກ, ບໍ່ມີໃຜຢູ່ເຮືອນ ຍົກເວັ້ນຄົນມີອາຍຸ ແລະເດັກນ້ອຍ. ແຕ່ເດັກນ້ອຍທີ່ມີອາຍຸ 10 ປີຂຶ້ນໄປ ຈະເຮັດວຽກ. ພວກເຂົາສາມາດຮຽນວິທີເຮັດນາ ແລະການຊ່ວຍເຫຼືອເຊິ່ງກັນແລະກັນຈາກຜູ້ໃຫຍ່.

ຫຼັງຈາກການດຳນາແລ້ວ ຖືວ່າວຽກກໍ່ບໍ່ມີຫຍັງຫຼາຍ. ພວກເຂົາຈະເຮັດວຽກປະຈຳວັນອື່ນໆ ໄປກ່ອນເພື່ອລໍຖ້າລະດູການເກັບກ່ຽວເຂົ້າ.

ການເກັບກ່ຽວເຂົ້ານັ້ນມີ 3 ຊະນິດຄື: ເຂົ້າດໍ, ເຂົ້າກາງ ແລະເຂົ້າປີ ຈະມີໄລຍະເວລາແຕກຕ່າງກັນແຕ່ການສັກກ້ານຮອດການເກັບກ່ຽວ. ອາຍຸການເກັບກ່ຽວຂອງເຂົ້າດໍໃຊ້ເວລາປະມານ 120 ວັນ, ເລີ້ມຕົ້ນຈາກທ້າຍເດືອນ 9. ເຂົ້າກາງໃຊ້ເວລາປະມານ 140 ວັນ ສ່ວນເຂົ້າປີໃຊ້ເວລາປະມານ 180 ວັນ. ພວກເຂົາໄດ້ມີການຊ່ວຍເຫຼືອກັນໃນການເກັບກ່ຽວເຊັ່ນກັນ. ລະດູການເກັບກ່ຽວເປັນອີກລະດູການໜຶ່ງທີ່ໃຫຍ່ທີ່ສຸດ, ໝົດທຸກຄົນຈະເຮັດວຽກຢູ່ນາທຸກໆມື້.



ການສັກກ້ານ (ເທິງ)

ການໄຖນາ (ຂວາ)





ການດຳນາ



ການກ່ຽວເຂົ້າ

ຫຼັງຈາກກ່ຽວເຂົ້າແລ້ວ ຈະເອົາເຂົ້າຕາກແດດໄວ້ກ່ອນເພື່ອໃຫ້ເຂົ້າແຫ້ງ. ຈາກນັ້ນຈະເຮັດເປັນມັດແລ້ວເອົາໄປກອງໄວ້. ຕາມປົກກະຕິແລ້ວແມ່ຍິງຈະເປັນຄົນມັດ ແລ້ວຜູ້ຊາຍເປັນຄົນຂົນມັດເຂົ້າແລະເຮັດເປັນກອງ. ເຖິງວ່າຈະບໍ່ເຮັດເປັນກຸ່ມ ແຕ່ພວກເຂົາກໍ່ຊ່ວຍກັນ. ຫຼັງຈາກການເກັບກູ້ສຳເລັດແລ້ວ ພວກເຂົາກໍ່ຈະເລີ້ມຕີເຂົ້າ. ການຕີເຂົ້າແມ່ນມີສາດປູລົງພື້ນ ຈາກນັ້ນເອົາໄມ້ກັ້ງ (ໄມ້ທີ່ໃຊ້ໃນການຕີເຂົ້າ) ຂັດກັບມັດເຂົ້າໃຫ້ແໜ້ນແລ້ວຟາດລົງໃສ່ສາດ. ໃນການຟາດເຂົ້າຈະປະກອບມີ 3 ຂະບວນການຄື: ຜູ້ຊາຍຕີເຂົ້າ, ວີເຂົ້າ (ເພື່ອເອົາເຂົ້າລີບອອກ) ແລະຜູ້ຍິງຫາບເຂົ້າໄປເກັບໄວ້ໃນເລົ້າເຂົ້າ.

ຂ້າພະເຈົ້າໄດ້ເວົ້າວ່າ ລະດູການເຮັດນາຈະບໍ່ມີໃຜຢູ່ບ້ານເລີຍ ນອກຈາກຄົນເຖົ້າ ແລະເດັກນ້ອຍເທົ່ານັ້ນ. ແຕ່ນັ້ນກໍ່ບໍ່ໄດ້ໝາຍຄວາມວ່າ ຄົນເຖົ້າແລະເດັກນ້ອຍບໍ່ໄດ້ເຮັດຫຍັງ. ແຕ່ເຂົາເຈົ້າໄດ້ແຕ່ງກິນ, ເອົາເດັກນ້ອຍ ແລະເຝົ້າເຮືອນ, ນີ້ເປັນພາລະບົດບາດຂອງເຂົາເຈົ້າ. ຖ້າບໍ່ມີການຊ່ວຍເຫຼືອກັນແບບນີ້ແລ້ວກໍ່ຈະເປັນການຍາກທີ່ຈະອອກໄປເຮັດວຽກນອກບ້ານ. ສະນັ້ນ ຂ້າພະເຈົ້າຈະເຫັນໄດ້ວ່າ ຊາວບ້ານແຕ່ລະຄົນກໍ່ຈະມີບົດບາດໜ້າທີ່ສຳຄັນແຕກຕ່າງກັນໄປ ແລ້ວຍັງມີການຊ່ວຍເຫຼືອເຊິ່ງກັນແລະກັນຕື່ມອີກ.

3. ການດຳລົງຊີວິດ

(1) ການເກີດ

ຢູ່ບ້ານນາຍາງໃຕ້ ປະຊາຊົນສ່ວນຫຼາຍແມ່ນເກີດລູກຢູ່ໃນເຮືອນຂອງຕົນເອງ. ເຫດຜົນອັນທີໜຶ່ງ: ກໍ່ຄືວ່າ ຢູ່ເຮືອນຂອງຕົນເອງແມ່ຂອງເດັກຮູ້ສຶກຄຸ້ນເຄີຍກັບສະພາບແວດລ້ອມ. ເຫດຜົນອັນທີສອງ: ຊາວບ້ານເຮືອນໃກ້ຄຽງມາຊ່ວຍງ່າຍ ໂດຍສະເພາະແມ່ຍິງທີ່ມີຄວາມຮູ້ກ່ຽວກັບການເກີດລູກ ແລະມີປະສົບການ. ແລະເຫດຜົນອັນທີສາມ: ມັນຂ້ອນຂ້າງຍາກທີ່ຈະຮັກສາປະເພນີ ຖ້າຫາກເກີດລູກໃນໂຮງໝໍ.



ການອອກລູກ

ຫຼັງຈາກການເກີດລູກແລ້ວ ແມ່ຜູ້ໃຫ້ກຳເນີດລູກຈະຕ້ອງຢູ່ກຳ (ຢູ່ໄຟ) 30 ວັນ. ລາວຈະນັ່ງຢູ່ໃກ້ໄຟໝົດມື້ ເພື່ອເຮັດໃຫ້ຕົນໂຕອົບອຸ່ນ ແລະໃຫ້ສຸຂະພາບເປັນປົກກະຕິ. ແລ້ວມີການຄະລຳອາຫານ (ກິນໄດ້ແຕ່ເຂົ້າລ້ຳໆ ແລະນ້ຳອຸ່ນໃນໄລຍະ 3 ວັນ). ຫຼັງຈາກນັ້ນ ກໍ່ສາມາດກິນປາແຫ້ງ, ຊີ້ນແຫ້ງ ເທື່ອລະໜ້ອຍກໍ່ໄດ້. ແຕ່ວ່າ ເຄັມແລະເຜັດບໍ່ໄດ້ໃນປີໜຶ່ງ. ການຄະລຳແນວນັ້ນແມ່ນຄວາມຮູ້ທ້ອງຖິ່ນເພື່ອບໍ່ໃຫ້ແມ່ເສຍສຸຂະພາບ.

30 ວັນຕໍ່ມາ ແມ່ແອນ້ອຍອອກກຳ ແລະມີການຕັ້ງຊື່ໃຫ້ແອນ້ອຍ ໃນພິທີບາສີສູ່ຂວັນ. ຊາວບ້ານຫຼາຍຄົນກໍ່ຈະມາຮ່ວມພິທີບາສີສູ່ຂວັນ ເພື່ອອວຍໄຊໃຫ້ພອນແອນ້ອຍ ໃຫ້ມີສຸຂະພາບແຂງແຮງ ແລະມີຄວາມສຸກ. ໃນພິທີສູ່ຂວັນນັ້ນ ຈະມີການຈົດຊື່ຂອງແອນ້ອຍ, ວັນທີເດືອນປີເກີດຂອງແອນ້ອຍລົງໃສ່ໃບລານ ແລະຮັກສາໄວ້ຈົນເຖິງວັນຕາຍ. ຫຼັງຈາກນັ້ນແລ້ວເດັກນ້ອຍກໍ່ຈະໃຫຍ່ເປັນບ່າວເປັນສາວ ໂດຍການລ້ຽງດູຈາກພໍ່ແມ່ ແລະຊາວບ້ານອື່ນໆ.

(2) ການບວດເປັນສາມະເນນ (ຈີ)

ຊົນເຜົ່າລື້ ແມ່ນນັບຖືສາສະໜາພຸດ ແລະຮັກສາຮີດຄອງປະເພນີຄື ເດັກນ້ອຍຊາຍໝົດທຸກຄົນກໍ່ຈະບວດເປັນສາມະເນນ. ການເຂົ້າບວດນັ້ນໝາຍເຖິງວ່າ ຈະກ້າວເຂົ້າສູ່ການເປັນຊາວໜຸ່ມ. ຖ້າຫາກຜູ້ຊາຍບໍ່ບວດກໍ່ຈະບໍ່ມີຄົນນັບຖື ແລະຫາເມຍກໍ່ຍາກ. ສະນັ້ນ ທຸກໆປີກໍ່ຈະມີເດັກນ້ອຍປະມານ 10 ຄົນ ທີ່ຈົບປໍ 5 ແລ້ວ ກໍ່ຈະໄປບວດເປັນຈີ ແລະຢູ່ນຳກັນໃນວັດ. ແລ້ວຈະຮຽນກ່ຽວກັບສາສະໜານຳຈີ່ທີ່ບວດກ່ອນ. ເມື່ອສິກອອກມາແລ້ວກໍ່ຈະຮັບຜິດຊອບ ວຽກງານທາງສາສະໜາໃນບ້ານ.



ວຽກງານຂອງຈີ





ການແຕ່ງງານ

(3) ການແຕ່ງງານ

ການແຕ່ງງານ ໃນບ້ານນາຍາງໃຕ້ ບໍ່ແມ່ນພຽງແຕ່ເລື້ອງຂອງຄູ່ບ່າວສາວເທົ່ານັ້ນ, ມັນລວມເຖິງທັງພໍ່ແມ່ພີ່ນ້ອງໝົດທຸກຄົນ. ຕາມປົກກະຕິແລ້ວຜູ້ຊາຍທີ່ມີອາຍຸເຖິງກະສຽນພໍທີ່ຈະແຕ່ງງານໄດ້ແລ້ວ ຈະໄປຫຼິ້ນນຳຜູ້ຍິງລຸ້ນດຽວກັນ. ຫຼັງຈາກເປັນທີ່ຮູ້ຈັກກັນດີແລ້ວ ແລະທາງພໍ່ແມ່ກໍ່ເຫັນດີຍອມຮັບຄວາມສຳພັນຂອງພວກເຂົາ, ພີ່ນ້ອງທັງສອງຝ່າຍກໍ່ຈະປຶກສາກັນເລື້ອງການແຕ່ງງານຂອງລູກ ຫຼື ຫຼານເຂົາເຈົ້າ. ບໍ່ຄືກັນກັບຊົນເຜົ່າລາວລຸ່ມທົ່ວໆໄປ, ຄືຊົນເຜົ່າລື້ຈະບໍ່ມີຄ່າສິນສອດສຳຫຼັບເຈົ້າສາວ ເພາະທັງສອງຝ່າຍຈະເປັນຄົນຊ່ວຍກັນຈ່າຍ. ທາງເຈົ້າບ່າວຈະເປັນຝ່າຍກະກຽມເຄື່ອງຕ່າງໆ ເຊັ່ນ ສິ້ນ, ເສື້ອຜ້າອາພອນອື່ນໆເປັນຕົ້ນ, ແຕ່ທັງນີ້ທັງນັ້ນກໍ່ສຸດແລ້ວແຕ່ຄວາມເໝາະສົມ.

ໃນມື້ແຕ່ງງານ ທາງພີ່ນ້ອງຂອງເຈົ້າບ່າວທັງໝົດ ກໍ່ຈະໄປເຮືອນຂອງເຈົ້າບ່າວກ່ອນ, ສ່ວນພີ່ນ້ອງຂອງເຈົ້າສາວ ກໍ່ຈະລໍຖ້າຂະບວນແຫ່ເຈົ້າບ່າວຢູ່ທີ່ບ້ານ. ຫຼັງຈາກໄປຮອດຍາດພີ່ນ້ອງຂອງເຈົ້າສາວຈະກ່າວຕ້ອນຮັບ, ຈາກນັ້ນ ກໍ່ຈະເຂົ້າພິທີບາສີສູ່ຂວັນ ອວຍພອນໄຊໃຫ້ຄູ່ບ່າວສາວຈົ່ງມີຄວາມສຸກ ຫຼັງຈາກເສັດພິທີບາສີສູ່ຂວັນແລ້ວ ເຈົ້າພາບກໍ່ຈະເຊີນແຂກກິນເຂົ້າ, ກິນເຫຼົ້າ, ຮ້ອງເພງ ແລະ ຟ້ອນລຳວົງສາມັກຄີນຳກັນ. ບາງຄູ່ຈະຈັດພິທີໃຫຍ່ໆ: ຂ້າຄວາຍ, ເອົາດົນຕີມາຈັດງານຢ່າງມະໂຫລານ, ແຕ່ບາງຄູ່ຈະມີພຽງແຕ່ສາມເຖົ້າສີ່ແກ່ເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ ແລ້ວແຕ່ຍາດພີ່ນ້ອງຂອງເຂົາເຈົ້າ.

ຫຼັງຈາກແຕ່ງງານແລ້ວ ບາງຄູ່ຢູ່ນຳຄອບຄົວຂອງຜົວ, ບາງຄູ່ຢູ່ນຳຄອບຄົວຂອງເມຍກ່ອນ, ແຕ່ບາງຄູ່ກໍ່ຕັ້ງເຮືອນຢູ່ເອງ, ແນວໃດກໍ່ແລ້ວແຕ່ເຈົ້າບ່າວເຈົ້າສາວ. ໄດ້ຖືກຮັບເປັນຜົວເມຍກັນແທ້ໆ ແລະພວກເຂົາຈະມີໜ້າທີ່ຮັບຜິດຊອບຕ່າງໆ ແລະເປັນຫົວໜ້າຄອບຄົວ.

(4) ການຕາຍ

ຢູ່ບ້ານນາຍາງໃຕ້ ການຕາຍມີ 2 ກໍລະນີຄື: ການຕາຍຢູ່ໃນບ້ານ ແລະການຕາຍຢູ່ນອກບ້ານເຊັ່ນ ຕາຍຍ້ອນອຸບັດຕິເຫດ. ສ່ວນຫຼາຍແມ່ນຕາຍຢູ່ໃນບ້ານຈະອ້ອມລ້ອມດ້ວຍຍາດຕິພີ່ນ້ອງເພື່ອນມິດ. ໃນກໍລະນີນີ້ຈະມີຫຼາຍໆຄົນໄປເບິ່ງຈົນຮອດວາລະສຸດທ້າຍ ແລະຖ້າມີຄົນຕາຍ ໝົດທຸກໆຫຼັງຄາເຮືອນໃນບ້ານຈະຮ່ວມບໍ່ພຽງແຕ່ພີ່ນ້ອງເທົ່ານັ້ນ ຊາວບ້ານທັງຫຼາຍກໍ່ຈະມາເພື່ອສະແດງຄວາມອົບອຸ່ນແກ່ຄອບຄົວທີ່ມີຄົນຕາຍ.


ຕາມປົກກະຕິແລ້ວຈະເອົາສົບໄວ້ມື້ໜຶ່ງ ແຕ່ຖ້າຫາກຖືກມື້ບໍ່ດີແລ້ວ ກໍ່ຈະຊອກຫາມື້ທີ່ສົມຄວນ, ບາງເທື່ອອາດຈະເປັນ 2-3 ມື້. ໃນໄລຍະນັ້ນຈະມີຊາວບ້ານຕ່າງໆມາຢູ່ນຳ ແລະຊ່ວຍເຮັດວຽກຕ່າງໆ ທັງກາງເວັນແລະກາງຄືນ. ພິທີປົງສົບ ພວກເຂົາຈະຫາມໂລງສົບອອກໄປປ່າຊ້າຂ້າງບ້ານ ເພື່ອເອົາຂຶ້ນໃສ່ກອງຟອນແລ້ວເອົາໄຟຈູດ. ມື້ຕໍ່ມາ ຄອບຄົວກໍ່ຈະໄປເກັບດູກແລ້ວເອົາຝັງລົງດິນ.

ອີກດ້ານໜຶ່ງ ໃນກໍລະນີຄົນຕາຍຢູ່ນອກບ້ານ ຈະບໍ່ໃຫ້ເອົາເຂົ້າມາໃນບ້ານ. ສະນັ້ນ ຍາດພີ່ນ້ອງຈະເຮັດພິທີຈູດຢູ່ນອກບ້ານແລ້ວເອົາດູກຝັງດິນເຊັ່ນກັນ.

ພວກເຮົາເຫັນໄດ້ວ່າ ຊາວບ້ານນາຍາງໃຕ້ ຍັງຮັກສາຮີດຄອງປະເພນີ ຈາກການເກີດເຖິງການຕາຍ ຕັ້ງແຕ່ອາດີດຜ່ານມາເປັນແນວໃດກໍ່ຍັງຄືເກົ່າ. ພວກເຮົາສາມາດເບິ່ງການຊ່ວຍເຫຼືອເຊິ່ງກັນແລະກັນ. ຜ່ານການດຳລົງຊີວິດຂອງເຂົາເຈົ້າ ເວລາໃດມີໂອກາດບໍ່ວ່າຊາວໜຸ່ມ ຫຼືເຖົ້າແກ່, ເປັນຍິງ ຫຼືເປັນຊາຍ ກໍ່ຈະຊ່ວຍໆກັນ. ພວກເຮົາຈະເຫັນການຊ່ວຍເຫຼືອກັນໃນໂອກາດງານບຸນຕ່າງໆ ເຊັ່ນ ບຸນປະຈຳປີເປັນຕົ້ນ.

4. ຮີດຄອງປະເພນີຕ່າງໆ

ບ້ານນາຍາງໃຕ້ ເປັນບ້ານວັດທະນະທຳ ເຊິ່ງຖືກຄັດເລືອກຈາກ ກະຊວງ ຖະແຫຼງຂ່າວແລະວັດທະນະທຳ ໃນປີ 2002. ບ້ານວັດທະນະທຳມີຄວາມໝາຍວ່າ ເປັນບ້ານທີ່ຮັກສາຮີດຄອງປະເພ ນີ. ບ້ານນາຍາງໃຕ້ກໍ່ເປັນບ້ານໜຶ່ງທີ່ຮັກສາຮີດຄອງປະເພນີ. ພວກເຮົາຈະເຫັນໄດ້ຈາກການເຮັດບຸນສິນກິນທານຕ່າງໆເຊັ່ນ ບຸນໃຫຍ່ໆ ມີ 4 ບຸນ ຄື: ບຸນປີໃໝ່, ບຸນເຂົ້າພັນສາ, ບຸນພະເວດ ແລະບຸນອອກພັນສາ. ແຕ່ມື້ນີ້ມີເວລາໜ້ອຍ ສະນັ້ນ ຂ້າພະເຈົ້າຈະແນະນຳແຕ່ບຸນປີໃໝ່ ແລະບຸນພະເວດ.





ບຸນປີໃໝ່

(1) ບຸນປີໃໝ່

ຊາວບ້ານນາຍາງໃຕ້ ສະຫຼອງປີໃໝ່ 3 ມື້. ໃນຕອນເຊົ້າຂອງມື້ທີໜຶ່ງ ແມ່ເຮືອນແຕ່ລະຄອບຄົວຈະເອົາເສື້ອຜ້າອາພອນຂອງຄອບຄົວໄປວັດ ເພື່ອເຮັດພິທີສະເດາະເຄາະ ແລະເພື່ອໃຫ້ມີສຸຂະພາບແຂງແຮງ. ແລ້ວຫົວໜ້າຄອບຄົວຈະຈູດພຸເພື່ອເປັນການຂັບໄລ່ສິ່ງບໍ່ດີອອກໄປ. ຈາກນັ້ນຕົວແທນຂອງແຕ່ລະຄອບຄົວກໍ່ຈະໄປເຮືອນນາຍບ້ານ ໄປຊ່ວຍກັນແປງຫຼັກທຸງຍາວໆ (ເມື່ອແປງຫຼັກທຸງແລ້ວ) ແລະກິນເຂົ້າສາມັກຄີກັນ.

ໃນມື້ທີສອງ ແຕ່ລະຄອບຄົວຈະກະກຽມອາຫານເອົາໄປວັດ ເພື່ອອຸທິດບຸນໃຫ້ຜູ້ທີ່ໄດ້ຕາຍຈາກໄປ. ໃນຕອນບ່າຍ ກຸ່ມຄົນເຖົ້າແກ່ໜຸ່ມສາວຈະເອົານ້ຳໄປວັດ ເພື່ອເຮັດພິທີສົງນ້ຳພະ ແລະສາມະເນນໃນວັດ. ຫຼັງຈາກນັ້ນກໍ່ຈະພາກັນຂົນຊາຍໄປວັດ ເພື່ອຕົບພະທາດຊາຍເປັນ 4 ກອງ.

ໃນຕອນເຊົ້າຂອງມື້ສຸດທ້າຍ ປະຊາຊົນຈະເອົາເຂົ້າຕົ້ມ, ເຂົ້າໜົມ, ອາຫານຕ່າງໆ ໄປໃສ່ພະທາດຊາຍນັ້ນ. ຫຼັງຈາກແລ້ວພິທີທາງວັດ ປະຊາຊົນຈະແຫ່ກັນໄປເຮືອນຂອງນາຍ ບ້ານເປັນການບາສີສູ່ຂວັນໃຫ້ນາຍບ້ານ. ໝົດທຸກຄົນຈະນັ່ງຄຸເຂົ່າເພື່ອເປັນການຂໍຄາລະວະອະໄພໃຫ້ ທີ່ໄດ້ເຮັດຜິດໃນໄລຍະຜ່ານມາ ແລະຂໍອວຍໄຊໃຫ້ພອນປີໃໝ່. ຫຼັງຈາກນັ້ນກໍ່ຈະກິນເຂົ້າສາມັກຄີກັນ ຈາກນັ້ນຕອນບ່າຍກໍ່ຈະມີການຈູດບັ້ງໄຟສະເຫຼີມສະຫຼອງປີໃໝ່.

(2) ບຸນພະເວດ

ບຸນພະເວດສັນດອນ ແມ່ນບຸນທີ່ໃຫຍ່ທີ່ສຸດໃນບ້ານນາຍາງໃຕ້. ຕາມປົກກະຕິແລ້ວ ລາວລຸ່ມທົ່ວໄປຈະເຮັດບຸນພະເວດໃນເດືອນ 3 ຕາມປະຕິທິນລາວ, ແຕ່ຊາວບ້ານນາຍາງໃຕ້ ເຮັດໃນເດືອນ 10 ລາວ. ໃນບ້ານນາຍາງໃຕ້ນັ້ນ ການເຮັດບຸນພະເວດມີຄວາມໝາຍສາມຢ່າງຄື: ໜຶ່ງການ

ຟັງທຳມະເທດສະໜາ, ສອງເປັນການເຮັດບຸນໄປໃຫ້ຄົນທີ່ຕາຍ ແລະສຸດທ້າຍເປັນການສະຫຼອງຈ໊ອບວດໃໝ່.

ກ່ອນທີ່ຈະເຮັດບຸນພວກເຂົາຈະແປງຜ້າສາດດ້ວຍໄມ້ໃຜ່ ແລ້ວເອົາເຈ້ຍມາຕິດ. ຜ້າສາດທີ່ເຮັດໃຫ້ຄົນທີ່ຕາຍນັ້ນ ຈະເຮັດດ້ວຍຄອບຄົວຂອງເຂົາເຈົ້າ ແລະຜ້າສາດທີ່ເຮັດໃຫ້ຈ໊ອບວດໃໝ່ນັ້ນ ຈະເຮັດດ້ວຍຍາດຕິພີ່ນ້ອງ ແລະຄອບຄົວຂອງພໍ່ຍິກແມ່ຍິກ (ຄົນທີ່ເອົາໄປບວດ). ຫຼັງຈາກແປງແລ້ວກໍ່ຈະປະດັບຕົບແຕ່ງດ້ວຍເຄື່ອງຕ່າງໆ ແລະຫາມໄປວັດ.

ໃນເວລາເຮັດບຸນພະເວດ 5 ວັນ ປະຊາຊົນຈະຢູ່ວັດຕະຫຼອດ ເພື່ອຟັງທຳມະເທດສະໜາຈາກພະສົງສາມະເນນ ແລະໃນເວລານັ້ນພີ່ນ້ອງບ້ານອື່ນໆ ຈະມາຢາມເພື່ອຊ່ວຍວຽກຕ່າງໆ.

ຫຼັງຈາກແລ້ວບຸນ ຜ້າສາດຂອງພະສົງກໍ່ເອົາຖວາຍໃຫ້ພະສົງ ສ່ວນທີ່ອຸທິດໃຫ້ຄົນຕາຍກໍ່ຈະເອົາຖວາຍໃຫ້ວັດ. ຕາມທຳມະດາເຄື່ອງໃນຜ້າສາດທີ່ອຸທິດໄປໃຫ້ຄົນຕາຍນັ້ນ ທາງວັດຈະໃຫ້ຊາວບ້ານບູຊາເອົາເມື່ອ, ຈາກນັ້ນຊາວບ້ານຈະຮ້ອງເພງລຳວົງ ແລະກິນເຂົ້າສາມັກຄີກັນ.





ບຸນພະເວດ

ໃນໂອກາດເຮັດບຸນ ພວກເຮົາໄດ້ເຫັນຊາວບ້ານຊ່ວຍກັນເຮັດວຽກ ແລະນ່ວມຊື່ນນຳກັນ. ບຸນຕ່າງໆເຫຼົ່ານັ້ນ ແມ່ນໂອກາດອັນດີອັນໜຶ່ງ ທີ່ຈະໄດ້ລະລຶກເຖິງຍາດພີ່ນ້ອງ ແລະອີກອັນໜຶ່ງນັ້ນກໍ່ເປັນການເຮັດໃຫ້ຊາວບ້ານສາມັກຄີກັນຂຶ້ນ.

5. ການປ່ຽນແປງທາງດ້ານສັງຄົມ

ຕາມທີ່ໄດ້ກ່າວມາຂ້າງເທິງນີ້ ພວກເຮົາພໍເຫັນໄດ້ວ່າ ຊາວບ້ານຈະຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນທຸກໆເລື່ອງ. ມັນເປັນຄວາມຮູ້ທີ່ສືບທອດກັນມາ (ເປັນຄວາມສຳນຶກ) ເພື່ອການໃຊ້ຊີວິດຢູ່ ຮ່ວມກັນໃນຊົນນະບົດ. ໃນອີກແງ່ໜຶ່ງຄື ຊາວບ້ານບໍ່ວ່າຊາຍ ຫຼືຍິງ, ເຖົ້າແກ່ຊາວໜຸ່ມທຸກໆຄົນລ້ວນ ແຕ່ມີພາລະຮັບຜິດຊອບເປັນຂອງຕົນເອງ. ພວກເຂົາໃຫ້ກຽດໃຫ້ຄວາມສຳຄັນ ແລະໂອບອ້ອມອາລີ ເຊິ່ງກັນແລະກັນຕົວຢ່າງເຊັ່ນ: ນ້ຳໃຈໃນການຊ່ວຍເຫຼືອນັ້ນ ແມ່ນມໍລະດົກອັນລ້ຳຄ່າທີ່ສືບຖອດກັນ ມາຈົນເຖິງທຸກວັນນີ້.

ແຕ່ວ່າວິທີການດຳລົງຊີວິດ ແລະວິທີຄິດຂອງເຂົາເຈົ້າເລີ່ມມີການປ່ຽນແປງ. ໃນອາດີດຜ່ານ ມາການຊ່ວຍເຫຼືອກັນແມ່ນເລື້ອງປົກກະຕິ, ຖ້າມີໂອກາດແລ້ວກໍ່ຈະເຮັດວຽກນຳກັນ. ຈາກນັ້ນເຈົ້າ ພາບກໍ່ລ້ຽງອາຫານຫຼັງຈາກແລ້ວວຽກນັ້ນໆ. ແຕ່ວ່າໃນປະຈຸບັນນີ້ ເຂົາເຈົ້າມັກຈ່າຍເງິນໃຫ້ຄົນທີ່ມາ ຊ່ວຍເຫຼືອແທນການລ້ຽງອາຫານ. ເຫດຜົນອັນທີໜຶ່ງຄື: ການຈ່າຍເງິນໃຫ້ ເປັນການປະຢັດກວ່າການ ລ້ຽງອາຫານ ແລະເຫດຜົນອັນທີສອງຄື: ພວກເຂົາບໍ່ມີເວລາແຕ່ງກິນ, ລ້າງຖ້ວຍ. ມັນຈະງ່າຍກວ່າ ເຮົາສາມາດຈ່າຍເງິນໃຫ້ຄົນທີ່ມາເຮັດວຽກໂດຍກົງ. ເຫດຜົນທີສາມຄື: ແຮງງານມີບໍ່ພຽງພໍທີ່ໄປ ຊ່ວຍເຫຼືອຄອບຄົວອື່ນ. ເພາະໃນປະຈຸບັນນີ້ ໃນຄອບຄົວໜຶ່ງມີເດັກນ້ອຍພຽງສອງສາມຄົນເທົ່ານັ້ນ ແລະຍິ່ງໄປກວ່ານັ້ນເດັກນ້ອຍຕ້ອງໄປໂຮງຮຽນ.

ຕາມທີ່ຂ້າພະເຈົ້າໄດ້ກ່າວມາຂ້າງເທິງນັ້ນ, ເດັກນ້ອຍຊາຍໝົດທຸກຄົນ ຫຼັງຈາກຮຽນຈົບປະ ຖົມແລ້ວ ຈະອອກບວດເປັນສາມະເນນເຊິ່ງເປັນປະເພນີ. ແຕ່ຄວາມຈິງແລ້ວແມ່ນເພື່ອຢາກຮຽນ ໜັງສືຕໍ່ໃນເມືອງ. ເຂົາເຈົ້າຈະໄປໃນເມືອງ ແລະຮຽນໜັງສືຕໍ່, ຫຼັງຈາກນັ້ນສຶກຢູ່ໃນເມືອງ ແລະຫາ ວຽກເຮັດ, ບາງຄົນກໍ່ສ້າງຄອບຄົວ ແລະໃຊ້ຊີວິດຢູ່ໃນເມືອງເລີຍ.

ບໍ່ພຽງແຕ່ຜູ້ຊາຍເທົ່ານັ້ນ ຜູ້ຍິງກໍ່ຢາກອອກຈາກບ້ານເພື່ອໄປໃນເມືອງ. ມີຜູ້ຍິງຫຼາຍໆຄົນ ຢຸດການຮຽນເພາະທາງບ້ານບໍ່ມີໂຮງຮຽນມັດທະຍົມ. ຫຼັງຈາກຈົບປະຖົມແລ້ວ ເຂົາເຈົ້າມາຊ່ວຍວຽກ ຄອບຄົວ. ບາງຄົນກໍ່ເບື່ອການດຳລົງຊີວິດໃນຊົນນະບົດ ພະຍາຍາມຫາທາງເພື່ອໄປໃຊ້ຊີວິດຢູ່ໃນ ເມືອງ. ເຊິ່ງພໍ່ແມ່ບໍ່ສາມາດຫ້າມເຂົາໄດ້ ເພາະຮູ້ຢູ່ເຕັມໃຈວ່າ ການເຮັດວຽກໃນຊົນນະບົດມັນລຳ ບາກຂະໜາດໃດ. ເຖິງແມ່ນວ່າຄອບຄົວຈະທຸກຍາກ ແຕ່ກໍ່ຢາກໃຫ້ລູກສະບາຍມີຢູ່ມີກິນ.

ແນວໃດກໍ່ຕາມ ການດຳລົງຊີວິດຂອງເຂົາເຈົ້າກຳລັງປ່ຽນແປງ ແລະຈະປ່ຽນແປງຕໍ່ໄປໃນ ອະນາຄົດ. ແລ້ວວິທີຄິດກໍ່ຈະປ່ຽນແປງເຊັ່ນດຽວກັນ ? ນ້ຳໃຈການຊ່ວຍເຫຼືອກັນກໍ່ຈະໝົດໄປ ແລະ ພູມປັນຍາທ້ອງຖິ່ນກໍ່ອາດຈະຖືກລືມໄປ...?

ຂ້າພະເຈົ້າບໍ່ແນ່ໃຈວ່າ ພວກທ່ານຈະເຫັນດີກັບຄວາມຄິດຂອງຂ້າພະເຈົ້າຫຼືບໍ່. ແຕ່ຂ້າພະ ເຈົ້າເຊື່ອວ່າ ຄວາມມີນ້ຳໃຈຊ່ວຍເຫຼືອກັນຂອງປະຊາຊົນນັ້ນຄົງບໍ່ມີວັນສະຫຼາຍໄປ. ແນ່ນອນວິທີ ການຊ່ວຍເຫຼືອກັນນັ້ນອາດປ່ຽນແປງ ແຕ່ນັ້ນມັນກໍ່ປ່ຽນແປງພຽງແຕ່ວິທີ ຫຼືຮູບແບບເທົ່ານັ້ນ ໂດຍພື້ນ

ຖາມແລ້ວແມ່ນຍັງບໍ່ທັນປ່ຽນ. ຕົວຢ່າງເຊັ່ນ ພວກເຂົາມັກຈ່າຍເງິນໃຫ້ແທນການຊ່ວຍເຫຼືອກັນ ແຕ່ການຈ່າຍເງິນໃຫ້ນັ້ນພຽງແຕ່ເລັກໆນ້ອຍໆ ເທົ່ານັ້ນ (5000 ກີບ ຕໍ່ເຄິ່ງວັນ).

ຂ້າພະເຈົ້າເຂົ້າໃຈວ່າ ນີ້ເປັນວິທີການຊ່ວຍເຫຼືອກັນແບບໃໝ່. ພວກເຂົາພະຍາຍາມເພື່ອບໍ່ຢາກໃຫ້ພີ່ນ້ອງຂອງເຂົາເຈົ້າໜັກໃຈ. ຕາມທີ່ຂ້າພະເຈົ້າໄດ້ກ່າວມາຂ້າງເທິງນັ້ນແລ້ວວ່າ ບາງຄອບຄົວມີຄົນບໍ່ພຽງພໍທີ່ຈະໄປຕອບແທນແຮງງານໃຫ້ແກ່ຄອບຄົວອື່ນໆ ທີ່ເຂົາມາຊ່ວຍຄວບຄົວຕົນ. ພວກເຂົາກໍ່ເຂົ້າໃຈສະຖານະພາບ ບາງຄອບຄົວທີ່ຈະຈ່າຍເງິນໃຫ້ເພື່ອເປັນການຕອບແທນ.

ຍິ່ງໄປກວ່ານັ້ນ ຖ້າຫາກຊາວບ້ານ ເຂົາຢູ່ຫ່າງໄກບ້ານ ພວກເຂົາຈະຕິດຕໍ່ ແລະສົ່ງເງິນ ຫຼື ເຂົ້າປາອາຫານຕ່າງໆໄປຍັງຄອບຄົວຂອງເຂົາເຈົ້າ. ນີ້ກໍ່ເປັນວິທີການຊ່ວຍເຫຼືອເຊິ່ງກັນແລະກັນອີກຮູບແບບໃໝ່ ຫຼືເປັນຄວາມຮັບຜິດຊອບອີກຮູບແບບໜຶ່ງ. ພວກເຂົາຊ່ວຍເຫຼືອຄອບຄົວຂອງເຂົາເຈົ້າທາງນອກແທນການຊ່ວຍເຫຼືອກັນໃນບ້ານ.

ສະນັ້ນ ຂ້າພະເຈົ້າຂໍເວົ້າອີກວ່າ ແນວຄິດຂອງການຊ່ວຍເຫຼືອກັນນັ້ນຈະບໍ່ມີວັນໝົດສິ້ນ. ເຖິງແມ່ນວ່າສະພາບການທາງສັງຄົມຈະປ່ຽນແປງ ພວກເຂົາກໍ່ສາມາດຮັບໄດ້ ແລະມາປະຍຸກໃຊ້ກັບຄວາມຮູ້ທ້ອງຖິ່ນ ຫຼືສ້າງຄວາມຮູ້ທ້ອງຖິ່ນແບບໃໝ່.

ຜ່ານມາໜຶ່ງປີ ຂ້າພະເຈົ້າໄດ້ຮຽນຮູ້ຄວາມຮູ້ທ້ອງຖິ່ນຢ່າງເລິກເຊິ່ງ. ຂ້າພະເຈົ້າໄດ້ນຳສະເໜີໃນມື້ນີ້ເປັນພຽງແຕ່ສ່ວນໜຶ່ງເທົ່ານັ້ນ. ໃນໄລຍະນັ້ນຂ້າພະເຈົ້າຢູ່ກັບຄອບຄົວປະຊາຊົນ ແລະເຮັດວຽກນຳກັນກັບຊາວບ້ານ. ແລ້ວຂ້າພະເຈົ້າໄດ້ສ້າງມິດສະຫາຍກັບຊາວບ້ານຫຼາຍໆຄົນ. ຂ້າພະເຈົ້າມີຄວາມສຸກໃນການເຮັດວຽກຮ່ວມກັນແລະໄດ້ຮ່ວມທຸກໆວຽກງານກັບຊາວບ້ານ, ໝົດທຸກຄົນເປັນພີ່ເປັນນ້ອງກັນ, ເປັນເພື່ອນທີ່ດີ ແລະໃຫ້ຄຳແນະນຳແກ່ຂ້າພະເຈົ້າໂດຍດີຕະຫຼອດ.





ນາງ Kayoko ຢູ່ບ້ານນາຍາງໃຕ້

ມື້ນີ້ ໄດ້ມີຊາວບ້ານທີ່ຂ້າພະເຈົ້າໄປຢູ່ນຳມາຮ່ວມທີ່ນີ້. ຂ້າພະເຈົ້າຂໍສະແດງຄວາມຂອບໃຈອັນສຸດຊຶ້ງຕໍ່ເຂົາເຈົ້າມາໃນໂອກາດນີ້. ແລະແນ່ນອນຕ້ອງຂໍສະແດງຄວາມຂອບໃຈມາຍັງອາຈານ

ໝົດທຸກໆທ່ານ ໃນຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດລາວ. ຖ້າຫາກບໍ່ມີພວກທ່ານແລ້ວຂ້າພະເຈົ້າຄົງຈະບໍ່ສຳເລັດໃນວຽກງານອັນເຫຼົ່ານີ້, ໂດຍສະເພາະທ່ານ ດຣ. ສະເຫຼີມສັກ ພາບຸດດີ ເປັນອາຈານທີ່ປຶກສາຂອງຂ້າພະເຈົ້າ, ເຊິ່ງທ່ານໄດ້ໃຫ້ຄຳແນະນຳ ແລະໃຫ້ກຳລັງໃຈແກ່ຂ້າພະເຈົ້າມາໂດຍດີຕະຫຼອດ. ແລະອີກເທື່ອໜຶ່ງຕ້ອງຂໍຂອບໃຈນຳພະນັກງານໃນສູນຮ່ວມມື ລາວ-ຍີ່ປຸ່ນ ທີ່ໃຫ້ໂອກາດແກ່ຂ້າພະເຈົ້າໄດ້ມານຳສະເໜີວຽກງານຄົ້ນຄວ້າໃນຄັ້ງນີ້.

ໃນວາລະສຸດທ້າຍນີ້ ຕ້ອງຂໍຂອບໃຈນຳທຸກໆທ່ານ ທີ່ສະຫຼະເວລາມາຮ່ວມໃນມື້ນີ້ ແລະຕ້ອງຂໍໂທດຫຼາຍໆທີ່ພາສາລາວຂອງຂ້າພະເຈົ້າບໍ່ແຈ້ງປານໃດ, ເປັນແນວໃດກໍ່ຕາມຖ້າຫາກພວກທ່ານມີຄຳຖາມກໍ່ເຊີນຖາມຂ້າພະເຈົ້າເລີຍ.

ຂໍຂອບໃຈຫຼາຍໆກັບໝົດທຸກໆຄົນອີກຄັ້ງໜຶ່ງ ແລະຂ້າພະເຈົ້າຂໍຈົບການສະເໜີໄວ້ເທົ່ານີ້ກ່ອນ. (ຈົບ)

ສຶກສາການປ່ຽນແປງຂອງການນຳໃຊ້ທີ່ດິນ ແລະການດຳລົງຊີວິດຂອງປະຊາຊົນຢູ່ເຂດພາກເໜືອຂອງລາວ: ກໍລະນີສຶກສາຢູ່ເມືອງສິງ ແຂວງຫຼວງນ້ຳທາ

Yayoi FUJITA
ຜູ້ປະສານງານໂຄງການ
ສະໜັບສະໜູນໂດຍ
International Development Research Center (IDRC)

1. ຄວາມເປັນມາ

ຂ້າພະເຈົ້າຊື່ ນາງ Yayoi FUJITA ມາແຕ່ມະຫາວິທະຍາໄລ Kobe ປະເທດຍີ່ປຸ່ນ ຕັ້ງແຕ່ທ້າຍປີ 1999 ຂ້າພະເຈົ້າໄດ້ເຂົ້າມາເຮັດວຽກຢູ່ ສປປ ລາວ ໃນຖານະເປັນນັກສຶກສາປະລິນຍາເອກ ມາເກັບຂໍ້ມູນເພື່ອຂຽນບົດຈົບຊັ້ນປະລິນຍາເອກ. ໃນການເກັບກຳຂໍ້ມູນເພື່ອຂຽນບົດຈົບຊັ້ນປະລິນຍາເອກຄັ້ງນີ້ ແມ່ນຂ້າພະເຈົ້າໄດ້ຮ່ວມມືກັບບັນດາພະນັກງານຄູອາຈານ ແລະນັກສຶກສາຈາກຄະນະປ່າໄມ້. ໃນເວລາດຽວກັນນັ້ນ, ຂ້າພະເຈົ້າໄດ້ເປັນຜູ້ຊ່ວຍຈັດຕັ້ງປະຕິບັດໂຄງການຄົ້ນຄວ້າກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດຂອງຊຸມຊົນ ຊຶ່ງໄດ້ຮັບການສະໜັບສະໜູນຈາກອົງການຂອງສາກົນເພື່ອພັດທະນາການຄົ້ນຄວ້າ (IDRC), ປະເທດການາດາ (Canada). ປະຈຸບັນຂ້າພະເຈົ້າໄດ້ກາຍເປັນຜູ້ປະສານງານຂອງໂຄງການດັ່ງກ່າວຢູ່ໃນຄະນະປ່າໄມ້.

ໃນໂອກາດນີ້ ຂ້າພະເຈົ້າໄດ້ມີໂອກາດສະເໜີບົດຄົ້ນຄວ້າ ທີ່ພວກຂ້າພະເຈົ້າໄດ້ດຳເນີນມາເປັນເວລາ 2 ປີ ຢູ່ເຂດພາກເໜືອຂອງລາວ ໂດຍສະເພາະແມ່ນກໍລະນີສຶກສາຢູ່ເຂດເມືອງສິງ ແຂວງຫຼວງນ້ຳທາ. ທີມງານຄົ້ນຄວ້າຂອງພວກຂ້າພະເຈົ້າແມ່ນປະກອບມີ ດຣ. ສີທອງ ທອງມະນີວົງ ແລະອາຈານ ທຸມ ທອນ ວົງວິສຸກ ທີ່ເປັນອາຈານສອນສັງກັດຢູ່ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ



ນາງ Yayoi FUJITA

ເຫດຜົນທີ່ພວກຂ້າພະເຈົ້າສົນໃຈເຮັດການສຶກສາຢູ່ເຂດເມືອງສິງ ແຂວງຫຼວງນ້ຳທານີ້ແມ່ນເນື່ອງຈາກວ່າ ເມືອງສິງມີຊາຍແດນຕິດກັບ ສປ ຈີນ ແລະປະເທດພະມ້າ. ເຂດເມືອງສິງເປັນເຂດໜຶ່ງທີ່ນອນໃນບັນດາເມືອງທຸກຈົນຢູ່ເຂດພາກເໜືອຂອງລາວ. ປະຈຸບັນນີ້ ເສດຖະກິດຢູ່ໃນປະເທດຈີນກຳ

ລັງມີການຂະຫຍາຍໂຕ, ມັນມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນເຂດເມືອງສີ, ໂດຍສະເພາະປະຊາຊົນທີ່ອາໄສຢູ່ຕາມລຽບຊາຍແດນ. ຜົນກະທົບທາງດ້ານການຂະຫຍາຍຕົວຂອງເສດຖະກິດການຕະຫຼາດ, ບໍ່ພຽງແຕ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນເທົ່ານັ້ນ, ແຕ່ມັນຍັງມີຜົນສະທ້ອນຕໍ່ຮູບແບບການນຳໃຊ້ທີ່ດິນຂອງປະຊາຊົນຢູ່ໃນເຂດດັ່ງກ່າວ.

ບັນດາປະເດັນຕ່າງໆ ຂ້າງເທິງນີ້ ແມ່ນໄດ້ເຮັດໃຫ້ທີມງານຄົ້ນຄວ້າພວກເຮົາມີຄວາມສົນໃຈເຮັດການສຶກສາຄົ້ນຄວ້າກ່ຽວກັບການປ່ຽນແປງການນຳໃຊ້ທີ່ດິນ ແລະຮູບແບບການດຳລົງຊີວິດຂອງປະຊາຊົນຢູ່ເຂດເມືອງສີ, ແຂວງຫຼວງນ້ຳທາ.

ເມືອງສີເປັນເມືອງໜຶ່ງ ທີ່ມີປະຫວັດສາດຍາວນານ ແລະເຄີຍມີຜູ້ສົນໃຈເຮັດການສຶກສາມາແລ້ວ. ໃນສະຕະວັດທີ 19 ປະຊາຊົນຈຳນວນໜຶ່ງໄດ້ຍົກຍ້າຍມາຢູ່ເຂດດັ່ງກ່າວ. ຊຶ່ງເມືອງສີໄດ້ຖືກເອີ້ນວ່າ ເຂດເມືອງຊຽງແຂ ທີ່ຕັ້ງຢູ່ລຽບຕາມແຄມແມ່ນ້ຳຂອງ ທີ່ຄວາມສູງຈາກລະດັບໜ້ານ້ຳທະເລປະມານ 600 – 1,850 ແມັດ. ເຂດດັ່ງກ່າວມີເນື້ອທີ່ທັງໝົດ 1,650 ຕາຕະລາງກິໂລແມັດ, ມີພົນລະເມືອງແມ່ນ 30,300 ຄົນ (ຂໍ້ມູນປີ 1995) ໃນນັ້ນ 47% ແມ່ນຊົນເຜົ່າອາຂ່າ (ອີກໍ) ແລະ 41% ແມ່ນຊົນເຜົ່າຜູ້ໄທ, ໄທລື້, ໄທແດງ, ໄທເໜືອ ແລະ 12% ແມ່ນຊົນເຜົ່າອື່ນໆຄື ຢ້າວ, ມົ້ງ ສະນັ້ນ ເມືອງສີ ເປັນເມືອງໜຶ່ງທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະວັດທະນະທຳ.

2. ຈຸດປະສົງແລະວິທີການ

ຈຸດປະສົງຫຼັກຂອງການສຶກສານີ້ ແມ່ນເພື່ອສ້າງຄວາມເຂົ້າໃຈກ່ຽວກັບການປ່ຽນແປງການນຳໃຊ້ທີ່ດິນ ແລະການດຳລົງຊີວິດຂອງປະຊາຊົນໃນເຂດເມືອງສີແຂວງຫຼວງນ້ຳທາ. ໂດຍມີຈຸດປະສົງສະເພາະຂອງການສຶກສາແມ່ນເພື່ອ :

1. ເຂົ້າໃຈຮູບແບບຂອງການປ່ຽນແປງຂອງການນຳໃຊ້ທີ່ດິນ ໂດຍອີງໃສ່ລະບົບ GIS (Geographic Information System) ແລະວິເຄາະປະຫວັດຄວາມເປັນມາການຕັ້ງຖິ່ນຖານ
2. ເພື່ອສຶກສາສາຍເຫດ ທີ່ພາໃຫ້ມີການນຳໃຊ້ທີ່ດິນຢູ່ເຂດເມືອງສີມີການປ່ຽນແປງ
3. ສຶກສາເຖິງຜົນກະທົບຈາກການປ່ຽນແປງການນຳໃຊ້ທີ່ດິນຕໍ່ການຄຸ້ມຄອງຊັບພະຍາກອນ.

3. ຄຳຖາມຄົ້ນຄວ້າ

ເພື່ອເຮັດໃຫ້ການຄົ້ນຄວ້ານີ້ ໄດ້ຮັບຜົນສຳເລັດຕາມຈຸດປະສົງຂ້າງເທິງນີ້ແມ່ນທີມງານຄົ້ນຄວ້າພວກເຮົາໄດ້ຕັ້ງຄຳຖາມຄົ້ນຄວ້າໄວ້ດັ່ງລຸ່ມນີ້

1. ຮູບແບບການນຳໃຊ້ທີ່ດິນຂອງປະຊາຊົນໃນເມື່ອກ່ອນ ໄດ້ມີການປ່ຽນແປງຄືແນວໃດ? ສາຍເຫດຫຼັກໆ ທີ່ພາໃຫ້ຮູບແບບການນຳໃຊ້ທີ່ດິນມີການປ່ຽນແປງມີຫຍັງແດ່ ?
2. ການນຳເຂົ້າພືດກະສິກຳທີ່ເປັນສິນຄ້າ ໄດ້ເຮັດໃຫ້ຊີວິດຂອງປະຊາຊົນປ່ຽນແປງຄືແນວໃດ? ມັນໄດ້ເຮັດໃຫ້ປະຊາຊົນມີຄວາມສະເໝີພາບໃນການເຂົ້າຫາຊັບພະຍາກອນທຳມະຊາດບໍ່ ? ແລະໄດ້ຊ່ວຍໃຫ້ຊາວກະສິກອນຜູ້ທີ່ທຸກຈົນໄດ້ມີຊີວິດການເປັນຢູ່ທີ່ດີກວ່າເກົ່າບໍ?

4. ວິທີການສຶກສາ

1. ໃຊ້ລະບົບ GIS ເພື່ອວິເຄາະສະພາບພູມີສາດຂອງພື້ນທີ່ໂດຍສະເພາະແມ່ນສະພາບກາຍະພາບຂອງພື້ນທີ່ ແລະການປ່ຽນແປງຂອງປະຊາກອນພາຍໃນພື້ນທີ່ສຶກສາ

2. ພວກເຮົາກໍ່ໄດ້ທົບທວນບັນດານະໂຍບາຍ ແລະລະບຽບການທີ່ກ່ຽວຂ້ອງ ເພື່ອເຂົ້າໃຈປະຫວັດຄວາມເປັນມາຂອງການຄຸ້ມຄອງຊັບພະຍາກອນທີ່ດິນ.

3. ພວກເຮົາກໍ່ໄດ້ລົງໄປບ້ານ ແລະສຳພາດອຳນາດການປົກຄອງ ແລະຄອບຄົວພາຍໃນບ້ານ ເພື່ອເຂົ້າໃຈເຖິງການຄຸ້ມຄອງ ແລະນຳໃຊ້ທີ່ດິນຂອງຊຸມຊົນ ແລະຄອບຄົວພາຍໃນບ້ານ.

4. ສຳຫຼວດການຜະລິດກະສິກຳຂອງຄົວເຮືອນ ເພື່ອເຂົ້າໃຈກ່ຽວກັບລະບົບການຜະລິດກະສິກຳຂອງຄອບຄົວພ້ອມທັງຜົນຜະລິດໃນແຕ່ລະປີ.

5. ແຕ້ມແຜນວາດສະແດງຄວາມເຂົ້າໃຈຂອງປະຊາຊົນ (Cognitive Mapping) ເພື່ອໃຫ້ເຂົ້າໃຈເຖິງຄວາມຮູ້ສຶກຂອງປະຊາຊົນຕໍ່ກັບການນຳໃຊ້ທີ່ດິນເຂົ້າໃນການຜະລິດກະສິກຳ.


5. ຜົນການຄົ້ນຄວ້າ

ການຄົ້ນຄວ້າດັ່ງກ່າວນີ້ ເລີ້ມຕົ້ນມາແຕ່ທ້າຍປີ 2003 ມາຮອດນີ້ ພວກເຮົາກໍ່ໄດ້ສັງລວມເປັນບົດນ້ອຍໆ ທີ່ວ່າເປັນຜົນຂອງການຄົ້ນຄວ້າ. ອັນທີໜຶ່ງ ພວກເຮົາກໍ່ສັງລວມຂໍ້ມູນທາງດ້ານສະຖິຕິຂອງພົນລະເມືອງຢູ່ເຂດເມືອງສີງນີ້. ພວກເຮົາໄດ້ເຂົ້າໃຈວ່າ ຕັ້ງແຕ່ປີ 1995 ມາຮອດປີ 2005 ນີ້ ການຍົກຍ້າຍຂອງປະຊາກອນ ມັນເກີດຂຶ້ນຄືແນວໃດ ? ໃນຮູບເຫຼົ່ານີ້ (ເບິ່ງແຜນທີ່-1) ເຂດໃດທີ່ເປັນສີນ້ຳຕານໝາຍເຖິງເຂດປະຊາກອນໜາແໜ້ນ ແລ້ວກໍ່ເຂດໃດທີ່ເປັນສີເຫຼືອງ ແລະສີຂຽວ ໝາຍວ່າ ປະຊາກອນຈະບໍ່ໜາແໜ້ນປານໃດ. ສະນັ້ນ ເບິ່ງຕາມຮູບໂຕນີ້ ພວກເຮົາກໍ່ຈະເຂົ້າໃຈວ່າໃນປີ 1995 ປະຊາກອນຍັງກະແຈກກະຈາຍຢູ່ຫຼາຍບ່ອນ, ເຂດທີ່ວ່າສີນ້ຳຕານໃຫຍ່ສຸດໃນຮູບປີ 1995 ແມ່ນເຂດຕົວເມືອງສີງ ເຫຼືອນັ້ນເຂດທີ່ວ່າຈຸດນ້ອຍໆ ເປັນສີນ້ຳຕານຄືກັນ ອັນນັ້ນ ເປັນເຂດບ້ານຂອງເຂົ້າເຈົ້າ.


ມາຮອດປີ 2001 ເຂດຈຸດນ້ອຍໆສີນ້ຳຕານນີ້ ສີຢາກອ່ອນລົງກາຍເປັນສີເຫຼືອງ ຫຼືສີຂຽວ. ເຂົ້າເຈົ້າຍ້າຍໄປລວມຢູ່ເຂດໃກ້ໆ ຕົວເມືອງໆ ສີງ. ຮູບພາບປີ 2005 ນີ້ ມັນແຈ້ງເນາະ ຈຸດນ້ອຍໆ ທີ່ວ່າເປັນສີນ້ຳຕານນັ້ນ ມັນບໍ່ໄດ້ກະແຈກກະຈາຍປານໃດ. ມັນເຕົ້າໂຮມມາຢູ່ເຂດຕົວເມືອງໆ ສີງ ແລະຕົວເມືອງໆ ສີງກໍ່ກຳລັງຂະຫຍາຍໂຕຢູ່. ອັນນີ້ແມ່ນສະພາບທີ່ເຮົາເຫັນໃນປະຈຸບັນ.

ນີ້ແມ່ນເມືອງສີງຄືກັນ ພວກເຮົາເບິ່ງຕາມການກະແຈກກະຈາຍຕາມຊົນເຜົ່າ (ເບິ່ງແຜນທີ່ -2). ຢູ່ນີ້ ພວກເຮົາຈະສະແດງປີ 1995 ແລະ ປີ 2005. ປີ 1995 ຄືພວກເຮົາເຫັນໃນພາບເມື່ອກີ້ນີ້ ບັນດາໝູ່ບ້ານທີ່ຢູ່ໃນຂົງເຂດເມືອງສີງຍັງມີການກະແຈກກະຈາຍຢູ່ຫຼາຍບ່ອນ, ຈຸດສີຂຽວເປັນບ້ານຊົນເຜົ່າອາຂ່າ. ຖ້າທຽບໃສ່ປີ 1995 ກັບປີ 2005 ບ້ານອາຂ່າ ທີ່ກະແຈກກະຈາຍຢູ່ນັ້ນ ໄດ້ຍົກຍ້າຍມາຢູ່ລຽບຕາມແຄມທາງ.


ແຜນທີ່-1: ການປ່ຽນແປງດ້ານປະຊາກອນ



ປີ 1995




ປີ 2001




ປີ 2005

ແຜນທີ-2: ການກະແຈກກະຈາຍຂອງຊົນເຜົ່າ



ຢູ່ຄະນະປ່າໄມ້ ກໍ່ມີຊ່ຽວຊານທາງດ້ານ GIS ຄື ດຣ. ສີທອງ ທອງມະນີວົງ ເປັນວິຊາການທາງດ້ານນີ້ ໄດ້ວິເຄາະພາບຖ່າຍດາວທຽມເປັນສາມໄລຍະ. ຕັ້ງແຕ່ປີ 1973 ມາຮອດປີ 2000. ເພິ່ນໄດ້ສຶກສາເບິ່ງໜ້າປົກຂອງດິນ ແລະພະຍາຍາມເຂົ້າໃຈວ່າ ເຂດປ່າໄມ້ນັ້ນປ່ຽນແປງໄປຄືແນວໃດ. ສະນັ້ນ ຢູ່ໃນແຜນທີ່ນີ້ ເພິ່ນໄດ້ຕັດໃສ່ສາມຮູບສາມໄລຍະ ແລະກໍ່ພະຍາຍາມເບິ່ງຄືນວ່າໃນເຂດໃດແດ່ ປ່າໄມ້ມີການປ່ຽນແປງ (ເບິ່ງແຜນທີ-3). ສະນັ້ນ ເຄື່ອງໝາຍ FFF ທີ່ເປັນສີຂຽວເຂັ້ມ ອັນນີ້ເປັນເຂດທີ່ບໍ່ໄດ້ມີການແຕະຕ້ອງ ມັນເປັນປ່າໄມ້ຕະຫຼອດ. ແລະສີຂຽວອ່ອນ FFN ມັນເປັນເຂດມີການປ່ຽນແປງ, ປ່າໄມ້ປ່ຽນໄປເປັນດິນກະສິກຳ. ຂໍໃຫ້ເບິ່ງສີນີ້ໜ່ອຍໜຶ່ງເນາະ ເພາະວ່າໂຕນີ້ສະແດງໃຫ້ເຮົາເຂົ້າໃຈວ່າ ໃນໄລຍະປີ 1988 – ປີ 2000 ນີ້ ເປັນເຂດທີ່ວ່າມີການປ່ຽນແປງຫຼາຍທີ່ສຸດ, ສີຂຽວອ່ອນໆ ດັ່ງກ່າວນີ້ ສ່ວນຫຼາຍມັນນອນຢູ່ເຂດໃກ້ໆ ຕົວເມືອງໆ ສິ. ບ່ອນໃດເປັນສີຂາວນີ້ ມັນເປັນເຂດກະສິກຳຕະຫຼອດ.

ແຜນທີ່-3: ການປົກຄຸມຂອງເນື້ອທີ່ປ່າໄມ້ ແຕ່ປີ 1973 - 2000




ພວກເຮົາມາຄິດເບິ່ງນຳກັນວ່າ ຍ້ອນຫຍັງຮູບແບບການນຳໃຊ້ທີ່ດິນຈຶ່ງມີການປ່ຽນແປງໃນໄລຍະປີ 1988 ມາຮອດປະຈຸບັນ. ອັນທີໜຶ່ງ ພວກເຮົາໄດ້ເຫັນຢູ່ໃນຮູບພາບວ່າ ມີການຍົກຍ້າຍຂອງປະຊາຊົນ, ອັນນີ້ເປັນສາຍເຫດໜຶ່ງທີ່ເຮັດໃຫ້ມີການປ່ຽນແປງໃນການນຳໃຊ້ທີ່ດິນ. ອັນທີສອງ ຍ້ອນຫຍັງຄົນຈຶ່ງຍົກຍ້າຍ ຫຼືມີການປ່ຽນແປງການນຳໃຊ້ທີ່ດິນ. ຍ້ອນວ່າມີອິດທິພົນຂອງນະໂຍບາຍເຊັ່ນ ນະໂຍບາຍການຢຸດຕິການຖາງປ່າເຮັດໄຮ່ບໍ່ ຫຼືນະໂຍບາຍເຂົ້າເຕົ້າໂຮມບ້ານບໍ່ ສະນັ້ນ ມັນເຮັດໃຫ້ຄົນຍົກຍ້າຍໄປຢູ່ບ່ອນໃໝ່ ແລະບັນຫານີ້ຈະມີຜົນກະທົບຕໍ່ການນຳໃຊ້ທີ່ດິນ ແລະອີກອັນໜຶ່ງ ຄວາມສະດວກໃນການເຂົ້າຫາການປູກກະສິກຳເປັນສິນຄ້າ ແລະການປ່ຽນແປງທາງດ້ານເສດຖະກິດມີຜົນກະທົບຕໍ່ການນຳໃຊ້ທີ່ດິນຄືກັນ.

ຈະເວົ້າເຖິງນະໂຍບາຍຂອງລັດຖະບານຕັ້ງແຕ່ສະໄໝປີ 1980 ມານີ້ (ເບິ່ງຕາຕະລາງ-1) ຢູ່ເມືອງສີງກໍ່ຄືກັນ ອັນນີ້ເປັນນະໂຍບາຍຂອງປະເທດທີ່ມີຜົນກະທົບຕໍ່ການນຳໃຊ້ທີ່ດິນ, ຕັ້ງແຕ່ປີ 1980 ໄດ້ມີນະໂຍບາຍການຢຸດຕິການຖາງປ່າເຮັດໄຮ່ ແລ້ວກໍ່ເລີ້ມມີນະໂຍບາຍການປົກປັກຮັກສາເຂດປ່າໄມ້. ໃນປີ 1990 ຄືຫຼາຍຄົນໄດ້ຮູ້ເມາະ ໄດ້ມີນະໂຍບາຍແລະລະບຽບການທີ່ໄດ້ເວົ້າເຖິງການຄຸ້ມຄອງທີ່ດິນ ແລະການນຳໃຊ້ປ່າໄມ້ ໄດ້ປະກົດຂຶ້ນມາ. ໃນຂະນະດຽວກັນໃນປີ 1990 ເສດຖະກິດກຳລັງມີການຂະຫຍາຍໂຕ. ມາຮອດປີ 2000 ນີ້ ຍ້ອນວ່າ ເສດຖະກິດຂອງບັນດາປະເທດທີ່ຢູ່ໃກ້ຄຽງໄດ້ມີການຂະຫຍາຍໂຕ ແລະກໍ່ມີການຄ້າລະຫວ່າງປະເທດໄດ້ເກີດຂຶ້ນ.

ຕາຕະລາງ-1: ນະໂຍບາຍຂອງລັດຖະບານ


ຊ່ວງເວລາ	ນະໂຍບາຍທາງດ້ານເສດຖະກິດ-ສັງຄົມ	ການຄຸ້ມຄອງຊັບພະຍາກອນ
1980s	ເສດຖະກິດການຕະຫລາດ (NEM) ແລະ ການຄ້າເສລີ	ການຜະລິດກະສິກຳຄົງທີ່ ຜະລິດສະບຽງອາຫານ ໃຫ້ກຸ່ມກິນ ແຜນງານປະຕິບັດປ່າໄມ້ ເຂດຮ້ອນ (TFAP)
1990s	ການພັດທະນາແບບລວມສູນ ການກະຈາຍສິດລົງສູ່ທ້ອງຖິ່ນ	ການຈັດແບ່ງປະເພດທີ່ດິນ ແລະປ່າໄມ້ ການມອບດິນ-ມອບປ່າ ນະໂຍບາຍການຊື້ຂາຍໄມ້ ສົ່ງເສີມການຜະລິດກະສິກຳ ແບບຄົງທີ່
2000s	ລົບລ້າງຄວາມທຸກຈົນ ການຄ້າສາກົນ ແລະພາກພື້ນ	ຜະລິດກະສິກຳ ແລະນຳໃຊ້ຜົນຜະລິດຈາກປ່າໄມ້ ໃຫ້ເປັນສິນຄ້າ ແລະລົບລ້າງການປູກຟື້ນ

ເສັ້ນສະແດງ-1: ຜົນຜະລິດເຂົ້ານາ




Source: Littleton et al. (2004), DAFEO (2005)

ເສັ້ນສະແດງ-2: ຜົນຜະລິດພືດຜັກ (ເຂດທົ່ງພຽງ)



Source: DAFEO (2005)

ເສັ້ນສະແດງ-3: ຜົນຜະລິດພືດຜັກ (ເຂດພູດອຍ)



Source: DAFEO (2005)

ພວກເຮົາຈະກັບໄປເບິ່ງເມືອງສີງອີກ. ເບິ່ງຕາມຜົນຂອງການຜະລິດກະສິກຳຕັ້ງແຕ່ທ້າຍປີ 1990 ຈົນຮອດປີ 2004 ຜົນຜະລິດເຂົ້າຢູ່ເຂດສູງ ແລະເຂດທົ່ງພຽງໄດ້ມີການປ່ຽນແປງຄືແນວໃດ? ຖາບຟິກນີ້ ໄດ້ສະແດງໃຫ້ເຫັນວ່າ ສຳຫຼັບເນື້ອທີ່ນານີ້ ຂະຫຍາຍຈາກ 3,000 ເຮັກຕາ ມາຮອດປະຈຸບັນນີ້ ເພີ່ມເປັນ 5,500 ເຮັກຕາ (ເບິ່ງເສັ້ນສະແດງ-1). ໂຕທີ່ເປັນສີນ້ຳຕານອ່ອນ ສະແດງໃຫ້ເຫັນເຖິງເນື້ອທີ່ນາ. ສ່ວນເນື້ອທີ່ໄຮ່ຢູ່ເມືອງສີງໄດ້ມີຈຳນວນຫຼຸດລົງຈາກ 1,500 ເຮັກຕາ ໃນປີ 1999 ມາຮອດປະຈຸບັນນີ້ຍັງເຫຼືອປະມານ 1,000 ເຮັກຕາ. ໃນຂະນະດຽວກັນ ຜະລິດຕະພັນຜັກໄດ້ເພີ່ມຂຶ້ນຢູ່ທັງເຂດທົ່ງພຽງ ແລະເຂດພູດອຍ. ແຕ່ວ່າຢູ່ໃນຖາບຟິກນີ້ (ເບິ່ງເສັ້ນສະແດງ-2) ມັນສະແດງໃຫ້ເຫັນວ່າ ຢູ່ໃນເຂດທົ່ງພຽງເພີ່ມຂຶ້ນຫຼາຍແຕ່ປີ 2004 ມາຮອດປີ 2005 ໂດຍສະເພາະການປູກໝາກໂມ, ຫຼືວ່າຜັກທຽມ, ຜັກປະເພດອື່ນໆ. ຜົນຜະລິດເຫຼົ່ານີ້ໄດ້ເພີ່ມຂຶ້ນຫຼາຍ ແຕ່ເນື້ອທີ່ປູກຜັກ ຫຼືວ່າເນື້ອທີ່ກະສິກຳໂດຍທົ່ວໄປນັ້ນບໍ່ໝາຍຄວາມວ່າໄດ້ຂະຫຍາຍອອກ. ແຕ່ໄດ້ອາໄສເນື້ອທີ່ນາທີ່ບໍ່ໄດ້ນຳໃຊ້ໃນລະດູແລ້ງ. ແຕ່ສຳຫຼັບເຂດພູດອຍນີ້ ການຜະລິດກະສິກຳກໍ່ມີການປ່ຽນແປງຄືກັນ. ເຮົາມີໂຕເລກຕັ້ງແຕ່ປີ 2003 (ເບິ່ງເສັ້ນສະແດງ-3). ສີເຫຼືອງເປັນອ້ອຍ. ເຂົາເຈົ້າເລີ້ມປູກອ້ອຍຢູ່ເຂດໄຮ່ເກົ່າ ຫຼືປ່າເຫຼົ່າເກົ່າ. ເຂົາເຈົ້າໄດ້ປ່ຽນແປງເນື້ອທີ່ດັ່ງກ່າວມາເປັນເນື້ອທີ່ກະສິກຳຖາວອນ. ຢູ່ເບື້ອງຂວາສຸດຂອງຮູບຖາບຟິກ ພວກເຮົາຈະເຫັນການປູກຢາງພາລາ. ອັນນີ້ແມ່ນຫາກໍ່ເລີ້ມເຂົ້າມາ. ຫຼາຍຄົນໃນເຂດພູດອຍນີ້ ເຂົາເຈົ້າໄດ້ເລີ້ມປ່ຽນຈາກການເຮັດໄຮ່ມາປູກຢາງພາລາແທນ.

6. ສະຫຼຸບ


ຈາກການສຳຫຼວດແລະສັງລວມສະຖິຕິຕ່າງໆ ພວກເຮົາກໍ່ໄດ້ເຫັນວ່າ ພົນລະເມືອງຢູ່ເຂດເມືອງສິງປະຈຸບັນນີ້ ກຳລັງຫຼັ່ງໄຫຼເຂົ້າມາຢູ່ເຂດທົ່ງພຽງ ແລະຄວາມໜາແໜ້ນຂອງພົນລະເມືອງເຂດທົ່ງພຽງໄດ້ເພີ່ມຂຶ້ນຫຼາຍໃນຊ່ວງໄລຍະປີ 1995 – ປີ 2005. ພື້ນທີ່ໄຮ່ ແລະປ່າເຫຼົ່າ ທີ່ໄດ້ເຫັນໃນແຜນທີ່ມັນກໍ່ມີການປ່ຽນແປງຫຼາຍໃນຊ່ວງໄລຍະນີ້ຄືກັນ ເພາະວ່າຊາວກະສິກອນສ່ວນຫຼາຍໃນເຂດພູດອຍເຂົາເຈົ້າໄດ້ປ່ຽນເນື້ອທີ່ນີ້ໄປເປັນເນື້ອທີ່ກະສິກຳ ໂດຍປູກຢາງພາລາ, ອ້ອຍ, ສາລີ. ອີກອັນໜຶ່ງ ແຕ່ກ່ອນເຂົາເຈົ້າຜະລິດພຽງແຕ່ພໍກຸ້ມກິນຊື່ໆ. ແຕ່ວ່າປະຈຸບັນຊາວກະສິກອນທີ່ຢູ່ລຽບຕາມຊາຍແດນເລີ້ມປູກເພື່ອຂາຍ. ຢູ່ເຂດທົ່ງພຽງເຂົາເຈົ້າອີງໃສ່ການຜະລິດເຂົ້າກັບຜັກຕ່າງໆ ເປັນຕົ້ນຕໍ. ແຕ່ວ່າສ່ວນຢູ່ເຂດພູດອຍ ເຂົາເຈົ້າເລີ້ມປູກອ້ອຍ, ຢາງພາລາ. ສະນັ້ນ ໃນປະຈຸບັນນີ້ ພວກເຮົາກໍ່ເຫັນໄດ້ວ່າໄດ້ມີການປ່ຽນແປງຂອງການນຳໃຊ້ທີ່ດິນຫຼາຍຢູ່ເມືອງສິງ.

ແມ່ນໃຜແດ່ ທີ່ໄດ້ຮັບຜົນປະໂຫຍດຈາກການປ່ຽນແປງຂອງໂຕນີ້ ຫຼືຜູ້ໃດສາມາດເຂົ້າໄປຫາຊັບພະຍາກອນໄດ້ດີກວ່າໝູ່, ຜູ້ໃດເສຍຫຼາຍກວ່າໝູ່. ພວກເຮົາກໍ່ຄິດເບິ່ງ ເພາະວ່າແຕ່ລະຊຸມຊົນມັນບໍ່ຄືກັນ ຄືເມືອງສິງມີຄວາມຫຼາກຫຼາຍຂອງຊົນເຜົ່າ. ເຂົາເຈົ້າມີວັດທະນະທຳບໍ່ຄືກັນ. ການນຳໃຊ້ທີ່ດິນຂອງເຂົາເຈົ້າກໍ່ບໍ່ຄືກັນ. ສະນັ້ນ ຊຸມຊົນຂອງບັນດາຊົນເຜົ່ານີ້ອາດຈະບໍ່ຄືກັນໃນການນຳໃຊ້ທີ່ດິນ. ແຕ່ພາຍໃນຊຸມຊົນເອງ ມັນມີຄວາມແຕກຕ່າງກັນ. ຜູ້ມີດິນຫຼາຍ, ຜູ້ມີດິນໜ້ອຍ, ຜູ້ມີແຮງງານຫຼາຍ, ຜູ້ມີແຮງງານໜ້ອຍ, ອັນນີ້ກໍ່ຈະໄດ້ຮັບຜົນປະໂຫຍດຈາກການປ່ຽນແປງແຕກຕ່າງກັນ.

ທີ່ຈິງແລ້ວ ພວກເຮົາກໍ່ໄດ້ເລືອກເອົາ 7 ບ້ານຢູ່ 3 ເຂດໃນເມືອງສິງ ເພື່ອສຶກສາລາຍລະອຽດເລື້ອງຄວາມແຕກຕ່າງກັນລະຫວ່າງຄອບຄົວ ແລະລະຫວ່າງບ້ານໃນການນຳໃຊ້ທີ່ດິນ, ແຕ່ວ່າຢູ່ນີ້ກໍ່ຈະໄດ້ເຈາະຈີ້ມ 2 ບ້ານ. ອັນທີໜຶ່ງ ແມ່ນບ້ານມອມຊົນເຜົ່າລື້ ບ້ານນີ້ມີທີ່ຕັ້ງຕິດກັບຊາຍແດນຈີນ. ຮູບຟີກນີ້ (ເບິ່ງເສັ້ນສະແດງ-4) ມັນໄດ້ສະແດງໃຫ້ເຫັນວ່າ ຄົນທີ່ຍົກຍ້າຍມາກ່ອນ ແລະຍົກຍ້າຍມາຕາມຫຼັງເຂົາເຈົ້າເຂົ້າໄປຫາຊັບພະຍາກອນຄືແນວໃດ, ຜູ້ຍົກຍ້າຍມາກ່ອນຈະເປັນເສັ້ນສີຟ້າ, ຜູ້ມາຕາມຫຼັງຈະເປັນເສັ້ນສີແດງ, ຜູ້ມາຕາມຫຼັງກວ່າໝູ່ຈະເປັນສີຂຽວ. ເຮົາຈະເຫັນວ່າ ຜູ້ທີ່ມາກ່ອນໝູ່ສາມາດເຂົ້າໄປຫາ ແລະກໍ່ໄດ້ນຳໃຊ້ດິນນາ, ດິນໄຮ່, ດິນສວນຢາງພາລາ, ດິນສວນອ້ອຍ, ດິນສວນສາລີ ໄດ້ຫຼາຍກວ່າໝູ່. ເຂົາເຈົ້າມີເນື້ອທີ່ຫຼາຍກວ່າໝູ່. ຜູ້ມາຕາມຫຼັງກໍ່ມີດິນຄືກັນ ແຕ່ອາດຈະບໍ່ຫຼາຍຖ້າທຽບໃສ່ຜູ້ທີ່ມາຢູ່ກ່ອນ. ໂດຍສະເພາະດິນຢາງພາລານີ້ ອາດຈະຈອງບໍ່ໄດ້, ຜູ້ມາຕາມຫຼັງກວ່າໝູ່ຍິ່ງບໍ່ສາມາດເຂົ້າໄປນຳໃຊ້ທີ່ດິນໄດ້, ຈອງບໍ່ໄດ້. ອາດຈະໄດ້ກໍ່ມີແຕ່ດິນໄຮ່ເທົ່ານັ້ນ ແຕ່ດິນນາ, ດິນສວນຢາງພາລາ ຫຼືວ່າສວນສາລີ ອາດຈະຈອງບໍ່ໄດ້ຫຼາຍຖ້າທຽບໃສ່ຜູ້ຄົນທີ່ຍົກຍ້າຍມາຢູ່ກ່ອນ.


ກໍລະນີຂອງບ້ານລໍມີ (ເບິ່ງເສັ້ນສະແດງ-5) ເປັນບ້ານຂອງຊົນເຜົ່າອາຂ່າ. ມັນກໍ່ແຕກຕ່າງຄືກັນ. ເຮົາກໍ່ເຫັນໄດ້ວ່າ ຜູ້ມາຢູ່ກ່ອນມີສິດຫຼາຍກວ່າ ແລະສາມາດຈອງດິນໄດ້ຫຼາຍປະເພດເຊັ່ນ ດິນໄຮ່, ດິນສວນຢາງພາລາ, ດິນສວນອ້ອຍ ແລະດິນສວນສາລີ. ແຕ່ວ່າໃນກໍລະນີຂອງບ້ານລໍມີນີ້ ຜູ້ທຸກກໍ່ສາມາດປູກຢາງພາລາໄດ້ຄືກັນ, ເຂົາເຈົ້າອາດຈະບໍ່ສາມາດຈອງດິນເຮັດນາໄດ້ ຖ້າທຽບໃສ່ບ້ານເມື່ອກີ້ນີ້.

ເສັ້ນສະແດງ-4: ໄລຍະຍົກຍ້າຍກັບການຖືຄອງທີ່ດິນ ກໍລະນີໃນບ້ານມອມ (ໄຫລ້)




Source: Fieldwork (2005)

ເສັ້ນສະແດງ-5: ໄລຍະຍົກຍ້າຍກັບການຖືຄອງທີ່ດິນ ກໍລະນີໃນບ້ານລໍມີ (ອາຂ່າ)




Source: Fieldwork (2005)

ເສັ້ນສະແດງ-6: ການນຳໃຊ້ທີ່ດິນໃນລະດັບຄອບຄົວ



Source: Fieldwork (2005)

ເສັ້ນສະແດງ-7: ການນຳໃຊ້ແຮງງານຂອງຄອບຄົວ



Source: Fieldwork (2005)

ฐານຟີກນີ້ ມັນຈະແຍກອອກໄປຕາມເສດຖະກິດຂອງຄອບຄົວ (ເບິ່ງເສັ້ນສະແດງ-6). ຢູ່ໃນ 2 ບ້ານນີ້ ຜູ້ໃດສາມາດຈອງດິນໄດ້ຫຼາຍກວ່າໝູ່ ແລະສາມາດປູກພືດເປັນສິນຄ້າໄດ້ຫຼາຍກວ່າໝູ່. ເບິ່ງຕາມເສັ້ນຖານຟີກຢູ່ເບື້ອງຊ້າຍສຸດ ເປັນຄອບຄົວລະດັບຮັ່ງມີ, ຖັດລົງມານີ້ແມ່ນຄອບຄົວລະດັບປານກາງ ແລະຢູ່ເບື້ອງຂວາແມ່ນຄອບຄົວທີ່ຂາດກິນ. ຄອບຄົວທີ່ມີຖານະດີກວ່າໝູ່ ກໍ່ສາມາດປູກພືດກະສິກຳໄດ້ຫຼາຍປະເພດຄື ເຂົ້ານາ, ຢາງພາລາ, ອ້ອຍ, ສາລີ ແລະໄຮ່ຄືກັນ. ກົງກັນຂ້າມ ຄອບຄົວທີ່ວ່າ

ຂາດເຂົ້າກິນ ພວກເຂົາເຈົ້າອາດບໍ່ສາມາດລົງທຶນປູກຢາງພາລາ, ປູກອ້ອຍ ແລະປູກສາລີໄດ້ດີປານໃດ.

ສ່ວນຖາບຟີກນີ້ ເບິ່ງຕາມແຮງງານທີ່ພວກເຂົາເຈົ້າໃຊ້ (ເບິ່ງເສັ້ນສະແດງ-7), ພວກເຂົາເຈົ້າປູກບັນດາພືດຕ່າງໆ. ສະນັ້ນ ຢູ່ທີ່ນີ້ເຮົາກໍ່ເຫັນວ່າ ຄົນຮັ່ງມີສາມາດຈ້າງແຮງງານຜະລິດເຂົ້າ, ເຮັດໄຮ່, ປູກຢາງພາລາ ຫຼືວ່າປູກອ້ອຍໄດ້. ແຕ່ວ່າຄອບຄົວທີ່ທຸກຍາກ ບໍ່ມີຄວາມສາມາດຈ້າງແຮງງານໄດ້ເພື່ອປູກຢາງພາລາ ຫຼືສາລີ. ແຕ່ວ່າອ້ອຍນີ້ ມັນແຕກຕ່າງກັນໜ້ອຍໜຶ່ງ, ຍ້ອນວ່າເຂົາເຈົ້າສາມາດຢືມເງິນຈາກບໍລິສັດໄດ້. ສະນັ້ນ ຜູ້ທຸກກໍ່ສາມາດລົງທຶນໄດ້ ແລະຈ້າງແຮງງານ ເພື່ອປູກອ້ອຍໄດ້.

ດັ່ງນັ້ນ ສົມທຽບສະພາບຂອງ 2 ບ້ານນີ້ ເຮົາເຂົ້າໃຈຢູ່ບ່ອນວ່າ ຜູ້ທີ່ມາຕັ້ງຖິ່ນຖານກ່ອນໝູ່ສາມາດຈອງດິນໄດ້ຫຼາຍກວ່າໝູ່ ແລະມີສິດເຂົ້າໄປນຳໃຊ້ດິນໄດ້ຫຼາຍກວ່າໝູ່ໃນທັງສອງບ້ານ. ກົງກັນຂ້າມ ຜູ້ທີ່ມາຕາມຫຼັງເຂົາເຈົ້າຂ້ອນຂ້າງຂາດດິນ, ເຂົາເຈົ້າບໍ່ສາມາດຈອງດິນຄືຄົນທີ່ມາກ່ອນໂດຍສະເພາະຢູ່ບ້ານລໍ່ມີນີ້ ມັນເປັນດິນນາ, ສຳລັບບ້ານມອມເປັນບ້ານໄທລື້ ມີບັນຫາເພາະວ່າຂາດດິນສວນຢາງພາລາ ແລະຄອບຄົວທີ່ວ່າຮັ່ງມີເຂົາເຈົ້າໄດ້ມີໂອກາດຫຼາຍກວ່າໃນການຜະລິດກະສິກຳເປັນສິນຄ້າ.

ພາຍຫຼັງ ຈາກພວກເຮົາສຶກສາມາແລ້ວ ພວກເຮົາເຫັນຫຍັງແດ່ ທີ່ເປັນບັນຫາທີ່ໜ້າຈະເຈາะຈີ້ມໃນຂັ້ນຕໍ່ໄປ. ອັນທີໜຶ່ງ ຍ້ອນວ່າພົນລະເມືອງໄດ້ເພີ່ມຂຶ້ນຫຼາຍ ແລະມີຄວາມໜາແໜ້ນຢູ່ເຂດທົ່ງພຽງ ພວກເຮົາກໍ່ເຫັນວ່າ ຄວາມຂັດແຍ້ງລະຫວ່າງບ້ານຕໍ່ບ້ານ ຄອບຄົວຕໍ່ຄອບຄົວກໍ່ເພີ່ມຂຶ້ນຫຼາຍ.

ອັນທີສອງ ແຕ່ກ່ອນຊາວບ້ານເຄີຍຢູ່ເຂດພູດອຍ ເມື່ອຍ້າຍລົງມາຢູ່ເຂດທົ່ງພຽງແລ້ວ ບໍ່ມີດິນທີ່ຈະເຮັດການຜະລິດຕ່າງໆ. ພວກເຂົາເຈົ້າບໍ່ມີທາງເລືອກ ນອກຈາກໄປອອກແຮງງານຊ່ວຍຜູ້ທີ່ຢູ່ເຂດທົ່ງພຽງ. ສະນັ້ນ ອັນນີ້ເຮັດໃຫ້ເສດຖະກິດຂອງທັງສອງບ້ານບໍ່ດຸນດ່ຽງກັນ ມີຜູ້ໃດຜູ້ໜຶ່ງອາດຈະຮັ່ງມີກ່ອນຜູ້ມາຢູ່ໃໝ່.

ອັນທີສາມ ປະຈຸບັນນີ້ ຍ້ອນວ່າມີຫຼາຍຄົນຢາກຈອງດິນເພື່ອປູກກະສິກຳສຳລັບຕົນເອງ. ເຂດທີ່ວ່າແຕ່ກ້ຶເຂົາເຈົ້າໃຊ້ລວມ ແຕ່ດຽວນີ້ ຖືກຈອງເປັນດິນຂອງສ່ວນບຸກຄົນ. ອັນນີ້ມັນຈະມີຜົນກະທົບຕໍ່ຄອບຄົວທີ່ຖືກຢຶດທີ່ວ່າເຂົາເຈົ້າເຄີຍອາໄສເພື່ອເຮັດໄຮ່ ຫຼືເກັບເຄື່ອງປ່າຂອງດົງເພື່ອຂາຍ ເພື່ອກິນຢູ່ພາຍໃນຄອບຄົວ.

ອັນທີສີ່ ປະຈຸບັນນີ້ ຍ້ອນມີການປ່ຽນແປງຫຼາຍສຳລັບດິນສ່ວນລວມ, ດິນໂຕນີ້ດຽວນີ້ກາຍເປັນດິນສວນຢາງພາລາ ຫຼືວ່າດິນສຳລັບກະສິກຳຖາວອນ, ສິ່ງນີ້ບໍ່ມີໃຜເຄີຍສຶກສາທາງດ້ານຜົນກະທົບຕໍ່ສິ່ງແວດລ້ອມ ແລະມັນເປັນສິ່ງທີ່ໜ້າສຶກສາໃນອະນາຄົດ.

ມາຮອດນີ້ ສຳລັບການສະເໜີຜົນງານການຄົ້ນຄວ້າຂອງຂ້າພະເຈົ້າໃນມື້ນີ້ ຂໍຈົບໄວ້ພຽງເທົ່ານີ້. ຂໍຂອບໃຈ. (ຈົບ)

ວິຊາວ່າດ້ວຍການເຄື່ອນໄຫວຂອງພືກສາຊາດໃນເຂດປ່າເຫຼົ້າ ຂອງການເຮັດໄຮ່ຢູ່ທາງພາກເໜືອຂອງລາວ: ກໍລະນີສຶກສາຄົ້ນຄວ້າຢູ່ໃນເມືອງຫຼາ, ແຂວງອຸດົມໄຊ


Isao HIROTA
ນັກສຶກສາປະລິນຍາເອກ, ມະຫາວິທະຍາໄລກຽວໂຕ

ສະບາຍດີ ຂ້ອຍຊື່ Isao HIROTA ມາແຕ່ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ. ມື້ນີ້ ຂ້ອຍຊິອະທິບາຍວິຊາວ່າດ້ວຍການເຄື່ອນໄຫວຂອງພືກສາຊາດ ໃນເຂດປ່າເຫຼົ້າຂອງການເຮັດໄຮ່ ຢູ່ ທາງພາກເໜືອຂອງລາວ.

ການເຮັດໄຮ່ມີມາແຕ່ສະໄໝບູຮານຢູ່ທົ່ວໂລກ. ໃນປີ 1950 ກໍ່ຍັງມີ. ຢູ່ຍີ່ປຸ່ນກໍ່ມີ ຢູ່ທະວີບ ເອີລົບກໍ່ມີ (ເຢຍລະມັນ, ອັງກິດ, ສະວີເດັ່ນ ແລະປະເທດອື່ນໆ). ປະຈຸບັນນີ້ ການຖາງປ່າເຮັດໄຮ່ ຍັງ ມີຢູ່ຫຼາຍປະເທດ. ໂດຍສະເພາະ ປະເທດທີ່ຢູ່ໃນເຂດຮ້ອນ. ໃນພາກເໜືອຂອງລາວ ມີພູດອຍຫຼາຍ, ເພາະສະນັ້ນ ການເຮັດໄຮ່ກໍ່ມີມາແຕ່ສະໄໝແຕ່ກໍ່. ລະບົບຂອງການເຮັດໄຮ່ເປັນແນວນີ້ (ຮູບ-1) ປູກ ເຂົ້າ 1 ປີ ແລ້ວກໍ່ປະໄວ້ໃຫ້ເປັນປ່າເຫຼົ້າ 3 ປີຂຶ້ນໄປ ແຕ່ລະບົບການເຮັດໄຮ່ແບບພື້ນເມືອງແມ່ນປະໃຫ້ ເປັນປ່າເຫຼົ້າ 10 ປີຂຶ້ນໄປ. ໄລຍະເວລາໃນການເຮັດໄຮ່ຂອງປະຊາຊົນ ປົກກະຕິ ທ້າຍເດືອນ 2 ຫາ ກາງເດືອນ 3 ຖາງປ່າ ແລ້ວກໍ່ທ້າຍເດືອນ 3 ຫາທ້າຍເດືອນ 4 ຈູດໄຮ່ ແລະສັກເຂົ້າໃສ່ ຈາກນັ້ນໄດ້ ເສຍຫຍ້າ 3 ຫາ 4 ເທື່ອ ຈົ່ງເຖິງລະດູການເກັບກ່ຽວຄື ໃນທ້າຍເດືອນ 10 ຫາເດືອນ 11. ໃນການເຮັດ ໄຮ່ ປະຊາຊົນມັກຈະປູກພືດຫຼາຍຊະນິດຮ່ວມກັນ ໃນດິນຕອນດຽວກັນ ເຊັ່ນ ສາລີ, ໝາກໆ, ໝາກ ເຜັດ, ໝາກເຂືອ ແລະພືດຊະນິດອື່ນໆອີກ. ລະບົບການເຮັດໄຮ່ແມ່ນເຮັດແບບທຳມະຊາດ ບໍ່ໃຊ້ຝຸ່ນວິ ທະຍາສາດ, ບໍ່ໄດ້ສີດຢາຂ້າຫຍ້າ.

ປະຈຸບັນນີ້ ເປັນຫຍັງຫຼາຍຄົນເວົ້າວ່າການເຮັດໄຮ່ບໍ່ດີ ຫຼືວ່າມີບັນຫາ. ເພາະວ່າການຖາງປ່າ ເຮັດໄຮ່ໄດ້ເກີນຄວາມສາມາດຂອງດິນ ທີ່ຈະຕອບສະໜອງໃຫ້ແກ່ມະນຸດ. ສາຍເຫດທີ່ເຮັດໃຫ້ມີການ ນຳໃຊ້ດິນຫຼາຍຂຶ້ນ ກໍ່ເນື່ອງມາຈາກຫຼາຍປັດໄຈ ເຊັ່ນ ຈຳນວນພົນລະເມືອງໄດ້ເພີ່ມຂຶ້ນ, ການຕະຫຼາດ ໄດ້ມີການຂະຫຍາຍຂຶ້ນ ໂດຍສະເພາະ ຕະຫຼາດປະເທດທີ່ຢູ່ໃກ້ຄຽງ ເຊັ່ນ ປະເທດຈີນ, ໄທ ແລະ ຫວຽດນາມ. ມີສິນຄ້າຫຼາຍຊະນິດທີ່ໄດ້ນຳເຂົ້າມາຈາກບັນດາປະເທດທີ່ໄດ້ເວົ້າມານັ້ນ, ຮູບແບບການ ຈັດການກ່ຽວກັບຊັບພະຍາກອນທີ່ດິນກໍ່ມີການປ່ຽນແປງ ເພາະສະນັ້ນ ລະບົບການເຮັດໄຮ່ກໍ່ປ່ຽນໄປ ແລະສະພາບແວດລ້ອມກໍ່ປ່ຽນໄປເຊັ່ນດຽວກັນ.


ຮູບ - 1: ລະບົບການເຮັດໄຮ່ແບບໝູນວຽນ



ປະເພດປ່າຢູ່ທາງພາກເໜືອຂອງລາວເປັນຄືແນວໃດ ? ປ ະເພດປ່ານີ້ແມ່ນປ່າຊະນິດທີ່ມີລັກ ຊະນະທາງໜ້າຂອງໃບຈະເຫຼື້ອມ ແລະມີການສະທ້ອນແສງ ເຊິ່ງເປັນຊະນິດທີ່ມີໃບກວ້າງຊຽວ ຕະຫຼອດປີ ປະເພດປ່າຊະນິດນີ້ ຢູ່ຍີ່ປຸ່ນກໍ່ມີ ຢູ່ຈີນ, ໄທ, ພະມ້າ ກວມໄປເຖິງສາຍພູຮິມາລາຢາ (Himalaya) (ຮູບ-2), ຢູ່ພາກເໜືອຂອງລາວກໍ່ມີຊະນິດນີ້ ມີຊື່ວ່າ Fagaceae ແມ່ນຊະນິດໄມ້ກໍ່ ຈະມີ ຊະນິດ *Lithocarpus* spp., *Quercus* spp., *Castanopsis* spp. ມີຫຼາຍຊະນິດ. ຕະກຸນ Lauraceae ກໍ່ ມີ *Litsea* spp., *Persea* spp., *Cinnamomum* spp. ອັນນີ້ແມ່ນຕະກຸນຂອງໃບໄມ້ຫອມ (ໄມ້ຈວງ). ຢູ່ ຍີ່ປຸ່ນ ຊະນິດໄມ້ກໍ່ ກໍ່ມີຫຼາຍຊະນິດ. ໄມ້ກໍ່ເປັນການໝາຍຂອງມະຫາວິທະຍາໄລກຽວໂຕອີກດ້ວຍ.

ປ່າຢູ່ອຸດົມໄຊ ຈະປະກອບມີປ່າຊຽວຕະຫຼອດປີ ແລະປ່າປະເພດຜັດໃບ. ປ່າຊຽວຕະຫຼອດປີ ຢູ່ອຸດົມໄຊມີຊະນິດ *Schima wallichii* (Theaceae) ແມ່ນຮູບເບື້ອງຊ້າຍເທິງສຸດ ພາສາລາວເອີ້ນວ່າ ໄມ້ຜາວ ແລະຮູບເບື້ອງຂວາເທິງສຸດແມ່ນກົກພີທອງ ຊະນິດໄມ້ກໍ່ ກໍ່ມີຫຼາຍຊະນິດ (ຮູບ-3).

ຮູບ - 2: ການກະຈາຍພັນຂອງໄມ້ໃບກວ້າງຂຽວຕະຫຼອດປີໃນພາກເໜືອຂອງລາວ




Fagaceae (ໄມ້ກໍ່)

***Lithocarpus* spp., *Quercus* spp., *Castanopsis* spp.**

Lauraceae (ໄມ້ຈວງ)

***Litsea* spp., *Persea* spp., *Cinnamomum* spp.**

ຮູບ - 3: ປະເພດປ່າຂຽວຕະຫຼອດປີຢູ່ແຂວງອຸດົມໄຊ.




Schima wallichii
(Theaceae)



Phoebe lanceolata
(Lauraceae)



Engelhardtia spicata
(Juglandaceae)




Fagaceae spp.





ປ່າເຫຼົ້າຢູ່ທາງພາກເໜືອຂອງລາວເປັນຄືແນວໃດ ? ຂ້ອຍໄດ້ເກັບກຳຂໍ້ມູນຢູ່ປ່າເຫຼົ້າທີ່ມີອາຍຸຍາວ ແລະປ່າເຫຼົ້າທີ່ມີອາຍຸສັ້ນ. ລະບົບການເຮັດໄຮ່ແມ່ນປູກເຂົ້າ 1 ປີ ແລ້ວປະໃຫ້ເປັນປ່າເຫຼົ້າ 3 ປີ. ປ່າເຫຼົ້າມີສອງບົດບາດຄື: ປ່າເຫຼົ້າເປັນບ່ອນເຕົ້າໂຮມບັນດາເຄື່ອງປ່າຂອງດົງ ແລະເປັນບ່ອນທີ່ເຮັດໃຫ້ດິນກັບຄືນສູ່ສະພາບຄວາມອຸດົມສົມບູນອີກ. ບ່ອນເກັບກຳຂໍ້ມູນແມ່ນ ບ້ານຫ້ວຍແພ ເມືອງຫຼາ ແຂວງອຸດົມໄຊ. ປະຊາຊົນທີ່ດຳລົງຊີວິດຢູ່ບ້ານດັ່ງກ່າວແມ່ນຊົນເຜົ່າຂະມຸ, ມີພົນລະເມືອງ 339 ຄົນ ມີເນື້ອທີ່ດິນທັງໝົດ 2,025 ເຮັກຕາ, ມີເນື້ອທີ່ໄຮ່ທັງໝົດ 1,741 ເຮັກຕາ ເທົ່າກັບ 86% ຂອງ ເນື້ອທີ່ທັງໝົດ ແລະທຸກໆຄອບຄົວເຮັດໄຮ່. ຄວາມສູງຈາກລະດັບໜ້ານ້ຳທະເລແມ່ນ 500 ຫາ 700 ແມັດ, ປະລິມານນ້ຳຝົນສະເລ່ຍ 1,500 ມິລິແມັດຕໍ່ປີ, ອຸນຫະພູມສະເລ່ຍ 27 ອົງສາ.

ວິທີການສຶກສາທີ່ໜຶ່ງ: ແມ່ນເລືອກເອົາສອງສະຖານທີ່ທີ່ແຕກຕ່າງກັນຄື: ປ່າເຫຼົ້າແກ່ (ປ່າເຫຼົ້າທີ່ມີອາຍຸຫຼາຍປີ) ແລະອີກບ່ອນໜຶ່ງແມ່ນ ປ່າເຫຼົ້າອ່ອນ (ປ່າເຫຼົ້າທີ່ມີອາຍຸໜ້ອຍປີ). ແຕ່ກີ້ ຢູ່ບ້ານຫ້ວຍແພ ແມ່ນມີແຕ່ປ່າເຫຼົ້າໄລຍະຍາວ ເຊິ່ງມີຮອບວຽນສະເລ່ຍສິບກວ່າປີ. ແຕ່ວ່າຊາວປີກ່ອນ ລັດຖະບານກຳນົດປ່າອອກເປັນຫຼາຍປະເພດເຊັ່ນ ປ່າສະຫງວນ, ປ່າຊົມໃຊ້ ເປັນຕົ້ນ. ປະຈຸບັນນີ້ ຢູ່ບ້ານຫ້ວຍແພ ມີສອງປະເພດປ່າຄື: ປ່າສະຫງວນແລະປ່າເຫຼົ້າ. ປ່າເຫຼົ້າໃນປະຈຸບັນ ມີຮອບວຽນປະມານ 5 ປີ. ແຕ່ວ່າແຕ່ກີ້ແຕ່ກ່ອນ ປະຊາຊົນເຄີຍນຳໃຊ້ທີ່ດິນ ເຊິ່ງກາຍມາເປັນປ່າສະຫງວນໃນປະຈຸບັນ ເພື່ອເຮັດໄຮ່, ສະແດງວ່າປ່າສະຫງວນໃນປະຈຸບັນ ກໍ່ເປັນປ່າເຫຼົ້າທີ່ມີອາຍຸຍາວໃນສະໄໝກ່ອນ.




ສະຖານທີ່ເຮັດການສຶກສາ
ບ້ານຫ້ວຍແພ ເມືອງຫຼາ ແຂວງອຸດົມໄຊ




ທ່ານ Isao HIROTA

ຮູບພີກນີ້ (ເສັ້ນສະແດງ-1) ສະແດງໃຫ້ເຫັນນ້ຳໜັກຂອງຕົ້ນໄມ້, ເບື້ອງຂວາມືແມ່ນນ້ຳໜັກຂອງໄມ້ຢູ່ປ່າເຫຼົ້າໄລຍະສັ້ນ, ສີແດງແມ່ນຊະນິດໄມ້ປ່ອງ, ສີນ້ຳໝາກກ້ຽງແມ່ນຊະນິດໄມ້ບຸກເບີກ ແລະສີຟ້າແມ່ນໄມ້ຈິງ. ຢູ່ໃນປ່າເຫຼົ້າໄລຍະສັ້ນ ແມ່ນມີໄມ້ປ່ອງຫຼາຍ ແຕ່ກົງກັນຂ້າມ ຢູ່ປ່າເຫຼົ້າໄລຍະຍາວ ແມ່ນມີໄມ້ຈິງຫຼາຍ. ຢູ່ບ້ານຫ້ວຍແພ ມີໄມ້ປ່ອງ 4 ຊະນິດຄື: ໜໍ່ຂົມ, ໄມ້ຊອດ, ໄມ້ບົງ ແລະໄມ້ເຮ້ຍ. (ຮູບ-4) ສ່ວນຊະນິດໄມ້ບຸກເບີກກໍ່ມີຫຼາຍຊະນິດ (ຮູບ-5) ສ່ວນໃຫຍ່ແມ່ນຕະກຸນມັນຕົ້ນ.

ເສັ້ນສະແດງ - 1: ນ້ຳໜັກຂອງໄມ້ປ່ອງແລະຊະນິດພືດອື່ນໆ



ຮູບ - 4: ຊະນິດໄມ້ປ່ອງທີ່ເກີດຂຶ້ນໃນເຂດສຶກສາ



ໜໍ່ຂີ້ມ



ໄມ້ບ໊ງ



ไม้ຊອດ



ไม้ເຮ້ຍ

ຮູບ - 5: ຊະນິດໄມ້ບຸກເບີກທີ່ເກີດຂຶ້ນໃນເຂດສຶກສາ



Macaranga kurzii
(Euphorbiaceae)



Trema orientalis
(Ullmaceae)



Macaranga denticulata
(Euphorbiaceae)



Rhus chinensis
(Anacardiaceae)




Croton kongensis
(Euphorbiaceae)



Mallotus paniculatus
(Euphorbiaceae)


ເສັ້ນສະແດງ - 2: ຄ່າດັດຊະນີຄວາມຫຼາກຫຼາຍໃນປ່າເຫຼົ່າໄລຍະຍາວແລະໄລຍະສັ້ນ



ອັນນີ້ (ເສັ້ນສະແດງ-2) ແມ່ນຫຼາບຟີກຂອງດັດຊະນີຄວາມຫຼາກຫຼາຍໃນປ່າເຫຼົ່າໄລຍະຍາວ ແລະປ່າເຫຼົ່າໄລຍະສັ້ນ. ປ່າເຫຼົ່າໄລຍະຍາວມີຄ່າດັດຊະນີສູງກວ່າປ່າເຫຼົ່າໄລຍະສັ້ນ. ຜ່ານການສຶກສາ

ຂອງຂ້ອຍ ໄດ້ເຫັນວ່າ ປ່າເຫຼົ່າໄລຍະສັ້ນ ຍ້ອນຮອບວຽນສັ້ນລົງແລ້ວ ເຮັດໃຫ້ໄມ້ປ່ອງແລະໄມ້ບຸກເບີກຫຼາຍຂຶ້ນ ແຕ່ຄວາມຫຼາກຫຼາຍນ້ອຍລົງ. ຍັງມີຄຳຖາມອີກ ໄມ້ປ່ອງກັບໄມ້ບຸກເບີກໄດ້ເກີດຂຶ້ນແນວໃດ ? ລະບົບແນວໃດ ? ຂ້ອຍແຍກຊະນິດໄມ້ໄດ້ເປັນສອງຊະນິດ ຄື ຊະນິດທີໜຶ່ງ ອັນເກີດຂຶ້ນໃໝ່ດ້ວຍການແຕກແກ່ນ, ຊະນິດທີສອງ ອັນເກີດຂຶ້ນໃໝ່ດ້ວຍການແຕກໜໍ່. ຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່ເປັນຄືແນວນີ້ (ຮູບ-6). ມີຕົ້ນໄມ້ຖືກຕັດລົງ, ຈາກນັ້ນ ໄມ້ທີ່ຖືກຕັດນັ້ນ ມັນຈະແຕກໜໍ່ອອກມາ ແລະຈະເລີນເຕີບໂຕຂຶ້ນເປັນຕົ້ນໃຫຍ່, ຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກແກ່ນນັ້ນ ຖືກຕັດລົງແລ້ວ ຕົ້ນຈະຕາຍເລີຍ ບໍ່ມີການປົ່ງໜໍ່ອອກອີກ, ຂະຫຍາຍຂຶ້ນໄດ້ຈາກເມັດເທົ່ານັ້ນ.

ຮູບ - 6: ຊະນິດພືດທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່ແລະດ້ວຍການແຕກແກ່ນ



ວິທີການສຶກສາທີສອງ: ເກັບກຳຂໍ້ມູນຢູ່ໄຮ່ລຶກ [1] , ໄຮ່ລຶກທີໜຶ່ງແມ່ນໄຮ່ລຶກທີ່ຖາງປ່າເຫຼົ່າໄລຍະຍາວ ແລະໄຮ່ລຶກທີສອງແມ່ນໄຮ່ລຶກທີ່ຖາງປ່າເຫຼົ່າໄລຍະສັ້ນ. ຂ້ອຍໄດ້ນັບຈຳນວນພືດທີ່ເກີດຂຶ້ນ

---

[1] ໄຮ່ລຶກ ເປັນພາສາທ້ອງຖິ່ນ ໝາຍເຖິງ ໄຮ່ທີ່ເຮັດຊ້ຳຄືນຫຼາຍເທື່ອຄື ເຮັດໄຮ່ 1 ຄັ້ງ ແລ້ວປະໃຫ້ເປັນປ່າເຫຼົ່າອາດຈະ 2 – 3 ປີ ຫຼື ຫຼາຍກວ່ານັ້ນ ແລ້ວກັບຄືນມາເຮັດໃນພື້ນທີ່ບ່ອນເກົ່າອີກຄັ້ງ.

ทุกชะนิดอยู่ในสองสะถานที่สึกสาดั่งก่าว แล้วเอิามาสะเล่ยต่ำเนื้อที่ เพื่อจะสึกสาว่าในพื้นที่ไตใดจะมีจำนวนชะนิดพืดเกิดขึ้นหลายกว่ากัน. เบิ่งตามตาตะลาๆข้างล่าง (ตาตะลาๆ-1) จะมีไร่ป่าเหี๊าไลยะสั้น และไร่ป่าเหี๊าไลยะยาว, จำนวนชะนิดพืดที่เกิดขึ้นทั้งหมดแม่นไร่ป่าเหี๊าไลยะยาวหลายกว่าไร่ป่าเหี๊าไลยะสั้น. ชะนิดไม้ก่ำ, ชะนิดไม้จองจะเกิดขึ้นกับไร่ป่าเหี๊าไลยะยาวหลายกว่า. ชะนิดไม้บุกเบิกที่เกิดขึ้นใหม่ด้วยการแตกแก่น อยู่ในไร่ป่าเหี๊าไลยะยาว ก่ำจะมีหลายกว่าไร่ป่าเหี๊าไลยะสั้น. ชะนิดที่เกิดขึ้นใหม่ด้วยการแตกหน่อละหว่างสองสะถานที่ไร่ดั่งก่าวแม่นเท่ากัน, ชะนิดหย้าแม่นไร่ป่าเหี๊าไลยะสั้นมีหลายกว่าไร่ป่าเหี๊าไลยะยาว.


ตาตะลาๆ - 1: ค่าสะเล่ยจำนวนของบันดาพืดที่เกิดขึ้นในไร่ป่าเหี๊าไลยะสั้น และไร่ป่าเหี๊าไลยะยาว

	ไร่ป่าเหี๊า ไลยะสั้น		ไร่ป่าเหี๊า ไลยะยาว
จำนวนชะนิดพืดที่เกิดขึ้นทั้งหมด	**26.4**	**<**	**41**
การกวมเอิาของ			**(%)**
·ชะนิดไม้ใบกว้างยวดยืนตะหลอดปี (ไม้ก่ำ, ไม้จอง และอื่นๆ)	**4.8**	**<**	**9.6**
·ชะนิดไม้บุกเบิกที่เกิดขึ้นใหม่ด้วยการแตกแก่น	**0.2**	**<**	**1.2**
·ชะนิดไม้บุกเบิกที่เกิดขึ้นใหม่ด้วยการแตกหน่อ	**5.4**	**≒**	**5.8**
·ชะนิดหย้า	**33**	**>**	**9.8**

ต่ำไป เฮาม่าเบิ่งรูบนี้ (รูบ-7). ในป่าเหี๊าไลยะยาว ชะนิดที่เกิดขึ้นใหม่ด้วยการแตกหน่อ และชะนิดที่เกิดขึ้นใหม่ด้วยการแตกแก่น ทั้งสองชะหยายตัวได้ เพาะมีดอกมีลูกและมีหมาก. ถ้ารอบวงสั้นลิ่ง ชะนิดที่เกิดขึ้นใหม่ด้วยการแตกหน่อยังสามาดชะหยายตัว

ແລະມີດອກມີແກ່ນໄດ້, ສ່ວນຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກແກ່ນນັ້ນ ສາມາດຂະຫຍາຍຕົວໄດ້ ແຕ່ບໍ່ສາມາດມີດອກຫຼືແກ່ນໄດ້ ເນື່ອງຈາກວ່າກ່ອນທີ່ຈະອອກດອກ ມັນຖືກຕັດລົງແລ້ວ.

ຮູບ - 7: ຊະນິດພືດທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່ແລະແກ່ນໃນປ່າເຫຼົ່າໄລຍະຍາວ ແລະປ່າເຫຼົ່າໄລຍະສັ້ນ



ຕາຕະລາງ - 2: ຊະນິດພືດທີ່ເກີດຂຶ້ນໃນປ່າປະເພດຕ່າງໆ


ຊະນິດພືດ	ທີ່ເກີດຂຶ້ນດ້ວຍ	ປ່າດິບ	ປ່າເຫຼົ່າ ໄລຍະຍາວ	ປ່າເຫຼົ່າ ໄລຍະສັ້ນ	ປ່າເຫຼົ່າ ໄລຍະສັ້ນຫຼາຍ
ໄມ້ໃບກວ້າງຊຽວ ຕະຫຼອດປີ (ໄມ້ກໍ່ ໄມ້ຈວ໋ງ)	ການແຕກແກ່ນ	+	-	-	-
	ການແຕກໜໍ່	+	+	-	-
ໄມ້ຊະນິດ ບຸກເບີກ	ການແຕກແກ່ນ	-	+	+	-
	ການແຕກໜໍ່	-	+	+	+
ຊະນິດຫຍ້າ					+

ห้ามจำหน่าย

ຢູ່ໃນເຂດປ່າດົງ ຈະມີຕະກຸນໄມ້ກໍ່ຫຼືໄມ້ຈວງ, ມີທັງຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກແກ່ນ ແລະຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່. ແຕ່ໄມ້ຊະນິດບຸກເບີກແມ່ນບໍ່ມີ. ໃນພື້ນທີ່ປ່າເຫຼົ່າ ໄລຍະຍາວ ໄມ້ໃບກວ້າງຊຽວຕະຫຼອດປີ ທີ່ເກີດຂຶ້ນໃໝ່ດ້ວຍການແຕກແກ່ນແມ່ນບໍ່ມີ ເພາະຖືກຕັດ ແລ້ວ ກໍ່ຕາຍເລີຍ. ມີແຕ່ຊະນິດທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່. ແຕ່ໄມ້ຊະນິດບຸກເບີກມີທັງສອງ ຢ່າງ. ໃນປ່າເຫຼົ່າສັ້ນ ໄມ້ໃບກວ້າງຊຽວຕະຫຼອດປີບໍ່ມີທັງສອງຢ່າງ, ແຕ່ວ່າໄມ້ຊະນິດບຸກເບີກມີທັງ ສອງຢ່າງ. ຮອບວຽນສັ້ນລົງອີກແລ້ວ ມີແຕ່ໄມ້ຊະນິດບຸກເບີກທີ່ເກີດຂຶ້ນໃໝ່ດ້ວຍການແຕກໜໍ່ ແລະມີ ຫຍ້າ (ຕາຕະລາງ-2).

ຮອບວຽນສັ້ນລົງແລ້ວ ຊະນິດຂອງຕົ້ນໄມ້ກໍ່ໜ້ອຍລົງ. ສະແດງວ່າ ໜ້ອຍຊະນິດກິນເນື້ອທີ່ ຫຼາຍ. ສະພາບເຊັ່ນນີ້ໝາຍຄວາມວ່າແນວໃດ ? ຫຼາບຟິກນີ້ (ເສັ້ນສະແດງ-3) ສະແດງໃຫ້ເຫັນເຖິງ ປະລິມານຂອງຈຳນວນຊະນິດພືດຕໍ່ກັບໄລຍະເວລາຂອງປ່າເຫຼົ່າ. ເສັ້ນສີຟ້າແມ່ນປ່າປົກກະຕິ. ທຳອິດ ເປັນຫຍ້າໃນຊະນິດບຸກເບີກ ແລ້ວກາຍມາເປັນປ່າສົມບູນ ຊະນິດພືດກໍ່ປ່ຽນໄປ. ເສັ້ນສີນ້ຳໝາກກ້ຽງ ໝາຍເຖິງປ່າເຫຼົ່າໄລຍະຍາວ. ຖ້າວ່າຢຸດຕິການຖາງປ່າເຮັດໄຮ່ ປ່າກໍ່ຈະຟື້ນຟູຄືກັນ. ແຕ່ວ່າຄວາມໄວ ຂອງການຟື້ນຟູນັ້ນຊ້າກວ່າປ່າປົກກະຕິ.

ເສັ້ນສະແດງ - 3: ປະລິມານຂອງຈຳນວນຊະນິດພືດຕໍ່ກັບໄລຍະເວລາຂອງປ່າເຫຼົ່າ



ສ່ວນປ່າເຫຼົ່າໄລຍະສັ້ນ ຖ້າວ່າຢຸດຕິການຖາງປ່າເຮັດໄຮ່ ຊະນິດກໍ່ໜ້ອຍລົງ ຄວາມຫຼາກຫຼາຍກໍ່ໜ້ອຍລົງແລ້ວ. ການຟື້ນຟູຂອງປ່າກໍ່ຊ້າລົງ, ຕ້ອງໃຊ້ເວລາເປັນຮ້ອຍໆປີ ຈຶ່ງຈະກັບຄືນສູ່ສະພາບປົກກະຕິໄດ້. ຍົກຕົວຢ່າງ ບ່ອນທີ່ເຮັດໄຮ່ຫຼາຍປີ ມີແຕ່ຫຍ້າແລະໄມ້ປ່ອງເກີດຂຶ້ນເທົ່ານັ້ນ (ຮູບ-8).

ຮູບ - 8: ຫຍ້າແລະໄມ້ປ່ອງທີ່ເກີດຂຶ້ນໃນບ່ອນທີ່ເຮັດໄຮ່ຕິດຕໍ່ກັນຫຼາຍປີ



ທົ່ງຫຍ້າ




ປ່າໄມ້ປ່ອງ

ມີຄຳຖາມອີກ. ພາຍຫຼັງຢຸດຕິການຖາງປ່າເຮັດໄຮ່ແລ້ວ ທຸກໆປ່າເຫຼົ່າຈະຟື້ນຟູຂຶ້ນໂດຍມີຄວາມໄວເທົ່າກັນບໍ່ ? **ວິທີການສຶກສາທີສາມ:** ໃນບ່ອນໜຶ່ງ ຂ້ອຍຈັດວາງແປງເກັບກຳຂໍ້ມູນ ແຕ່ລະແປງມີ ຂະໜາດ 5 x 5 ແມັດ, ແຖວຕັ້ງມີ 8 ແປງ ແຖວນອນ 4 ແປງ. ຂ້ອຍໄດ້ຈົດຊະນິດພືດໄວ້ ເຊັ່ນ ຕົ້ນໄມ້, ຫຍ້າ, ເຄືອ ເປັນຕົ້ນ, ແລະສະເລ່ຍຈຳນວນຊະນິດຕໍ່ກັບເນື້ອທີ່. ຢູ່ພື້ນທີ່ສຶກສາຂ້ອຍ ແຖວຕັ້ງ ແມ່ນ 100 ແມັດ ແຖວຂວາງ ແມ່ນ 50 ແມັດ. ຢູ່ເທິງ ມີປ່າໃຫຍ່ ສ່ວນຢູ່ລຸ່ມ ມີສາຍນ້ຳ. ຈາກແປງລຸ່ມສຸດ ລົງມາຮອດສາຍນ້ຳຫ່າງກັນ 150 ແມັດ.

ຕາມຜົນການສຳຫຼວດຄັ້ງນີ້ (ຮູບ-9) ພົບວ່າ ຊະນິດໄມ້ໃບກວ້າງຂຽວຕະຫຼອດປີທີ່ເກີດຈາກໜໍ່ມີຫຼາຍຢູ່ທາງເທິງ. ຊະນິດໄມ້ບຸກເບີກທີ່ເກີດຈາກໜໍ່ມີຫຼາຍຢູ່ທາງກາງ. ຊະນິດໄມ້ບຸກເບີກທີ່ເກີດຈາກແກ່ນມີໜ້ອຍ ແຕ່ມີຢູ່ທຸກໆບ່ອນ. ຊະນິດຫຍ້າມີຫຼາຍຢູ່ທາງລຸ່ມ. ໃນການກະຈາຍພັນ ມັນຈະອາໄສການເຄື່ອນໄຫວຕ່າງໆຂອງສັດ ແລະສະພາບແວດລ້ອມຄື: ລົມພັດເອົາແກ່ນປົວໄປ ແລ້ວຕົກໃສ່ໃນພື້ນທີ່ໃດໜຶ່ງ ແລະເກີດຂຶ້ນມາ.


ຮູບ - 9: ການກະແຈກກະຈາຍຂອງພືດແຕ່ລະຊະນິດໃນພື້ນທີ່ສຶກສາ



ສະຫຼຸບແລ້ວ ຊະນິດໄມ້ບຸກເບີກທີ່ເກີດຈາກແກ່ນກັບຊະນິດຫຍ້າຈະຟື້ນຟູຂຶ້ນໄວ ແລະຊະ ຫຍາຍຂຶ້ນໄວ. ເພາະວ່າແກ່ນພວກນີ້ ກະຈາຍໄປໄກກວ່າຊະນິດຕົ້ນໄມ້ທີ່ມີແກ່ນໜັກ ທີ່ຈະກະຈາຍ ໄປບ່ໄກ ແລະມີຈຳນວນໜ້ອຍ (ຮູບ-10). ປ່າເຫຼົ່າທີ່ຕິດກັບປ່າເຫຼົ່າໄລຍະຍາວ ຈະຟື້ນຟູຂຶ້ນໄວ ເພາະ

ວ່າມີບ່ອນຜະລິດແກ່ນ. ສ່ວນຊະນິດໄມ້ໃບກວ້າງຊຽວຕະຫຼອດປີທີ່ເກີດຈາກໜໍ່ ກັບຊະນິດໄມ້ບຸກເບີກທີ່ເກີດຈາກໜໍ່ ຈະຟື້ນຟູຂຶ້ນຊ້າ.

ຮູບ - 10: ການປຽບທຽບການກະຈາຍພັນຂອງຫຍ້າກັບຕົ້ນໄມ້ທີ່ມີແກ່ນໜັກ.



ມາຮອດນີ້ ການສະເໜີຜົນການຄົ້ນຄວ້າຂອງຂ້ອຍກຳລັງຈະຈົບລົງ ຖ້າຫາກວ່າທ່ານຜູ້ໃດຍັງມີຈຸດທີ່ຍັງບໍ່ທັນເຂົ້າໃຈ ຫຼືວ່າມີຄຳເຫັນຈະປະກອບໃສ່ບົດຂອງຂ້ອຍ ກໍ່ຂໍເຊີນເລີຍ. ຂໍຂອບໃຈ. (ຈົບ)


ศูนร่วมมือลาว~ญี่ปุ่น ラオス日本センター


ASAFAS · 21st Century COE Program · Integrated Area Studies · CSEAS


ฌม
FOF